International Labour Organization

ILO brief

# ILO Brief

ເມສາ 2022

# ທະເລທີ່ມີຄື້ນແຮງ: ຜົນກະທົບຂອງພະຍາດໂຄວິດ 19 ຕໍ່ແຮງງານປະມົງ ຢູ່ ອາຊີຕາເວັນອອກສຽງໃຕ້

## ປະເດັນສຳຄັນ

- ປີ 2020, ການຄ້າໃນການປະມົງໄດ້ຫຼຸດລົງໃນທົ່ວໂລກ. ການເກັບກຳຂໍ້ມູນຜ່ານທາງດາວທຽມໄດ້ເປີດເຜີຍໃຫ້ເຫັນວ່າໃນທົ່ວໂລກເຮືອ ປະມົງຫຼຸດລົງ 9% (63,000 ລຳ) ໃນປີ 2020 ໃນຈຳນວນເຮືອປະມົງທາງການຄ້າທຽບໃສ່ປີ 2019. ເຮືອປະມົງເຫຼົ່ານີ້ລວມກັນທັງໝົດຫາປາເປັນເວລາປະມານ 50 ລ້ານຊົ່ວໂມງໃນປີ 2020, ຫຼຸດລົງ 5% ທຽບໃສ່ປີ 2019.
- ທະວີບອາຊີ ແລະ ປາຊີຟິກ ຂະແໜງການປະມົງໄດ້ປະເຊີນກັບການຫຼຸດການຈ້າງງານ ແລະ ຊົ່ວໂມງເຮັດວຽກ. ຂະແໜງການປະມົງທີ່ມີການຫຼຸດການຈ້າງງານ ແລະ ຊົ່ວໂມງເຮັດວຽກຂອງແຮງງານຫລາຍກວ່າໝູ່ແມ່ນຢູ່ປະເທດໄທ -15.4 ເປີເຊັນ ແລະ ຢູ່ປະເທດຟີລິບປິນ -9.1 ເປີເຊັນ.
- ການຄ້າອາຫານທະເລທົ່ວໂລກໄດ້ຫຼຸດລົງໃນປີ 2020 ໂດຍປະລິມານການສົ່ງອອກອາຫານທະເລຈາກພາກພື້ນມີການຫຼຸດລົງໂດຍລວມ. ໂດຍການການຫຼຸດລົງເດືອນຕໍ່ເດືອນໃນປີ 2019, ເດືອນທີ່ມີການຫຼຸດລົງຫລາຍທີ່ສຸດແມ່ນເດືອນມີນາ ແລະ ເດືອນເມສາ ປີ 2020 ໃນໄລຍະທຳອິດຂອງໂລກລະບາດ.
- ການຈ້າງງານ, ຊົ່ວໂມງເຮັດວຽກ ແລະ ການຄ້າອາຫານທະເລໃນຂະແໜງການປະມົງຫຼຸດລົງ ປະກົດວ່າບໍ່ແມ່ນເນື່ອງມາຈາກມາດຕະການທາງສາທາລະນະສຸກຕໍ່ກັບໂລກລະບາດ ເຊັ່ນ: ການປິດທ່າເຮືອຊົ່ວຄາວ. ກິດຈະກຳໃນການປະມົງສ່ວນໃຫຍ່ໄດ້ຖືກອະນຸຍາດໃຫ້ສືບຕໍ່ດຳເນີນກິດຈະກຳ, ແລະ ໂດຍທົ່ວໄປແລ້ວຊາວປະມົງໄດ້ຮັບການຍົກເວັ້ນຈາກມາດຕະການກັກກັນທີ່ເຂັ້ມງວດແຕ່ຕ້ອງໄດ້ກວດກັ່ນຕອງກ່ອນແລະ ຫຼັງຈາກການຫາປາ.
- ຄວາມຕ້ອງການຜະລິດຕະພັນອາຫານທະເລຫຼຸດລົງ - ແທນທີ່ຈະເປັນບັນຫາດ້ານການສະໜອງ - ເບິ່ງຄືວ່າເປັນສາເຫດຕົ້ນຕໍຂອງການຫຼຸດລົງຂອງຜະລິດຕະພັນການປະມົງ ແລະ ການຜະລິດໃນຂະແໜງການປະມົງ. ໃນປີ 2020, ການນຳເຂົ້າອາຫານທະເລລວມຂອງສະຫະລັດອາເມລິກາ ແລະ ສະຫະພາບເອີຣົບ (ອີຢູ) ຈາກ 5 ປະເທດໃນອາຊີ ໄດ້ຫຼຸດລົງ 14,4 ເປີເຊັນ
- ຄວາມໜາແໜ້ນຂອງສະຫະພັນແຮງງານຊາວປະມົງທີ່ຫາປາເປັນການຄ້າໃນພາກພື້ນອາຊີ ແມ່ນຕ່ຳຫຼາຍ, ເຊິ່ງເຮັດໃຫ້ຂາດສິດທິແຮງງານ ແລະ ການປົກປ້ອງ. ແຮງງານເຄື່ອນຍ້າຍຊາວປະມົງປະເຊີນກັບຂໍ້ຈຳກັດຕື່ມອີກຕໍ່ກັບຄວາມສາມາດຂອງເຂົາເຈົ້າໃນການເຂົ້າຮ່ວມອົງການຈັດຕັ້ງຂອງຊາວຜູ້ອອກແຮງງານ, ລວມທັງຂໍ້ຈຳກັດໃນຂໍ້ຫ້າມທາງກົດໝາຍ ຕໍ່ກັບພື້ນທີ່ພູມສັນຖານທີ່ເດີນທາງໄປເຖິງ ແລະ ຄວາມສາມາດຂອງສະຫະພັນ, ການຕໍ່ຕ້ານແຮງງານເຄື່ອນຍ້າຍ, ການສະກັດກັ້ນຈາກຜູ້ໃຊ້ແຮງງານ ແລະ ການຂາດສະຖານະພາບທາງກົດໝາຍ.
- ລາຍໄດ້ຫຼຸດລົງ ແລະ ການສູນເສຍວຽກເຮັດງານທຳທີ່ເກີດຈາກການຫຼຸດລົງຂອງກິດຈະກຳການປະມົງ ແມ່ນເປັນບັນຫາອັນຮີບດ່ວນອັນໜຶ່ງຂອງຊາວປະມົງໃນປີ 2020. ອຸດສາຫະກຳການປະ ມົງແມ່ນເອື່ອຍອີງໃສ່ແຮງງານເຄື່ອນຍ້າຍເປັນຫລັກ, ເຖິງແມ່ນວ່າຕະຫຼາດແຮງງານຈະມີຄວາມເຄັ່ງຕຶງຂຶ້ນກໍຕາມ. ນີ້ອາດຈະເຮັດໃຫ້ເປັນການຜັກດັນຕໍ່ກັບການຈ່າຍຄ່າແຮງງານ, ແຕ່ສັງເກດເຫັນໄດ້ວ່າບໍ່ມີການຂຶ້ນຄ່າແຮງງານໃນວົງກວ້າງ. ການປັບປຸງການຈ່າຍຄ່າແຮງງານເບິ່ງຄືວ່າໄດ້ຮັບການຊົດເຊີຍຈາກການຫຼຸດລົງຂອງກິດຈະກຳການປະມົງ, ຫຼືກ່ຽວຂ້ອງກັບການເພີ່ມຊົ່ວໂມງເຮັດວຽກຂອງຊາວປະມົງໃນເຮືອທີ່ບໍ່ມີລູກເຮືອພຽງພໍ.
- ຄ່າແຮງງານ ແລະ ລາຍໄດ້ຂອງແຮງງານເຄື່ອນຍ້າຍຊາວປະມົງຫຼຸດລົງໄດ້ມີຜົນກະທົບອັນດັບສອງຕໍ່ຄອບຄົວຂອງພວກເຂົາຢູ່ປະເທດຕົ້ນທາງ, ເຊິ່ງສະທ້ອນໃຫ້ເຫັນໃນການໂອນເງິນກັບບ້ານຫຼຸດລົງ. ການປິດຊາຍແດນ ແລະການຈຳກັດການເດີນທາງຍັງເຮັດໃຫ້ເກີດມີກໍລະນີ

## ປະເດັນສຳຄັນ

ການລັກລອບຄ່າຈ້າງ ຍ້ອນວ່ານາຍຈ້າງສວຍໂອກາດຫາປະໂຫຍດຈາກສະຖານະການທີ່ຫຍຸ້ງ ຍາກຂອງແຮງງານເຄື່ອນຍ້າຍ. ການສຳພາດໄດ້ທົບທວນເຖິງແຮງງານປະສົບກັບການໄດ້ຮັບຄ່າຈ້າງຫລ້າຊ້າ, ໄດ້ຮັບຄ່າຈ້າງຫຼຸດລົງ, ຫຼື ບໍ່ໄດ້ຮັບຄ່າຈ້າງ ເຊັ່ນດຽວກັນກັບການຢຸດເຊົາການຈ້າງງານຢ່າງກະທັນຫັນ. ສິ່ງເຫລົ່ານີ້ໄດ້ສົ່ງຜົນກະທົບຕໍ່ແຮງງານເຄື່ອນຍ້າຍທີ່ກັບຄືນປະເທດ ແລະ ຜູ້ທີ່ຍັງຢູ່ປະເທດປາຍທາງ. ແຮງງານເຄື່ອນຍ້າຍທີ່ກັບຄືນປະເທດຢ່າງຮີບດ່ວນບໍ່ໄດ້ຮັບຄ່າຈ້າງເຕັມຈຳນວນ ແລະ ບໍ່ມີວິທີທີ່ຈະທວງເອົາເງິນເດືອນຂອງເຂົາເຈົ້າທີ່ສູນເສຍໄປຄືນ. ແຮງງານເຄື່ອນຍ້າຍທີ່ພັກເຊົາຢູ່ປະເທດປາຍທາງຖືກຕັດຄ່າຈ້າງໂດຍບໍ່ຮູ້ເຫດຜົນ, ຫຼືຖືກກັກໂຕໄວ້ຍ້ອນນາຍຈ້າງເກັບເອກະສານຂອງເຂົາເຈົ້າໄວ້.

- ເຊື້ອໄວຣັສ ໂຄວິດ 19 ໄດ້ເພີ່ມທະວີຄວາມຄວາມບໍ່ແນ່ນອນຂອງອຸດສາຫະກຳການປະມົງ ໃນບ່ອນທີ່ມີຄົນຢູ່ໃກ້ກັນໃນເຮືອ, ການຂາດການສະໜອງປົກກະຕິ, ລວມທັງອຸປະກອນປ້ອງກັນສ່ວນບຸກຄົນ (PPE); ແລະ ການເຂົ້າເຖິງການດູແລທາງການແພດເປັນໄລຍະໆ ເຮັດໃຫ້ຊາວປະມົງມີຄວາມສ່ຽງເພີ່ມຂຶ້ນ.

- ນະໂຍບາຍການບັນເທົາທຸກການແຜ່ລະບາດຂອງລັດຖະບານມີຈຸດ ປະສົງເພື່ອແນໃສ່ການຊ່ວຍເຫຼືອແຮງງານທີ່ຫວ່າງງານ ແລະ ແຮງງານທີ່ສຳຄັນ ແຕ່ໄດ້ເບິ່ງຂ້າມ ຫຼື ບໍ່ໄດ້ກວມເອົາແຮງງານເຄື່ອນຍ້າຍ. ເຖິງແມ່ນວ່າອຸດສາຫະກຳການປະມົງແຫ່ງຊາດໄດ້ຖືກລວມເຂົ້າໃນໂຄງການບັນເທົາທຸກຂອງລັດຖະບານ, ແຕ່ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຢູ່ໃນອຸດສາຫະກຳສ່ວນໃຫຍ່ແມ່ນບໍ່ໄດ້ຮັບການປົກປ້ອງຈາກການປະກັນສັງຄົມ ແລະ ຮັບບຳເນັດຫວ່າງງານ.

- ການປະຕິບັດຕໍ່ແຮງງານເຄື່ອນຍ້າຍທີ່ແຕກຕ່າງກັນ, ໂດຍສະ ເພາະໃນປະເທດທີ່ມີແຮງງານເຄື່ອນຍ້າຍເປັນກຳລັງແຮງງານສ່ວນໃຫຍ່, ເປັນການສະທ້ອນເຖິງຄວາມບໍ່ສະເຫມີພາບໃນສັງຄົມສ່ວນໃຫຍ່ ແລະ ນະໂຍບາຍທີ່ເຮັດໃຫ້ເກີດມີການເລືອກປະຕິບັດ ແລະ ຈຳແນກ. ການຍົກເວັ້ນນີ້ໄດ້ເຮັດໃຫ້ໂດຍສະ ເພາະແມ່ນຊາວປະມົງພົບກັບຄວາມຫຍຸ້ງຍາກ, ຍ້ອນວ່າການເຂົ້າເຖິງການປົກປ້ອງທາງສັງຄົມຂອງເຂົາເຈົ້າແມ່ນມີຈຳກັດຫລາຍ(ຕາມໜ້າວຽກປະຈຳວັນ) ແລະ ມີຄວາມບອບບາງຫຼາຍກວ່າການເຂົ້າເຖິງ ຂອງແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ໃນຂະ ແໜງການໃນລະບົບ.

- ນອກຈາກນັ້ນ, ການປິດປະເທດ ຍ້ອນພະຍາດໂຄວິດ19 ນັ້ນໄດ້ເຮັດໃຫ້ແຮງງານເຄື່ອນຍ້າຍຕ້ອງໄດ້ຕໍ່ເວລາພັກເຊົາອອກໄປຕື່ມ ເນື່ອງຈາກຂໍ້ຈຳກັດໃນການເດີນທາງ ແລະ ການປິດຊາຍແດນໄດ້ຂັດຂວາງເສລີພາບໃນການເຄື່ອນໄຫວຂອງເຂົາເຈົ້າ. ການຕໍ່ເວ ລາພັກເຊົານັ້ນເຮັດໃຫ້ເຂົາເຈົ້າຕ້ອງໄດ້ເສຍຄ່າທຳນຽມ ແລະ ການບໍລິຫານເພີ່ມຂຶ້ນເພື່ອຕໍ່ອາຍຸໃບອະນຸຍາດເຮັດວຽກ ໃນຂະ ນະທີ່ແຮງງານຈຳນວນຫຼວງຫຼາຍບໍ່ສາມາດຂຶ້ນທະບຽນສະຖານະພາບການເຄື່ອນຍ້າຍຂອງເຂົາເຈົ້າໄດ້. ຢູ່ປະເທດໄທ, ມີແຮງງານເຄື່ອນຍ້າຍປະມານ 500,000 ຄົນໄດ້ຕົກຢູ່ໃນສະຖານະພາບທີ່ບໍ່ຖືກຕ້ອງພາຍໃນເດືອນມັງກອນ ປີ 2021 ເນື່ອງຈາກບໍ່ສາມາດຂຶ້ນທະບຽນຂໍວີຊາໄດ້ ແລະ ມີຄ່າໃຊ້ຈ່າຍສູງ.

- ຂະໜາດຜົນກະທົບຂອງໂລກລະບາດຕໍ່ການເຮັດວຽກ, ການຄ້າ ແລະ ລະບຽບການປະຕິບັດຕໍ່ແຮງງານໄດ້ເປີດເຜີຍໃຫ້ຮູ້ອີກຄັ້ງຫນຶ່ງເຖິງຄວາມບໍ່ພຽງພໍຂອງໂຄງການທີ່ມີຄວາມຮັບຜິດຊອບທາງສັງ ຄົມແບບສະໝັກໃຈ ແລະ ມີຄວາມຍືນຍົງຈາກຜູ້ຊື້ອາຫານທະເລ ເພື່ອປົກປ້ອງກຳລັງແຮງງານຂອງຕົນ.

- ການເອົາໃຈໃສ່ຕໍ່ແຮງງານແບບຍືນຍົງ, ລວມທັງແຮງງານເຄື່ອນຍ້າຍທີເຮັດວຽກໃນຂະແໜງປະມົງ ແລະ ປຸງແຕ່ງອາຫານທະເລແມ່ນມີຄວາມສຳຄັນຫລາຍ. ໂດຍສະເພາະ, ບ່ອນທີ່ແຮງງານຖືກ "ເບິ່ງຂ້າມ" ຜ່ານທາງນະໂຍບາຍທີ່ຈຳກັດສິດເສລີພາບຢ່າງຮ້າຍແຮງໃນການເຄື່ອນໄຫວຂອງພວກເຂົາ ຫຼື ໃນສະຖານທີ່ເຮັດວຽກຂອງພວກເຂົາ - ເຮືອປະມົງ- ແມ່ນມີຄວາມຫຍຸ້ງຍາກທີ່ຈະຕິດຕາມກວດກາ. ນະໂຍບາຍການຮັບມືກັບວິກິດການ ແລະ ການຟື້ນຟູແມ່ນເປັນໂອ ກາດໃນການແກ້ໄຂການຂາດດຸນວຽກທີ່ມີຄ່າ ແລະ ເປັນທຳທີ່ມີຢູ່ກ່ອນໜ້ານີ້ ແລະ ຄວາມບໍ່ສະເໝີພາບທາງດ້ານໂຄງສ້າງໃນຂະແໜງ ການຕ່າງໆມີການປົກປ້ອງແຮງງານ ແລະ ການບັງຄັບໃຊ້ກົດໝາຍແຮງງານທີ່ຍັງບໍ່ເຂັ້ມແຂງ.

- ຢູ່ໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ, ຕ້ອງໄດ້ສືບຕໍ່ພະຍາຍາມຊຸກຍູ້ມາດຕະຖານແຮງງານສາກົນ ເພື່ອແກ້ໄຂຊ່ອງຫວ່າງການປົກປ້ອງຜູ້ອອກແຮງງານ. ເພີ່ມຄວາມໂປ່ງໃສໃນການປະຕິບັດຂອງບັນດາບໍລິສັດ ພ້ອມກັບການປັບປຸງການເກັບກຳ ແລະ ການເປີດເຜີຍຂໍ້ມູນແມ່ນກຸນແຈຫຼັກ ເພື່ອຮັບປະກັນບໍ່ໃຫ້ຜູ້ອອກ ແຮງງານຕົກຢູ່ໃນການເບິ່ງຂ້າມຂອງນະໂຍບາຍ. ສຸດທ້າຍການຊ່ວຍເຫລືອວິສາຫະກິດ, ລວມທັງການເສີມຂະຫຍາຍການປົກປ້ອງສັງຄົມໃຫ້ແກ່ແຮງງານທຸກຄົນ - ລວມທັງແຮງງານເຄື່ອນຍ້າຍ - ແມ່ນສຳຄັນຫລາຍໃນການຫຼຸດຜ່ອນຜົນກະທົບທາງລົບຂອງໂລກລະບາດ.

## ພາກສະເໜີ

ຄວາມສຳຄັນທາງດ້ານເສດຖະກິດ ແລະ ວັດທະນະທຳຂອງການປະມົງເປັນການຄ້າ ແລະ ການເພາະລ້ຽງສັດນ້ຳໃນອາຊີ ແລະ ປາຊີຟິກ - ເປັນບ້ານຂອງຊາວປະມົງ ຈຳນວນ 29 ລ້ານຄົນ ຫຼື 83 ເປີເຊັນຂອງຊາວປະມົງທັງໝົດໃນທົ່ວໂລກ - ໝາຍຄວາມວ່າຄວາມຫຍຸ້ງຍາກ ແລະ  ຄວາມພະຍາຍາມຂອງອຸດ ສາຫະກຳ ແລະ ກຳລັງແຮງງານຂອງຕົນໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ19 ນີ້ ແມ່ນບັນຫາສຳຄັນຂອງໂລກ (FAO, n.d.). ບົດສະຫຼູບຫຍໍ້ນີ້ ໄດ້ປະເມີນຜົນກະທົບຂອງໂລກລະບາດຕໍ່ແຮງງານທີ່ເຮັດວຽກ ຢູ່ ໃນອຸດສາ ຫະກຳການປະມົງໃນອາຊີ ແລະ ປາຊີຟິກ, ໂດຍເອົາໃຈໃສ່ເປັນພິເສດກັບຜົນກະທົບຂອງໂລກລະບາດຕໍ່ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍ.1

ໃນໄລຍະທຳອິດທີ່ມີການແຜ່ລະບາດຂອງພະຍາດຫລາຍທີ່ສຸດໃນປີ 2020, ວິກິດການຕໍ່ເນື່ອງໄດ້ສົ່ງຜົນກະທົບຕໍ່ອຸດສາຫະກຳການປະມົງໃນພາກພື້ນແລະ ແຮງງານ , ຍ້ອນວ່າມີຫລາຍແຫ່ງໄດ້ປິດກິດຈະການ ແລະ ຍັງມີຂໍ້ຈຳກັດໃນການເຄື່ອນຍ້າຍຊາຍແດນຢູ່ຫລາຍບ່ອນ, ຄວາມກັງວົນຕໍ່ກັບປະລິມານຂອງວຽກ, ສຸຂະພາບ ແລະ ຄວາມປອດໄພຂອງຊາວປະມົງແມ່ນມີເພີ່ມຂຶ້ນ.

ອີງຕາມວິທີການໃນພາກລຸ່ມນີ້, ບົດສະຫລຸບຫຍໍ້ນີ້ປະກອບດ້ວຍການວິເຄາະຂໍ້ມູນພົນພື້ນຖານຂໍ້ມູນຫລັກຖານຢູ່ພາກທີ 3 ຂອງຜົນກະທົບໄລຍະສັ້ນຂອງພະຍາດໂຄວິດ 19 ຕໍ່ກັບການປະມົງ ແລະ ການຄ້າອາຫານທະເລໃນພາກພື້ນ. ພາກທີ 4 ສະແດງເຖິງການວິເຄາະຂໍ້ມູນດ້ານຄຸນນະພາບຕໍ່ກັບການປ່ຽນແປງຂອງວຽກເຮັດງານທຳ ແລະ ເງື່ອນໄຂການເຮັດວຽກຂອງ ຊາວປະມົງໃນປີທຳອິດ ຂອງ ການລະການລະບາດພະຍາດ. ພາກທີ 5 ຂອງເອກະສານໄດ້ວິເຄາະເຖິງນະໂຍບາຍການໂຕ້ຕອບຂອງ ຖະບານຕໍ່ກັບການແຜ່ລະບາດຂອງພະຍາດ ແລະ ຄວາມແທດ ເໝາະສົມຕໍ່ອຸດສາຫະກຳສຸຂະພາບ ແລະ ຊີວິດການເປັນຢູ່ຂອງຊາວປະມົງ. ພາກສຸດທ້າຍ ແມ່ນພາກສະຫລຸບ ແລະ ຄຳແນະນຳ. ຈຸດປະສົງແມ່ນເພື່ອແນໃສ່ປິດຊ່ອງຫວ່າງບັນດານະໂຍບາຍ ແລະ ການບັງຄັບໃຊ້ນະໂຍບາຍ ເຊິ່ງໄດ້ລະບຸຢູ່ໃນບົດສະຫລຸບຫຍໍ້ນີ້. ໃນນີ້ລວມມີ, ໜຶ່ງ, ຂັ້ນຕອນທີ່ເປັນລະບົບເພື່ອຢຸດຕິການຈຳແນກຕໍ່ແຮງງານເຄື່ອນຍ້າຍ  ໂດຍຜ່ານການປ່ຽນແປງໃນກອບກົດໝາຍແຫ່ງຊາດທີ່ສອດຄ່ອງກັບບັນດາມາດຕະຖານອື່ນໆ ເຊັ່ນ.

ວຽກງານຂອງອົງການ ILO ໃນສົນທະສັນຍາວ່າດ້ວຍການປະມົງ, ປີ 2007 (ສະບັບເລກທີ 188). ສອງ, ເອກະສານນີ້ໄດ້ຊີ້ໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງການປະຕິເສດສິດເສລີພາບໃນການສ້າງຕັ້ງສະມາຄົມຢ່າງມີປະສິດທິຜົນຂອງຊາວປະມົງຫຼາຍຄົນ, ທັງແຮງງານພາຍໃນ ແລະ ແຮງງານເຄື່ອນຍ້າຍຢູ່ໃນອາຊີ ແລະ ການລ່ວງລະເມີດແຮງງານຢ່າງຕໍ່ເນື່ອງໃນຂະແໜງປະມົງທີ່ເປັນການຄ້າ. ສາມ, ເອກະ ສານນີ້ໄດ້ຍົກໃຫ້ເຫັນຄວາມລົ້ມເຫຼວຂອງລະບຽບການຂອງຂະແໜງປະມົງຂອງພາກເອກະຊົນ ແລະ ຄວາມສະໝັກໃຈໃນການປ້ອງກັນ ຫຼື ຄວບຄຸມການລ່ວງລະເມີດທີ່ເກີດຂຶ້ນໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ 19, ເຊິ່ງມັນໄດ້ສົ່ງຜົນຕໍ່ການສ້າງນິຕິກຳໃໝ່ຢູ່ໃນຕະຫລາດສົ່ງອອກອາຫານທະເລທີ່ໃຫຍ່ທີ່ສຸດຂອງອາຊີ - ສະຫະລັດອາເມລິກາ. ນີ້ກໍ່ເພື່ອສະກັດກັ້ນການນຳເຂົ້າອາຫານທະເລທີ່ນຳໃຊ້ແຮງງານບັງຄັບ.

1 According to recent ILO estimates, there are 169 million migrant workers worldwide, 7.2 per cent of whom are in South-Eastern Asia and the Pacific. Approximately 7.1 per cent of international migrant workers are engaged in agriculture, forestry and fishing (ILO 2021b)

### ຕາຕະລາງ 1. ສະຖິຕິພະຍາດໂຄວິດ 19 ທີ່ຄັດມາຈາກບັນດາປະເທດອາຊີ ແລະ ປາຊີຟິກ, ເດືອນ ກຸມພາ 2020 ຕຸລາ 2021

| ປະເທດ | ກໍລະນີທີ່ຖືກຢັ້ງຢືນ | ຈຳນວນເສຍຊີວິດ | ອັດຕາກໍລະນີເສຍຊີວິດ (%) | ເສຍຊີວິດ/ປະຊາກອນ 100,000 ຄົນ |
|---|---|---|---|---|
| ກຳປູເຈຍ | **118 220** | **2 766** | **2.34** | **16.544** |
| ອິນໂດເນຊຍ | **4 242 532** | **143 333** | **3.38** | **52.402** |
| ຍີ່ປຸ່ນ | **1 717 980** | **18 237** | **1.06** | **14.419** |
| ມຽນມາ | **497 700** | **18 622** | **3.74** | **34.225** |
| ຟີລິບປິນ | **2 772 491** | **42 575** | **1.54** | **38.853** |
| ເກົາຫຼີ | **360 536** | **2 817** | **0.78** | **5.495** |
| ໄຕ້ຫວັນ(ຈີນ) | **16 412** | **847** | **5.16** | **3.5** |
| ປະເທດໄທ | **1 893 941** | **19 070** | **1.01** | **27.321** |
| ຫວຽດນາມ | **905 477** | **21 910** | **2.42** | **22.509** |

**Source**: World Health Organization: Coronavirus (COVID-19) Dashboard, through October 31, 2021; Taiwan (China) data taken from https://www.worldometers.info/coronavirus/country/taiwan/.

## ວິທີການ ແລະ ຂໍ້ຈຳກັດ

ວິທີການທີ່ນໍາໃຊ້ເຂົ້າໃນການສຶກສາຄົ້ນຄວ້າໃນຄັ້ງນີ້ມີຄື: ໃນເບື້ອງຕົ້ນໄດ້ທົບທວນບັນດາເອກະສານລ້າສຸດ ລວມທັງເອກະການການຄົ້ນຄວ້າທາງວິຊາການ ແລະ ເອກະສານທີ່ເປັນທີ່ຍອມຮັບໂດຍທົ່ວໄປ,ໂຄງຮ່າງການຈັດ ຕັ້ງແລະການວິເຄາະຂໍ້ມູນທາງການຄ້າ ແລະ ການຈ້າງງານທີ່ກ່ຽວຂ້ອງ, ແລະ ການສໍາພາດກັບບຸກຄົນທີ່ມີບົດບາດສໍາຄັນ 10 ທ່ານ, ລວມທັງຕົວແທນຂອງຜູ້ຊື້ອາຫານທະເລສາກົນທີ່ຄັດມາຈາກບັນດາປະເທດທີ່ມີການຈັດຕັ້ງປະ ຕິບັດໂຄງການສິດທິແຮງງານແຕ່ເຮືອຮອດຝັ່ງຂອງອາຊີ ຕາເວັນອອກສ່ຽງໃຕ້ຂອງອົງການ ILO [2]

ຂໍ້ມູນກ່ຽວກັບ ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍ ແລະ ການປະຕິບັດຕົວຈິງຕໍ່ກັບແຮງງານ ທີ່ໜ້າເຊື່ອຖືໄດ້ ຢູ່ອາຊີ ລະຫວ່າງເດືອນ ມີນາ ປີ 2020 ຫາ ເດືອນ ມີນາ ປີ 2021 – ໄລຍະເວລາໃນການສຶກສາຄົ້ນຄວ້າ– ແມ່ນມີຂໍ້ຈໍາກັດ ແລະ ນອກຈາກນັ້ນກໍ່ຍັງມີການປິດປະເທດ, ການເຄື່ອນຍ້າຍສຸກເສີນ ແລະ ການປິດຊາຍແດນ. ຂໍ້ຈໍາກັດທີ່ເກີດຈາກພະຍາດໂຄວິດ ໄດ້ເຮັດໃຫ້ການເກັບກໍາຂໍ້ມູນຫຍຸ້ງຍາກຂຶ້ນ ແລະ ຍັງເຮັດໃຫ້ເກີດມີການເຄື່ອນຍ້າຍທີ່ບໍ່ຖືກຕ້ອງ -ສອງອົງປະກອບນີ້ເຮັດໃຫ້ຂໍ້ມູນການເຄື່ອນຍ້າຍຂອງລັດຖະບານມີຄວາມສົມບູນໜ້ອຍລົງກວ່າເກົ່າ ເມື່ອທຽບໃສ່ກ່ອນການແຜ່ລະບາດຂອງພະຍາດ.

ບັນດາປະເທດທີ່ໄດ້ກ່າວເຖິງໃນບົດສຶກສາຄົ້ນຄວ້ານີ້ໄດ້ກວມເອົາບັນດາປະ ເທດຕົ້ນທາງຂອງແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ໃນອຸດສາຫະກໍາການປະ ມົງໃນພາກພື້ນຄື: ກໍາປູເຈຍ, ອິນໂດເນເຊຍ, ມຽນມາ, ຟິລິບປິນ ແລະ ໃນຂະໜາດນ້ອຍແມ່ນຫວຽດນາມ. ລວມທັງໝົດແມ່ນໄດ້ສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດປະມານ125.000 ຄົນ ເພື່ອໄປເຮັດວຽກຢູ່ອຸດສາ ຫະກໍາການປະມົງຂອງຍີ່ປຸ່ນ, ເກົາຫຼີ, ໄທ ແລະ ໄຕ້ຫວັນ (ຈີນ).

ໃນໄລຍະແຜ່ລະບາດຂອງພະຍາດດັ່ງກ່າວ, ແຮງງານເຄື່ອນຍ້າຍ ໄດ້ປະກອບ ສ່ວນເຂົ້າໃນກໍາລັງແຮງງານຢູ່ໃນຂະແໜງການປະມົງຂອງໄທ, ເກົາຫຼີ ແລະ ໄຕ້ຫວັນ (ຈີນ) ຢ່າງຫລວງຫລາຍ. ຢູ່ໄທ ປີ 2020, ປະມານ 90% ຂອງຊາວປະມົງ ຫຼື ປະມານ 60,000 ຄົນ ແມ່ນແຮງງານເຄື່ອນຍ້າຍມາຈາກ ມຽນມາ ແລະ ກໍາປູເຈຍ (ILO 2019). ຢູ່ໃນສາທາລະນະລັດເກົາຫຼີ, ໃນປີ 2019 ມີຊາວປະມົງ 3.869 ຄົນ ທີ່ເປັນແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ໃນເຮືອປະມົງທີ່ອອກຫາປາໃນໄລຍະໄກ, ເຊິ່ງກວມເອົາ 73.8% ຂອງຊາວປະມົງທີ່ເປັນກໍາລັງແຮງງານທີ່ເຮັດວຽກຢູ່ໄກ. ມີຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຈໍານວນ 10,032 ຄົນ ທີ່ເຮັດວຽກຢູ່ໃນເຮືອປະມົງຂອງເກົາຫຼີ ຫຼື ເທົ່າກັບ 42% ຂອງກໍາລັງແຮງງານ (APIL 2020). 3 ຢູ່ຍີ່ປຸ່ນ, ໃນການຄາດຄະເນລ້າສຸດ ແຮງງານເຄື່ອນຍ້າຍ ປະມານ 4,000ຄົນ.

ແຮງງານເຄື່ອນຍ້າຍໄດ້ຖືກຈ້າງງານໃນຂະແໜງການປະມົງ (ILO 2017). ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍກວມເອົາປະມານ 11% ຂອງຈໍານວນແຮງງານທີ່ເຮັດວຽກຢູ່ໃນຂະແໜງການປະມົງ 300,000 ຄົນລວມທັງຊາວປະມົງຢູ່ໄຕ້ຫວັນ (ຈີນ) ໃນປີ 2019, ໃນນັ້ນ 12,476 ຄົນແມ່ນແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ແຄມຝັ່ງ ແລະ ນອກຝັ່ງທະເລ ແລະ 22,302 ຄົນເຮັດວຽກຢູ່ໃນເຮືອປະມົງຢູ່ໄກ (Sutton and Siciliano 2018; Chiang and Rogovin 2020). ຄາດວ່າປະມານສາມສ່ວນສີ່ຂອງຊາວປະມົງເຫຼົ່ານີ້ມາຈາກອິນໂດເນເຊຍ, ແລະສ່ວນໜ່ອຍແມ່ນມາຈາກຟິລິບປິນ ແລະ ຫວຽດນາມ (Marschke et.al 2020).

ການກວດກາຂໍ້ມູນການຈ້າງງານໃນຂະແໜງການປະມົງໂດຍຫຍໍ້ ກໍແມ່ນຕົວຊີ້ວັດການປ່ຽນແປງຂອງກິດຈະກໍາການປະມົງໃນໄລຍະການແຜ່ລະບາດຂອງພະຍາດ. ຂໍ້ມູນການຄ້າກໍເປັນຕົວຊີ້ວັດທີ່ມີປະໂຫຍດອີກອັນໜຶ່ງໃນການປ່ຽນ ແປງຂອງອຸດສາຫະກໍາການປະມົງທີ່ເປັນການຄ້າຂອງພາກພື້ນ ເຊິ່ງເປັນບ່ອນສົ່ງອອກອາຫານທະເລທີ່ກວມເອົາສ່ວນໃຫຍ່ຂອງການສົ່ງອອກທັງໝົດເຊັ່ນ: ອິນໂດເນເຊຍ (1,9%), ໄທ (0,8%) ແລະ ຫວຽດນາມ (2,3%) ໃນປີ 2019.4 ການສຶກສາຄົ້ນຄວ້ານີ້ໄດ້ດໍາເນີນການສໍາຫລວດ ແລະ ເກັບກໍາຕົວຢ່າງຢູ່ປະເທດໄທ, ສາທາລະນະລັດເກົາຫຼີ ແລະ ໄຕ້ຫວັນ (ຈີນ) ເຊິ່ງເປັນບ່ອນທີ່ມີອຸດສາຫະກໍາການປະມົງທີ່ເປັນການຄ້າ - ແລະ ຢູ່ປະເທດໄທ, ຂະແໜງການປຸງແຕ່ງອາຫານທະເລຂະໜາດໃຫຍ່ - ໄດ້ຮັບຄວາມສົນໃຈຢ່າງຕໍ່ເນື່ອງຈາກສື່ມວນຊົນ, ສະຫະພັນ, ຜູ້ສະໜັບສະໜູນສິດທິແຮງງານ ແລະ - ຮອງລົງມາກໍແມ່ນຜູ້ອອກລະບຽບການ ແລະ ລະຫວ່າງຄູ່ການຄ້າ.

2 Interviewees included representatives of global unions, fishing industry consultants, labour advocacy organizations and national governments.
3 Coastal water vessels weighing 20 tons or more (APIL 2021).
4 The seafood trade data used in this paper is limited to Harmonized Systems (HS) Codes 03, as HS 16 data specific to seafood was not available.

## ພະຍາດໂຄວິດ 19 ມີຜົນກະທົບຕໍ່ເສດຖະກິດຂອງຂະແໜງປະມົງ

ໃນປີ 2020 ທົ່ວໂລກໄດ້ປະເຊີນກັບການຫຼຸດລົງຂອງການປະມົງທີ່ເປັນການຄ້າ. ການຕິດຕາມທາງດາວທຽມຂອງເຮືອປະມົງໂດຍນຳໃຊ້ລະບົບການລະບຸຕົວອັດຕະໂນມັດ (AIS) ໄດ້ສະແດງໃຫ້ຮູ້ວ່າ ໃນປີ 2020 ທົ່ວໂລກຫຼຸດລົງ 9 ເປີເຊັນ (ເຮືອ 63,000 ລຳ) ໃນຈຳນວນເຮືອປະມົງການຄ້າ ສົມທຽບໃສ່ປີ 2019. ເຮືອເຫຼົ່ານີ້ຫາປາໄດ້ທັງໝົດປະມານ 50 ລ້ານຊົ່ວໂມງ ໃນປີ 2020, ຫຼຸດລົງ 5 ເປີເຊັນທຽບໃສ່ປີ 2019.

ຂໍ້ມູນການຈ້າງງານ ແລະ ຊົ່ວໂມງການເຮັດວຽກຈາກການສຳຫຼວດກຳລັງແຮງງານແຫ່ງຊາດໃນຫຼາຍໆປະເທດຢູ່ໃນການສຶກສາຄົ້ນຄວ້າຄັ້ງນີ້ສະທ້ອນໃຫ້ເຫັນເຖິງການຫຼຸດລົງຂອງວຽກໃນຂະແໜງການປະມົງຢູ່ທົ່ວໂລກໃນປີ 2020 – ຈຳນວນວຽກແລະ ຊົ່ວໂມງເຮັດວຽກໜ້ອຍລົງ. ວຽກ ແລະ ຊົ່ວໂມງເຮັດວຽກຕໍ່ຜູ້ອອກແຮງງານໃນຂະແໜງປະມົງຫຼຸດລົງແມ່ນຫລຸດລົງຫລາຍທີ່ສຸດຢູ່ປະເທດໄທ ໃນປີ 2020 ປະມານ -15.4 ເປີເຊັນ ແລະ ຢູ່ ຟີລິບປິນ -9.1 ເປີເຊັນ. ການຫຼຸດລົງຂອງວຽກຢູ່ປະເທດຫວຽດນາມແມ່ນບໍ່ຫລຸດລົງຕ່ຳຫລາຍ -1.6%.

ການຫຼຸດລົງຂອງຊົ່ວໂມງເຮັດວຽກທັງຫມົດປະຈຳອາທິດຢູ່ໃນສາມອຸດສາ ຫະກຳປະກົດວ່າໄດ້ມີການປັບຕົວໃຫ້ເຂົ້າກັບການຫຼຸດລົງຂອງການຈ້າງງານ, ເຖິງແມ່ນວ່າຈະເປັນອຸດສາຫະກຳຂະໜາດໃຫຍ່ກໍຕາມ.ໃນປີ 2020 ຢູ່ຟີລິບປິນ ແລະ ໄທ ໄດ້ມີການຫລຸດຈຳນວນຊົ່ວໂມງເຮັດວຽກປະຈຳອາທິດທັງ ໝົດລົງ – ເກືອບ 18 ເປີເຊັນ ແລະ 23 ເປີເຊັນ ຕາມລຳດັບ – ລື່ນການຫຼຸດລົງຂອງການຈ້າງງານເກືອບ8 ເປີເຊັນ. ປະເທດຫວຽດນາມແມ່ນຫຼຸດລົງໜ້ອຍ, ແຕ່ກໍເປັນລັກສະນະດຽວກັນ. ຄວາມແຕກຕ່າງຂອງສາມອຸດສະຫະກຳນີ້ໄດ້ຊີ້ໃຫ້ເຫັນວ່າການສູນເສຍຊົ່ວໂມງເຮັດວຽກນັ້ນບໍແມ່ນພຽງແຕ່ຍ້ອນມີການຈ້າງງານຫລຸດລົງ ແຕ່ກໍຍ້ອນແຮງງານບາງຄົນເຮັດວຽກໜ້ອຍຊົ່ວໂມງລົງອີກດ້ວຍ.

ວຽກໃນຂະແໜງການປະມົງແມ່ນວຽກຕາມລະດູການ; ດັ່ງນັ້ນການ ວິເຄາະການປ່ຽນແປງໃນການຈ້າງງານ ແລະ ຊົ່ວໂມງເຮັດວຽກຈຶ່ງເປັນປະໂຫຍດຫລາຍ. ການວິເຄາະດັ່ງກ່າວສະແດງໃຫ້ເຫັນເຖິງການຫຼຸດລົງຢ່າງຫຼວງຫຼາຍຢູ່ໃນໄຕມາດທີສອງແລະທີສາມ ຂອງປີ 2020 - ເດືອນທີ່ເລີ່ມຕົ້ນເກີດວິກິດການພະຍາດໂຄວິດ19 - ໃນໄຕມາດດຽວກັນຂອງປີທີ່ຜ່ານມາ.

ຢູ່ຟີລິບປິນ ແລະ ຫວຽດນາມ, ການຈ້າງງານໃນທ້າຍປີ 2020 (ແລະ ໃນຂໍ້ມູນເພີ່ມເຕີມສຳລັບໄຕມາດທຳອິດຂອງປີ 2021) ໄດ້ກັບຄືນມາ ຫຼື ລື່ນກາຍ ປີ 2019. ແຕ່ວຽກການປະມົງຂອງປະເທດໄທໃນເດືອນສຸດທ້າຍຂອງປີ 2020 ໄດ້ຫຼຸດລົງເກືອບ 10 ເປີເຊັນ ເມື່ອທຽບໃສ່ປີ 2019, ເຊິ່ງສະແດງໃຫ້ເຫັນວ່າ, ອຸດສາຫະກຳ ຂອງ ໄທໄດ້ປັບລະດັບການຈ້າງງານ ຄືນໃໝ່ໃຫ້ຢູ່ໃນລະດັບທີ່ຕ່ຳຂອງ ການປະມົງ (ຕາມລະດັບໃນລະດູການ). ຂໍ້ມູນການຈ້າງງາໃນອຸດສາຫະກຳຂອງປະເທດ ໄທໃນເດືອນທຳອິດຂອງປີ 2021 ສະແດງໃຫ້ເຫັນວ່າວຽກເຮັດງານທຳຫຼຸດລົງ 20 ເປີເຊັນຕ່ຳກວ່າໃນໄຕມາດ ທຳອິດຂອງປີ 2019.

### ຕາຕະລາງ 2. ການຈ້າງງານ ແລະ ຊົ່ວໂມງເຮັດວຽກຢູ່ໃນຂະແໜງການປະມົງ ແບ່ງຕາມປະເທດ, ປີ 2019-2020

| ປະເທດ | ການຈ້າງງານ | | | ຊົ່ວໂມງເຮັດວຽກລວມ | | |
|---|---|---|---|---|---|---|
| | 2019 | 2020 | ປ່ຽນແປງ (%) | 2019 | 2020 | ປ່ຽນແປງ (%) |
| ຟີລິບປິນ | 1 111 733 | 1 010 590 | - 9.1 | 40 116 434 | 33 081 718 | - 17.54 |
| ໄທ | 219 545 | 185 662 | - 15.4 | 8 269 874 | 6 358 382 | - 23.11 |
| ຫວຽດນາມ | 622 676 | 612 603 | - 1.6 | 26 863 067 | 25 548 426 | - 4.89 |

*** Philippines data for 2020 Q1 is unavailable; 2019 and 2020 averages exclude Q1. Source**: ILO calculations based on ILO Harmonized Microdata, www.ilo.org/ilostat.

### ຕາຕະລາງ 3. ການຈ້າງງານປະຈຳໄຕມາດຢູ່ໃນຂະແໜງການປະມົງແບ່ງຕາມປະເທດ, ປີ2019–20

| ການຈ້າງງານ | Q1 | | | Q2 | | | Q3 | | | Q4 | | |
|---|---|---|---|---|---|---|---|---|---|---|---|---|
| ປະເທດ | 2019 | 2020 | (%) | 2019 | 2020 | (%) | 2019 | 2020 | (%) | 2019 | 2020 | (%) |
| ຟີລິບປິນ | n/a | n/a | n/a | 1045 314 | 987 202 | -5.6 | 1212 107 | 945 224 | -22.0 | 1077 777 | 1099 344 | 2.0 |
| ໄທ | 240 372 | 194 733 | -19.0 | 219 053 | 184 218 | -15.9 | 206 629 | 171 974 | -16.8 | 212 129 | 191 72 3 | -9.6 |
| ຫວຽດນາມ | 627 450 | 624 181 | -0.5 | 626 893 | 578 179 | -7.8 | 626 467 | 604 672 | -3.5 | 609 895 | 643 37 9 | 5.5 |

n/a = data not available.

### ▶ ຕາຕະລາງ 4. ຊົ່ວໂມງເຮັດວຽກໃນອາທິດປະຈຳໄຕມາດຢູ່ໃນຂະແໜງການປະມົງແບ່ງຕາມປະເທດ, ປີ 2019–20

| ການຈ້າງງານ | Q1 | | | Q2 | | | Q3 | | | Q4 | | |
|---|---|---|---|---|---|---|---|---|---|---|---|---|
| ປະເທດ | 2019 | 2020 | (%) | 2019 | 2020 | (%) | 2019 | 2020 | (%) | 2019 | 2020 | (%) |
| ຟີລິບປິນ | n/a | n/a | n/a | 39 433 267 | 26 892 902 | -31.8 | 43 741 311 | 33 674 067 | -23.0 | 37 174 724 | 38 678 185 | 4.0 |
| ໄທ | 240 372 | 194 733 | -19.0 | 8 462 920 | 5 844 867 | -31.8 | 7 747 182 | 5 795 484 | -25.2 | 8 169 976 | 6 786 1 | -16.9 |
| ຫວຽດນາມ | 627 450 | 624 181 | -0.5 | 29 642 672 | 25 796 649 | -13.0 | 27 599 203 | 27 734 922 | 0.5 | 27 235 573 | 25 109, 443 | -7.8 |

## ການຄ້າອາຫານທະເລທົ່ວໂລກຫຼຸດລົງໃນປີ 2020

ການຫຼຸດລົງຂອງກິດຈະກຳການປະມົງໃນປີ 2020 ນີ້ ສະແດງໃຫ້ເຫັນເຖິງການຫຼຸດລົງຂອງປະລິມານການສົ່ງອອກອາຫານທະເລໂດຍເລັກນ້ອຍແຍກຕາມປະເທດທີ່ມີຂໍ້ມູນ.  ການສຶກສາຄົ້ນຄວ້າໃນຄັ້ງນີ້ເຫັນວ່າເສັ້ນສະແດງການສົ່ງອອກອາຫານທະເລຂອງບັນດາປະເທດແມ່ນເສັ້ນຂຶ້ນເປັນໄລຍະຍາວ (ຍົກເວັ້ນປະເທດໄທ: ການຫາປາຫຼາຍເກີນໄປໃນແມ່ນ້ຳຂອງໄທ, ພະຍາດໃນອຸດສາຫະກຳກຸ້ງ, ການແຂ່ງຂັນດ້ານລາຄາທີ່ຮຸນແຮງໃນພາກພື້ນ ແລະ ບັນຫາການນຳໃຊ້ແຮງງານບັງຄັບໃນທົ່ວໂລກ ໄດ້ເຮັດໃຫ້ປະລິມານການສົ່ງອອກອາຫານທະເລຫຼຸດລົງໃນຮອບທົດສະວັດນັບຕັ້ງແຕ່ປີ 2010 ເປັນຕົ້ນມາ)

ເຊັ່ນດຽວກັນ, ການສົ່ງອອກອາຫານທະເລ (ມູນຄ່າ) ຂອງບັນດາປະເທດສ່ວນໃຫຍ່ທີ່ໄດ້ສຶກສາໃນໄລຍະສັ້ນນີ້ສະແດງໃຫ້ເຫັນເຖິງການຫຼຸດລົງເດືອນຕໍ່ເດືອນຢ່າງຕໍ່ເນື່ອງຫຼາຍກວ່າລະດັບການຫລຸດລົງໃນປີ 2019, ການຫຼຸດລົງຫລາຍທີ່ສຸດແມ່ນຢູ່ໃນເດືອນມີນາ ແລະ ເດືອນເມສາ ປີ 2020 ໃນໄລຍະການແຜ່ລະບາດຂອງພະຍາດຄັ້ງທຳອິດ.  ການສົ່ງອອກອາຫານທະເລຂອງຍີ່ປຸ່ນຫຼຸດລົງ 20 ເປີເຊັນ ເມື່ອທຽບໃສ່ເດືອນມີນາ 2019; ການສົ່ງອອກຂອງຟີລິບປິນຫຼຸດລົງ 19 ເປີເຊັນ; ເກົາຫຼີ 14 ເປີເຊັນ; ແລະ ໄທ 10 ເປີເຊັນ. ການສົ່ງອອກຫຼຸດລົງຕື່ມອີກໃນເດືອນເມສາ 2020 ຢູ່ຍີ່ປຸ່ນ (30 ເປີເຊັນ), ຟີລິບປິນ (31 ເປີເຊັນ) ແລະ ສາທາລະນະລັດເກົາຫຼີ (33 ເປີເຊັນ), ແຕ່ເພີ່ມຂຶ້ນເລັກນ້ອຍໃນປະເທດໄທ (3 ເປີເຊັນ) [5]. ການສົ່ງອອກອາຫານທະເລຂອງ 4 ປະເທດເຫລົ່ານີ້ ໄດ້ຫຼຸດລົງ 13 ເປີເຊັນ ໃນປີ 2020 ເມື່ອທຽບໃສ່ປີ 2019, ເຊິ່ງເປັນມູນຄ່າຫຼຸດລົງ 5,2 ຕື້ໂດລາສະຫະລັດ.

ສຳລັບຜົນກະທົບຂອງພະຍາດໂຄວິດ 19 ຕໍ່ກັບຄວາມຕ້ອງການໃນການຄ້າອາຫານທະເລ, ການສຶກສາຄົ້ນຄວ້າໃນຄັ້ງນີ້ໄດ້ກວດກາເບິ່ງການປ່ຽນແປງໃນການນຳເຂົ້າອາຫານທະເລຂອງສອງຕະຫຼາດອາຫານທະເລທີ່ສຳຄັນຂອງໂລກຄື: ສະຫະລັດ ແລະ ສະຫະພາບເອີຣົບ (EU). ປີ 2020, ການນຳເຂົ້າອາຫານທະເລລວມທັງໝົດ (HS code 03) ຂອງ ອາເມລິກາ ແລະ EU ຈາກ ອິນໂດເນເຊຍ, ຫວຽດນາມ, ໄທ, ຟີລິບປິນ, ສ.ເກົາຫຼີ ແລະ ຍີ່ປຸ່ນ ໄດ້ຫຼຸດລົງ 14,4ເປີເຊັນ ແລະ ການນຳເຂົ້າຂອງ EU ຫຼຸດລົງເປັນອັດຕາສ່ວນຫຼາຍ (-22.1 ເປີເຊັນ) ຫຼາຍກວ່າການນຳເຂົ້າຂອງສະຫະລັດ (-10.9 ເປີເຊັນ).

ຂໍ້ມູນຜູ້ບໍລິໂພກໃນ ປີ 2020 ສະແດງໃຫ້ເຫັນຄວາມຕ້ອງການອາຫານຂາຍຍ່ອຍເພີ່ມຂຶ້ນ.  ການບໍລິໂພກປະເພດປາທີ່ມີລາຄາຖືກກວ່າໄດ້ກັບຄືນມາ ແລະ ເພີ່ມຂຶ້ນເລັກນ້ອຍ ເນື່ອງຈາກຜູ້ບໍລິໂພກຊື້ປາຫຼາຍຂຶ້ນ ແລະ ຊື້ອາຫານທະເລທີ່ກະກຽມໄວ້ຢູ່ຮ້ານຂາຍຍ່ອຍເພື່ອມາແຕ່ງກິນຢູ່ເຮືອນ (Love et. al 2021). ຜະລິດຕະພັນອາຫານທະເລກະປ໋ອງແລະ ໂດຍສະເພາະແມ່ນປາທູນາກະປ໋ອງ, ມີຄວາມຕ້ອງການສູງໃນຕອນຕົ້ນຂອງ ການແຜ່ລະບາດຂອງພະຍາດດັ່ງກ່າວ, ຜູ້ບໍລິໂພກອາດຈະຮູ້ສຶກວ່າຕ້ອງໄດ້ເກັບຮັກສາອາຫານທີ່ເປັນຫລັກໄວ້ຢູ່ໃນຕູ້. ໃນໄຕມາດທີ 1 ຂອງປີ 2020, ການນຳເຂົ້າປາທູນ້າກະປ໋ອງຂອງສະຫະລັດເພີ່ມຂຶ້ນ 6 ເປີເຊັນ ແລະ ການນຳເຂົ້າປາທູນ້າຂອງ EU ເພີ່ມຂຶ້ນ 23 ເປີເຊັນ (IHS Markit 2020).

ແຕ່ເມື່ອສົມທຽບກັບການຄ້າສະບຽງອາຫານອື່ນໆ, ການສົ່ງອອກອາຫານທະເລຂອງ ຫົກປະເທດໄປອາເມລິກາ ແລະ EU ໄດ້ຮັບຄວາມເສຍຫາຍຫຼາຍໃນປີທຳອິດຂອງການລະບາດຂອງພະຍາດໂຄວິດ-19.  ຕົວຢ່າງ, ການສົ່ງອອກອາຫານເຊົ້າທັນຍາພືດ ແລະ ແປ້ງ (ລະຫັດ HS 19) ໄປສອງຕະຫຼາດນີ້ເພີ່ມຂຶ້ນ 17 ເປີເຊັນໃນປີ 2020 ຫລາຍກວ່າປີ 2019. ການນຳເຂົ້າຊີ້ນສັດຂອງສະຫະລັດ (ລະຫັດ HS 02) ເພີ່ມຂຶ້ນ 10.1 ເປີເຊັນ ແລະ ການນຳເຂົ້າຂອງ EU ຫຼຸດລົງເລັກນ້ອຍ (-1.3 ເປີເຊັນ).

ໃນສະຫະລັດ, ຮ້ານອາຫານທະເລໄດ້ລາຍງານວ່າ ຄວາມຕ້ອງການຂອງຜູ້ບໍລິໂພກຫຼຸດລົງ 70 ເປີເຊັນ, ເຊິ່ງເຮັດໃຫ້ການຫາອາຫານທະເລຂອງສະຫະລັດຫຼຸດລົງ 40 ເປີເຊັນໃນຊ່ວງການລະບາດໃຫຍ່ (White 2020). ຕະຫຼາດອາຫານທະເລຂອງ EU ເຫັນວ່າລາຄານຳເຂົ້າອາຫານທະເລຫຼຸດລົງ 30% ໃນເດືອນທຳອິດຂອງປີ 2020 ເນື່ອງຈາກຄວາມຕ້ອງການຫຼຸດລົງ (Love et. al 2021).

## ການປິດອຸດສາຫະກຳການປະມົງບໍ່ແມ່ນສາເຫດຕົ້ນຕໍຂອງການຫລຸດລົງ

ການຫຼຸດລົງຂອງການຈ້າງງານໃນຂະແໜງການປະມົງ, ຊົ່ວໂມງເຮັດວຽກ ແລະ ການຄ້າອາຫານທະເລໃນປີ 2020 ປະກົດວ່າບໍ່ແມ່ນຍ້ອນສາເຫດຂອງມາດຕະການທາງສາທາະນະສຸກ ເຊັ່ນວ່າ ການປິດທ່າເຮືອຊົ່ວຄາວທີ່ຈຳກັດກິດຈະກຳການຫາປາ.

**ຢູ່ປະເທດໄທ**, ເຖິງແມ່ນວ່າຈະມີການປິດຊາຍແດນ, ການປິດປະເທດ ແລະ ການຈຳກັດການເດີນທາງ, ແຕ່ລັດຖະບານສ່ວນໃຫຍ່ໄດ້ອະນຸຍາດໃຫ້ອຸດສາຫະກຳການປະມົງສືບຕໍ່ດຳເນີນກິດຈະການຕະຫຼອດ ປີ 2020 ແລະ ຖືວ່າປາເປັນເຄື່ອງບໍລິໂພກທີ່ສຳຄັນ (Thongtub 2020). ດັ່ງທີ່ໄດ້ກ່າວໃນຂ້າງເທິງນັ້ນ, ການສົ່ງອອກອາຫານທະເລ (ເຊິ່ງລວມເຖິງປັດໄຈນຳເຂົ້າຈາກການປະມົງທີ່ບໍ່ແມ່ນຂອງໄທ) ໄດ້ເພີ່ມຂຶ້ນເລັກນ້ອຍໃນປີ 2020.[6]

5 *Source:* UN Comtrade, data from select HS 03 codes. Exports in the Philippines increased significantly in June (51 per cent) and July (44 per cent) 2020. This is likely due to the smaller export values and accordingly larger percentage fluctuations.

### ▶ ອາຫານສັດລ້ຽງ

ການເພີ່ມຂຶ້ນຂອງການມີສັດລ້ຽງໃນທົ່ວໂລກໃນໄລຍະການແຜ່ລະບາດຂອງພະຍາດໄດ້ເຮັດໃຫ້ຄວາມຕ້ອງການອາຫານສັດລ້ຽງເພີ່ມຂຶ້ນ. ອຸດສາຫະກຳອາຫານສັດລ້ຽງ - ຜູ້ຊື້ປາລາຄາຖືກ ແລະ "ປາເສດເຫລືອ" ທີ່ສຳຄັນ - ແມ່ນບໍ່ນອນຢູ່ໃນກໍລະນີການຫຼຸດລົງຂອງການບໍລິໂພກໃນລະຫວ່າງການແຜ່ລະ ບາດຂອງພະຍາດ, ແຕ່ໄດ້ເຮັດໃຫ້ຕະຫລາດອາຫານທະເລຈຳນວນໜຶ່ງມີການເພີ່ມຄວາມຕ້ອງການຂຶ້ນ.

ກ່ອນເກີດການລະບາດຂອງພະຍາດ, ຜູ້ສະໜອງອາຫານທະເລໄດ້ຮັບຜົນກະທົບຈາກການປ່ຽນແປງໃນອຸດສາຫະກຳອາຫານສັດລ້ຽງ, ຍ້ອນວ່າເຈົ້າຂອງສັດລ້ຽງຫຼາຍຄົນໄດ້ຫັນໄປສູ່ອາຫານສັດລ້ຽງທີ່ມີສຸຂະພາບດີ, ມີທາດໂປຼຕີນສູງທີ່ເຮັດຈາກປາ (Blank 2019). ໃນໄລຍະການລະບາດຂອງພະຍາດໂຄວິດ 19, ຄວາມຕ້ອງການອາຫານສັດລ້ຽງທີ່ເພີ່ມຂຶ້ນ ເຮັດໃຫ້ລາຄາສະເລ່ຍຂອງອາຫານໝາ ແລະ ແມວເພີ່ມຂຶ້ນ. ອຸດສາຫະກຳການເບິ່ງແຍງດູແລສັດລ້ຽງໃນທົ່ວໂລກໄດ້ມີອັດຕາການເຕີບໂຕສະໝໍ່າສະເໝີ ປະມານ 3 ເປີເຊັນ ນັບຕັ້ງແຕ່ປີ 2012 ເປັນຕົ້ນມາ, ແຕ່ໃນປີ 2020 ອັດຕາການຂະຫຍາຍຕົວເພີ່ມຂຶ້ນສູງເຖິງ 5 ເປີເຊັນ (Tyler 2021). ໃນບັນດາປະເທດທີ່ມີຕະຫຼາດສົ່ງອອກທີ່ເຂັ້ມແຂງ, ຜູ້ສະໜອງອາຫານທະເລໄດ້ເລັ່ງການຜະລິດຜະລິດຕະພັນທີ່ກ່ຽວຂ້ອງກັບອາຫານສັດ ເຖິງແມ່ນວ່າກິດຈະກຳຂອງອຸດສາຫະກຳອາຫານທະເລໂດຍທົ່ວໄປຈະຊ້າລົງ. ກຸ່ມບໍລິສັດ ໄທຢູນຽນກຣຸບ ເຊິ່ງເປັນຜູ້ຜະລິດອາຫານທະເລ ໄດ້ປະສົບກັບການເຕີບໂຕ 12 ເປີເຊັນຂອງຜະລິດຕະພັນທີ່ກ່ຽວຂ້ອງກັບອາຫານສັດລ້ຽງໃນລະຫວ່າງໄຕມາດ 3 ປີ 2020, ເຊິ່ງມີມູນຄ່າການຂາຍປະມານ 5.15 ຕື້ບາດໄທ (172.2 ລ້ານໂດລາສະຫະລັດ) (Buelva 2021). ດັ່ງນັ້ນ, ຜູ້ຜະລິດອາຫານທະເລຈຳນວນໜຶ່ງໄດ້ເພີ່ມການປຸງແຕ່ງອາຫານທະເລ ແລະ ການປະມົງ ໃນທ່າມກາງໂລກລະບາດ ເນື່ອງຈາກມີຄວາມຕ້ອງການອາຫານສັດລ້ຽງສູງຂຶ້ນ. ໃນການສຳພາດຂອງການສຶກສາຄົ້ນຄວ້າໃນຄັ້ງນີ້ ຜູ້ຜະລິດອາຫານສັດລ້ຽງທີ່ສຳຄັນໃນພາກພື້ນໄດ້ລາຍງານວ່າຄວາມຕ້ອງການອາຫານສັດລ້ຽງທີ່ເພີ່ມຂຶ້ນໃນໄລຍະການລະບາດພະຍາດໂຄວິດ 9 ແມ່ນເກີນຄວາມສາມາດໃນການສະໜອງອາຫານທະເລຈາກເຮືອທີ່ເຂົ້າຮ່ວມໂຄງການປົກປ້ອງແຮງງານຂອງຜູ້ຊື້ ແລະ ມີການປະຕິບັດຕາມມາດຕະຖານແຮງງາຫລາຍຂຶ້ນ. ນີ້ໝາຍຄວາມວ່າການປະຕິບັດໃນການຊື້ຖືກອອກແບບມາເພື່ອຕອບແທນຜູ້ສະໜອງທີ່ມີຈັນຍາບັນໄດ້ຖືກຫຼຸດລົງ ເພື່ອໃຫ້ສາມາດຕອບສະໜອງກັບຄວາມຕ້ອງການ.

ຊາວປະມົງໃນ**ຟີລິບປິນ**ໄດ້ຮັບການຍົກເວັ້ນຈາກການກັກກັນຢ່າງເຂັ້ມງວດ ແຕ່ຈຳເປັນຕ້ອງໄດ້ຮັບການກວດກັ່ນຕອງກ່ອນ ແລະ ຫຼັງຈາກການຫາປາ (Unite 2020). ເຖິງວ່າຊາວປະມົງຈະສາມາດອອກໄປຕາມນໍ້າ ແລະ ຫາປາໄດ້ກໍ່ຕາມ, ແຕ່ຊາວປະມົງກໍ່ປະເຊີນກັບຄວາມກົດດັນ ຂອງ ຕະຫຼາດ ເນື່ອງຈາກຮ້ານອາຫານ ແລະ ຕະຫຼາດອາຫານທະເລໄດ້ປິດລົງ, ແລະ ການຈຳກັດການຂົນສົ່ງສິນຄ້າ ແລະ ການເຄື່ອນຍ້າຍຂອງຄົນ ເຮັດໃຫ້ລາຄາອາຫານທະເລໃນຟີລິບປິນຫຼຸດລົງ.

ນະໂຍບາຍປິດປະເທດຂອງ**ອິນໂດເນເຊຍ** ແມ່ນຂຶ້ນກັບແຕ່ລະແຂວງ ແລະ ໂດຍທົ່ວໄປແລ້ວແມ່ນມີການຜ່ອນຜັນ: “ໃນຂະນະທີ່ຫຼາຍປະເທດໄດ້ປິດທ່າເຮືອປະມົງຂອງຕົນ ແລະ ຢຸດການເຄື່ອນໄຫວການປະມົງຊົ່ວຄາວ ເມື່ອມີພະຍາດໂຄວິດ19 ເຂົ້າມາເຖິງຝັ່ງທະເລຂອງຕົນ, ອິນໂດເນເຊຍບໍ່ໄດ້ນຳໃຊ້ຂໍ້ຈຳກັດປະເພດເຫຼົ່ານີ້” (Sumarsono 2020). ດັ່ງນັ້ນ, ກະຊວງການເດີນເຮືອແລະ ການປະມົງ ສາມາດລາຍງານຄວາມໝັ້ນຄົງດ້ານອຸດສາຫະກຳການຄ້າການປະມົງຂອງອິນໂດເນເຊຍໄດ້.

**ສ.ເກົາຫຼີ** ກໍບໍ່ໄດ້ມີການປິດປະເທດ, ແຕ່ການຜະລິດທາງປະມົງໄດ້ຫຼຸດລົງ 3,8 ເປີເຊັນ ເມື່ອທຽບໃສ່ປີ 2019, ການປະມົງຢູ່ແຄມທະເລ ແລະ ນອກຝັ່ງງໄດ້ເພີ່ມຂຶ້ນ 2,2% ແຕ່ການປະມົງຢູ່ໃນໄລຍະໄກຫຼຸດລົງຢ່າງຫຼວງຫຼາຍ 13.3 ເປີເຊັນໃນປີ 2020 ຫຼາຍກວ່າລະດັບໃນປີ 2019 (ສະຖິຕິເກົາຫຼີ 2021).

**ໄຕ້ຫວັນ (ຈີນ)** ໄດ້ມີສ່ວນໃນນະໂຍບາຍຄວບຄຸມທີ່ຮຸນແຮງ, ແຕ່ໄດ້ສຸມໃສ່ການຕິດຕາມທາງໂທລະສັບມືຖື, ກວດອຸນຫະພູມ ແລະ ຮັກສາໄລຍະຫ່າງທາງສັງຄົມຕາມຮ້ານຄ້າຍ່ອຍຕ່າງໆ. ດັ່ງນັ້ນ, ທ່າເຮືອປະມົງ ແລະ ຮ້ານອາຫານບໍ່ເຄີຍຖືກປິດ. ເຖິງຢ່າງໃດກໍ່ຕາມ, ຄວາມຕ້ອງການອາຫານທະເລສົດ ແລະ ແຊ່ແຂງທີ່ຫຼຸດລົງແລະ ການຜະລິດຊ້າລົງຕາມລະບົບຕ່ອງໂສ້ການສະໜອງເຮັດໃຫ້ກິດຈະກຳການປະມົງໃນໄຕ້ຫວັນ(ຈີນ) ຫຼຸດລົງ (Marschke et al 2020).

## ຜົນກະທົບຂອງການປິດຊາຍແດນຕໍ່ອຸດສາຫະກຳທີ່ເອື່ອຍອີງໃສ່ແຮງງານເຄື່ອນຍ້າຍ

**ສ. ເກົາຫຼີ,** ການປິດຊາຍແດນແຫ່ງຊາດໄດ້ຈຳກັດການສະໜອງຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍທີ່ເຂົ້າມາໃໝ່ ແລະ ໄດ້ເຮັດໃຫ້ເຈົ້າຂອງເຮືອປະມົງຕ້ອງສັນຫາ ແລະ ຈ້າງແຮງງານທີ່ເປັນພົນລະເມືອງ ສ.ເກົາຫຼີໄປເຮັດວຽກເປັນຊາວປະມົງທີ່ມີການສະເໜີຄ່າຊົດເຊີຍ ແລະ ໂບນັດທີ່ສູງກວ່າ. ແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ໃນອຸດສາຫະກຳນີ້ - ປະມານ 47 ເປີເຊັນຂອງແຮງງານທີ່ຫາປາຢູ່ແຄມຝັ່ງທະເລ ແລະ ນ້ຳໃນໄລຍະໄກ - ເຂົາເຈົ້າລາຍງານວ່າບໍ່ໄດ້ຮັບບຳເນັດແລະຄ່າຈ້າງເພີ່ມຂຶ້ນ. [7]

**ຢູ່ປະເທດໄທ**, ຄວາມກົດດັນຂອງລາຄາຕໍ່ຜະລິດຕະພັນອາຫານທະເລຫຼຸດລົງບວກກັບຄ່າຈ້າງທີ່ຂ້ອນຂ້າງຕ່ຳ, ການຫາປາເກີນກຳນົດ ແລະ ການຂາດການລົງທຶນໃສ່ເຕັກໂນໂລຊີເພື່ອປະຫຍັດແຮງງານ ໄດ້ເຮັດໃຫ້ອຸດສາຫະກຳການປະມົງຕ້ອງໄດ້ເອື່ອຍອີງໃສ່ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍມາໄດ້ຫລາຍທົດສະວັດ. ສິ່ງດັ່ງກ່າວນີ້ໄດ້ເຮັດໃຫ້ຕະຫຼາດແຮງງານມີຄວາມເຄັ່ງຕຶງ, ແລະ ມີຄວາມເຄັ່ງຕຶງຂຶ້ນຍ້ອນຄວາມລັງເລໃຈຂອງລັດຖະບານກຳປູເຈຍ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ມຽນມາ ໃນການສະໜັບສະໜູນການເຄື່ອນຍ້າຍທີ່ຖືກຕ້ອງເພື່ອໄປເຮັດວຽກໃນຂະແໜງດັ່ງກ່າວ ເພາະຖືວ່າເປັນອຸດສາຫະ ກຳອັນຕະລາຍ ແລະ ເອົາລັດເອົາປຽບ.ໃນຊຸມປີມໍ່ໆມານີ້ ຊາວປະມົງໃໝ່ຫຼາຍສິບພັນຄົນໄດ້ຖືກບັນຈຸເຂົ້າເຮັດວຽກໃໝ່, ຕົ້ນຕໍແມ່ນມາຈາກແຮງງານເຄື່ອນຍ້າຍທີ່ບໍ່ຖືກຕ້ອງ ແລະ – ເຮັດວຽກໃນອຸດສາຫະກຳຂະໜາດນ້ອຍ – ຜ່ານຂໍ້ຕົກລົງ ການເຄື່ອນຍ້າຍແຮງງານກັບປະເທດເພື່ອນບ້ານ ຫຼື ຜ່ານຂະບວນການສຸກເສີນສະເພາະເພື່ອແກ້ໄຂການຂາດແຄນແຮງງານ (ILO 2019).

ການຂາດແຄນແຮງງານຊຳເຮື້ອໃນອຸດສາຫະກຳການປະມົງໄທ, ໄດ້ອະທິບາຍຢູ່ໃນບົດລາຍງານຂອງອົງການ ILO ປີ 2019 ກ່ຽວກັບນະໂຍບາຍ ແລະ ການຈັດຕັ້ງປະຕິບັດຕະຫຼາດແຮງງານ, ເຊິ່ງມັນມີຄວາມຮ້າຍແຮງຂຶ້ນເມື່ອມີການປິດຊາຍແດນ ແລະ ມາດຕະການປິດປະເທດໃນເດືອນຕົ້ນປີ 2020 ຂອງການແຜ່ລະບາດຂອງພະຍາດ. ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຈຳນວນໜຶ່ງສາມາດຕໍ່ລອງຄ່າຈ້າງສູງຂຶ້ນເລັກນ້ອຍ (Marschke et al. 2020) ແລະ ຈຳນວນໜຶ່ງກໍໄດ້ຮັບສ່ວນແບ່ງສູງຂຶ້ນຈາກຈຳນວນປາທີ່ຫາໄດ້, ຜູ້ສະຫນັບສະຫນູນດ້ານສິດທິແຮງງານໄດ້ສັງເກດເຫັນວ່າ ບໍ່ມີການເພີ່ມຄ່າຈ້າງຢ່າງກວ້າງຂວາງ, ແລະ ການກຳນົດຄ່າຈ້າງຍັງແມ່ນນາຍຈ້າງເປັນຜູ້ກຳນົດ ແລະ ຜູ້ຊື້ກໍກຳນົດຄ່າຈ້າງໂດຍທາງອ້ອມ, ແທນທີ່ຈະແມ່ນຕະຫຼາດແຮງງານເປັນຜູ້ກຳນົດ. [8] ເຖິງວ່າຈະບໍ່ເປັນເລື່ອງແປກໃນພາກພື້ນ, ແຕ່ລະບົບການຈ້າງງານຂອງນາຍຈ້າງໄທທີ່ຜູກມັດວີຊ່າ ແລະ ໃບອະນຸຍາດເຮັດວຽກນັ້ນຍັງສືບຕໍ່ຈຳກັດການເຄື່ອນຍ້າຍແຮງງານຢ່າງໜັກໜ່ວງ ແລະ ຫຼຸດຜ່ອນອຳນາດໃນການຕໍ່ລອງຂອງຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍ. [9]

6 In 2021, as Thailand was hit by second and third waves of the pandemic, some fishing vessels were confined to ports and fishers were quarantined “on water”. According to Thailand’s Department of Fisheries, the total number of active fishing vessels as of 16 August 2021 was 10,058, a decrease of 109 vessels compared to the 10,167 active vessels on 31 March. However, this decrease is in line with previous year-on-year decreases since 2018.

## ຜົນກະທົບຕໍ່ວຽກຢູ່ໃນການປະມົງ

ຢູ່ໃນພາກນີ້ໄດ້ກວດສອບເບິ່ງຜົນກະທົບທາງກົງ ແລະ ທາງອ້ອມຕໍ່ຊາວປະມົງ – ທັງແຮງງານພາຍໃນ ແລະ ແຮງງານເຄື່ອນຍ້າຍ – ເຊິ່ງເກີດຈາກການຫຼຸດລົງຂອງເສດຖະກິດທົ່ວໄປ ແລະ ຄວາມສັບສົນໃນເດືອນຕົ້ນໆຂອງການລະບາດຂອງພະຍາດ. ພາກນີ້ຍັງໃຫ້ລາຍລະອຽດກ່ຽວກັບຜົນກະທົບຕໍ່ຊາວປະມົງຈາກການປິດປະເທດເນື່ອງຈາກພະຍາດໂຄວິດ19 ແລະ ຂໍ້ຈຳກັດໃນການເດີນທາງ, ການລະເມີດສິດທິແຮງງານ, ລາຍໄດ້ຫຼຸດລົງ ແລະ ການລັກລອບເງິນຄ່າຈ້າງ, ແລະ ຄວາມສ່ຽງຕໍ່ສຸຂະພາບ ແລະ ຄວາມປອດໄພອັນໃໝ່.

### ການປິດປະເທດ ແລະ ການປິດຊາຍແດນ

ໃນຕົ້ນປີ 2020, ການປິດຊາຍແດນເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ແມ່ນມາດຕະຖານໃນອາຊີ ແລະ ປາຊີຟິກ, ແຕ່ຜົນກະທົບຕໍ່ຊາວປະມົງແມ່ນແຕກຕ່າງກັນໄປຕາມຄວາມເຂັ້ມງວດ ແລະ ການບັງຄັບໃຊ້ຂອງນະໂຍບາຍເຫຼົ່ານັ້ນ, ແລະ ການເອື່ອຍອີງຂອງອຸດສາຫະກຳການປະມົງຕໍ່ກັບແຮງງານພາຍໃນ ແລະ ແຮງງານເຄື່ອນຍ້າຍຂ້າມຊາດ.

**ປະເທດໄທ** ເປັນປະເທດອາຊີຕາເວັນອອກສຽງໃຕ້ປະເທດທຳອິດທີ່ໄດ້ລາຍງານກໍລະນີຕິດເຊື້ອໂຄວິດ-19 ຢູ່ນອກປະເທດຈີນໃນເດືອນມັງກອນປີ 2020. ໃນເດືອນ ມີນາ ປີ 2020, ນາຍົກລັດຖະມົນຕີໄດ້ປະກາດພາວະສຸກເສີນ ແລະ ໂຈະຖ້ຽວບິນສາກົນ, ປິດຊາຍແດນທາງບົກ ແລະ ກຳນົດການກັກກັນ. ໃນຕົ້ນເດືອນເມສາປີ 2020, ລັດຖະບານໄດ້ອອກຄຳສັ່ງຫ້າມປະຊາຊົນອອກນອກເຮືອນ ເພື່ອໃຫ້ປະຊາຊົນຢູ່ໃນເຮືອນໃນຊ່ວງເວລາ 10 ໂມງແລງ ຫາ 4 ໂມງເຊົ້າ ພ້ອມນັ້ນກໍໃຫ້ໃສ່ຜ້າອັດປາກ- ດັງ ແລະ ຮັກສາໄລຍະຫ່າງທາງສັງຄົມ (Dechsupa et al. 2020).

ການປະກາດນະໂຍບາຍດັ່ງກ່າວໄດ້ເຮັດໃຫ້ແຮງງານເຄື່ອນຍ້າຍຂອງກຳປູເຈຍ, ລາວ ແລະ ມຽນມາ ໄດ້ມີການເຄື່ອນຍ້າຍເປັນຈຳນວນຫລາຍເພື່ອກັບຄືນຈາກປະເທດໄທໄປປະເທດຂອງຕົນ. ອົງການສາກົນເພື່ອການຍົກຍ້າຍຖິ່ນຖານ (IOM) ຄາດຄະເນວ່າແຮງງານເຄື່ອນຍ້າຍຈຳນວນ 193.413 ຄົນໄດ້ເດີນທາງອອກຈາກປະເທດໄທໃນໄລຍະ 2 ອາທິດ ນັບແຕ່ວັນທີ 22 ເດືອນມີນາ ປີ 2020 ເປັນຕົ້ນໄປ (IOM 2020d) ໃນມື້ດຽວ - ວັນທີ 24 ເດືອນມີນາ 2020 ໄດ້ມີແຮງງານເຄື່ອນຍ້າຍປະມານ 15,000 ຄົນ ໄດ້ຂ້າມເຂົ້າມາ ສປປ ລາວ ຈາກປະເທດໄທ (IOM 2020b).

**ກຳປູເຈຍ** ໄດ້ອອກນະໂຍບາຍສັ່ງຫ້າມເດີນທາງໄປຕ່າງປະເທດໃນຂະນະທີ່ແຮງງານເຄື່ອນຍ້າຍກຳປູເຈຍປະມານ 90,000 ຄົນ ກັບຄືນມາຈາກປະເທດໄທກ່ອນຊາຍແດນທາງບົກຈະປິດໂດຍມີຂໍ້ຕົກລົງຮ່ວມກັນ ໃນທ້າຍເດືອນມີນາ ປີ 2020 (Blomberg 2020a). ມາຮອດເດືອນກຸມພາ ປີ 2021, ແຮງງານເຄື່ອນຍ້າຍຈຳນວນ 150,000 ຄົນໄດ້ເດີນທາງກັບຄືນກຳປູເຈຍຈາກປະເທດໄທ (Blomberg 2021), ແລະ ມາຮອດປະຈຸບັນຊາຍແດນທາງບົກລະຫວ່າງສອງປະເທດຍັງປິດຢູ່ (GGRAsia 2021).

ແຮງງານ**ມຽນມາ**ຫຼາຍຄົນທີ່ເຮັດວຽກຢູ່ປະເທດໄທໄດ້ກັບຄືນບ້ານດ້ວຍຄວາມຄາດຫວັງວ່າຂໍ້ຈຳກັດຈະຖືກຍົກເລີກໃນໄວໆນີ້. ເຖິງຢ່າງໃດກໍ່ຕາມ, ເມື່ອວິກິດການໄດ້ແກ່ຍາວໄປ, ການຂາດເຂີນໃນການດຳລົງຊີວິດໃນຊຸມຊົນປະເທດຕົ້ນທາງໄດ້ຍູ້ດັນໃຫ້ເຂົາເຈົ້າກັບຄືນມາເຮັດວຽກຢູ່ໄທອີກ (ILO 2020d). ຄວາມກົດດັນນີ້ໄດ້ເພີ່ມຂຶ້ນເມື່ອເສດຖະກິດມຽນມາຕົກຕໍ່າ ໃນທ່າມກາງຄວາມຮຸນແຮງ ແລະ ການກົດດັນທາງການເມືອງ,ໃນວັນທີ 1 ເດືອນ ກຸມພາ ປີ 2021 ໄດ້ມີການກໍ່ລັດຖະປະຫານຂອງທະຫານ. ໃນກາງປີ 2021, ຊາຍແດນໄທ-ມຽນມາ ຍັງສືບຕໍ່ປິດ ແລະ ມີການກໍ່ລັດຖະປະຫານຂອງທະຫານຫຼາຍຂຶ້ນ, ເຊິ່ງເຮັດໃຫ້ແຮງງານເຄື່ອນຍ້າຍ ແລະ ຊາວອົບພະຍົບຕ້ອງເຂົ້າມາປະເທດໄທຜ່ານດ່ານບໍ່ເປັນທາງການ, ສ່ວນຫລາຍແລ້ວແມ່ນຜ່ານນາຍໜ້າທີ່ເກັບຄ່າທຳນຽມເກີນອັດຕາ (Blomberg 2021). ແຮງງານເຄື່ອນຍ້າຍເຫຼົ່ານີ້ອາດຈະມີຄວາມສ່ຽງຕໍ່ການຖືກຂູດຮີດແຮງງານ ແລະ ມີຂໍ້ຈຳກັດໃນການເຂົ້າເຖິງການບໍລິການສາທາລະນະ ແລະ ການປົກປ້ອງທາງສັງຄົມເນື່ອງຈາກສະຖານະທາງກົດໝາຍບໍ່ຖືກຕ້ອງ. [10]

ສຳລັບ ແຮງງານມຽນມາທີ່ຍັງຄົງຄ້າງຢູ່ໃນປະເທດໄທ, ໄດ້ປະສົບກັບລາຍຮັບຫຼຸດລົງ ແລະ ມີຄວາມຫຍຸ້ງຍາກໃນການສົ່ງເງິນໄປໃຫ້ຄອບຄົວຢູ່ທາງບ້ານນັບແຕ່ການກໍ່ລັດຖະ ປະຫານ ແລະ ສະຖານະການທີ່ມີຄວາມຫຍຸ້ງຍາກ. ແຮງງານເຄື່ອນຍ້າຍໄດ້ກາຍເປັນເປົ້າໝາຍຂອງການຕຳນິເພາະມີນັກການເມືອງໄທກ່າວຫາແຮງງານເຄື່ອນຍ້າຍວ່າເຮັດໃຫ້ເກີດການລະບາດຂອງພະຍາດໂຄວິດ-19 ເພີ່ມຂຶ້ນໃນບາງຂົງເຂດ (Reuters 2020; AFP 2020), ລວມທັງຈັງຫວັດສະມຸດສາຄອນເຊິ່ງເປັນສູນກາງຂອງອຸດສາຫະກຳອາຫານທະເລຂອງໄທ, ເຊິ່ງເປັນບ່ອນກັກກັນຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍ ແລະ ແຮງງານເຄື່ອນຍ້າຍໃນອຸດສາຫະກຳການປຸງແຕ່ງອາຫານທະເລເຊິ່ງໄດ້ຖືກບັງຄັບໃຊ້ໃນເດືອນທັນວາປີ 2020 (Yi and Wongsamuth 2021; Peter 2020).

7 Interview with Advocates for Public Interest Law (APIL), April 2021.
8 Interview with International Transport Workers’ Federation (ITF), April 2021.
9 See Sabrina Kouba and Nilim Baruah, *Access to the Labour Market for Admitted Migrant Workers in Asia and Related Corridors* (ILO, 2019).

### ມາດຕະການ ຄວບຄຸມພະຍາດໂຄວິດ 19 ຟອງສະບູ ແລະ ຕາປະທັບ

ລັດຖະບານໄທໄດ້ປະກາດໃຫ້ຈັງຫວັດສະມຸດສາຄອນ - ເຊິ່ງເປັນສູນກາງການຜະລິດອາຫານທະເລຂອງໄທ ແລະ ເມືອງທີ່ມີແຮງງານເຄື່ອນຍ້າຍເປັນສ່ວນໃຫຍ່ຢູ່ອ່າວໄທ ເປັນ "ເຂດຄວບຄຸມສູງສຸດ ແລະ ເຂັ້ມງວດ" ໃນເດືອນທັນວາ 2020. ເພື່ອລາຍງານຜົນກະທົບຂອງມາດຕະການປິດປະເທດເພື່ອຄວບຄຸມພະຍາດໂຄວິດ 19 ນັ້ນ, ເຄືອຂ່າຍສິດທິແຮງງານເຄື່ອນຍ້າຍໄທ (MWG) ໄດ້ຈັດສັນການເຮັດວຽກ ແລະ ເງື່ອນໄຂການດຳລົງຊີວິດຂອງແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ໂຮງງານປຸງແຕ່ງປາ, ເຮືອຫາປາ, ຜູ້ຂາຍອາຫານລະເຫຍູ່ຕະຫຼາດ ແລະ ຮ້ານອາຫານ.

"ນະໂຍບາຍ ຟອງສະບູ ແລະ ຕາປະທັບ (Bubble and Seal)" ທີ່ລັດຖະບານໄທໄດ້ຮັບຮອງເອົາໃນເດືອນກຸມພາ ປີ 2021 ຢູ່ຈັງຫວັດສະມຸດສາຄອນໄດ້ແນໃສ່ເປົ້າໝາຍແຮງງານທີ່ເຮັດວຽກໃນຂະແໜງປຸງແຕ່ງອາຫານທະເລ - ສ່ວນໃຫຍ່ແມ່ນແມ່ຍິງທີ່ເປັນແຮງງານເຄື່ອນຍ້າຍ - ການກວດພະຍາດໂຄວິດ 19 ໃຫ້ຄົນຈຳນວນຫຼາຍ. ຕາມການລາຍງານຂອງໜັງສືພິມໄດ້ໃຫ້ຮູ້ວ່າ, ແຮງງານ 7,878 ຄົນໃນຈຳນວນ 50,000 ຄົນໄດ້ກວດພົບຜູ້ຕິດເຊື້ອໂຄວິດ-19 (Bangkok Post 2021). ວິທີການໂຕ້ຕອບຂອງລັດຖະບານຕໍ່ກັບບັນຫານີ້ ແມ່ນໄດ້ປິດຈັງຫວັດສະມຸດສາຄອນ, ບໍ່ອະນຸຍາດໃຫ້ແຮງງານເຄື່ອນຍ້າຍທີ່ຂຶ້ນຖະບຽນຈຳນວນ 260,000 ຄົນ ເຄື່ອນຍ້າຍ ແລະ ອາດຈະມີແຮງງານເຄື່ອນຍ້າຍທີ່ບໍ່ມີເອກະສານຫຼາຍກວ່າ 140,000 ຄົນ (Wongsamuth 2021a). ນະໂຍບາຍ "ຟອງສະບູ" ຮຽກຮ້ອງໃຫ້ນາຍຈ້າງຂົນສົ່ງແຮງງານເຄື່ອນຍ້າຍຈາກບ້ານຂອງພວກເຂົາໄປຫາໂຮງງານ, ແລະ ແຮງງານທີ່ອາໃສຢູ່ຫ່າງໄກແມ່ນຈຳເປັນຕ້ອງໄດ້ຕິດຕັ້ງແອັບທາງໂທລະສັບມືຖືເພື່ອຕິດຕາມການເຄື່ອນໄຫວ. ຜູ້ຂາຍອາຫານໄດ້ມາຂາຍອາຫານຢູ່ໃນໂຮງງານເພື່ອໃຫ້ແຮງງານໄດ້ເດີນທາງລະຫວ່າງບ້ານກັບໂຮງງານເທົ່ານັ້ນ.

ໂຮງງານທີ່ໃຫ້ບ່ອນພັກເຊົາແກ່ແຮງງານຕ້ອງໄດ້ຮັບຮອງເອົານະໂຍບາຍ " ຕາປະທັບ (seal)", ໃນນັ້ນ ແຮງງານທີ່ພັກຢູ່ຫໍພັກທີ່ນາຍຈ້າງສະໜອງໃຫ້ແມ່ນຕ້ອງປະຕິບັດຕາມຂໍ້ຈຳກັດຄ້າຍຄືກັນກັບແຮງງານທີ່ເຄື່ອນໄຫວໃນກອບນະໂຍບາຍ"ຟອງສະບູ (bubble)" ແຕ່ຕ້ອງໄດ້ແຍກອອກຈາກຄອບຄົວ. ລັດຖະບານໄດ້ພະຍາຍາມຢ່າງຕັ້ງໜ້າເພື່ອຈຳກັດການເຄື່ອນໄຫວ, ຈົນໄດ້ເອົາໜາມໝາກຈັບມາລ້ອມກັນບໍລິເວນຫໍພັກສີເມືອງ, ເຊິ່ງເປັນຫໍພັກຂອງແຮງງານລ້ຽງກຸ້ງຈຳນວນຫລາຍຄົນ (MWG 2021). ແຮງງານ ແລະ ຄອບຄົວ ໄດ້ລາຍງານວ່າ ນະໂຍບາຍຂອງລັດຖະບານ ໄດ້ເຮັດໃຫ້ຫລາຍຄອບຄົວພົບກັບຄວາມອຶດຫິວຍ້ອນນາຍຈ້າງບໍ່ສະໜອງອາຫານພຽງພໍ 1

ແຮງງານທີ່ເຮັດວຽກໃນຂະແໜງປະມົງກໍໄດ້ຖືກກັກກັນເຊັ່ນກັນ. ແຮງງານທີ່ເດີນທາງມາຮອດທ່າເຮືອຈັງຫວັດສະມຸດສາຄອນແມ່ນຕ້ອງໄດ້ຢູ່ໃນເຮືອຕໍ່ໄປຈົນກ່ວາຜົນການກວດພະຍາດໂຄວິດ19 ເປັນລົບ, ເຂົາເຈົ້າໄດ້ຮັບເຄື່ອງໃຊ້ສອຍທີ່ຈຳເປັນຈາກເຮືອນ້ອຍ ແລະ ອາໄສຢູ່ໃນພື້ນທີ່ຄັບແຄບ.

10 Interview with ITF, April 2021.

ການຫຼຸດລົງຂອງການຜະລິດອາຫານທະເລເຮັດໃຫ້ຊົ່ວໂມງເຮັດວຽກຫຼຸດລົງ ແລະ ລາຍໄດ້ຫຼຸດລົງ. ແຮງງານເຄື່ອນຍ້າຍລາຍງານວ່າ ເຂົາເຈົ້າມີລາຍໄດ້ປະມານ 3,000 ບາດ (99 ໂດລາສະຫະລັດ) ຕໍ່ເດືອນ, ຫນ້ອຍກວ່າ 1/3 ຂອງລາຍຮັບສະເລ່ຍປະຈຳເດືອນ10,640 ບາດ (336 ໂດລາສະຫະລັດ) ໃນປີ 2019. ການທີ່ແຮງງານເຄື່ອນຍ້າຍສູນເສຍວຽກເຮັດງານທຳຈະໄດ້ຮັບການອຸດໜູນຫວ່າງງານຂອງລັດຖະບານແມ່ນມີຄວາມຫຍຸ້ງຍາກຫລາຍເນື່ອງຈາກນາຍຈ້າງລະເລີຍບໍ່ປະກອບເອກະສານການອຸດໜູນຈາກປະກັນສັງຄົມ, ເຮັດໃຫ້ແຮງງານຫຼາຍຄົນບໍ່ມີສິດໄດ້ຮັບການຊ່ວຍເຫຼືອຈາກລັດຖະບານ. ແຮງງານທີ່ມີປະກັນໄພຍັງປະເຊີນກັບອຸປະສັກຕ່າງໆ, ເນື່ອງຈາກວ່າ ກ່ອນຈະໄດ້ຮັບການອຸດໜູນ ລັດຖະບານຮຽກຮ້ອງໃຫ້ມີການຂຶ້ນທະບຽນປະກັນສັງຄົມ ແລະ ໜັງສືຢັ້ງຢືນຈາກນາຍຈ້າງ. ເຄືອຄ່າຍແຮງງານເຄື່ອນຍ້າຍ (MWG) ໄດ້ລາຍງານວ່າ ນາຍຈ້າງຫຼາຍຄົນບໍ່ໄດ້ສະຫນອງເອກະສານທີ່ຈຳເປັນ ຫຼື ໃຫ້ການຊ່ວຍເຫຼືອໃນການຍື່ນຂໍການອຸດໜູນຫວ່າງງານ ແລະ ນອກນັ້ນຍັງກີດກັ້ນແຮງງານບໍ່ໃຫ້ໄດ້ຮັບເງິນຊົດເຊີຍຈາກມື້ພັກວຽກໂດຍການບັງຄັບໃຫ້ເຂົາເຈົ້າເຊັນແບບຟອມລາອອກວຽກແບບສະໝັກໃຈ.

ນອກຈາກນະໂຍບາຍຟອງສະບູ ແລະ ຕາປະທັບຕາ ຈະສົ່ງຜົນກະທົບທາງລົບຕໍ່ແຮງງານແລ້ວ, ໂດຍສະເພາະແຮງງານເຄື່ອນຍ້າຍ, ລັດຖະບານໄທຍັງໄດ້ປະຕິບັດມາດຕະການທີ່ຄ້າຍຄືກັນນີ້ອີກຢູ່ 10 ແຂວງ ນັບແຕ່ເດືອນມິຖຸນາ ປີ 2021 (Associated Press 2021). ເຈົ້າໜ້າທີ່ສາທາລະນະສຸກໄດ້ກ່າວໂທດໃສ່ແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ສະຖານທີ່ກໍ່ສ້າງ ແລະ ໂຮງງານວ່າບໍ່ໃຫ້ຄວາມຮ່ວມມືກັບຂໍ້ແນະນຳສາທາລະນະສຸກ ແລະ ເຮັດໃຫ້ມີຈຳນວນກໍລະນີຕິດເຊື້ອເພີ່ມຂຶ້ນ. ໂດຍຊີ້ໃຫ້ເຫັນວ່າຈັງຫວັດສະມຸດສະຄອນເປັນຕົວຢ່າງທີ່ປະສົບຜົນສຳເລັດໃນກັກກັນ, ປະຈຸບັນ, ລັດຖະບານໄທໄດ້ຮຽກຮ້ອງໃຫ້ສະຖານທີ່ກໍ່ສ້າງ ແລະ ໂຮງງານກັກແຮງງານຂອງຕົນໄວ້ ເຊິ່ງເປັນການກີດກັ້ນການຫາລາຍໄດ້ ຫລື ອອກຈາກສະຖານທີ່ເຮັດວຽກ.

1 Thai Union Group reportedly delivered 30,000 cans of fish, 2,600 boxes of crackers and snacks, and 630 kilograms of frozen seabass to Samut Sakhon for quarantined workers (Thai Union 2021a).

ຊາວປະມົງ**ລາວ** ທີ່ໄປເຮັດວຽກຢູ່ມາເລເຊຍ ພະຍາຍາມກັບຄືນບ້ານ ຜ່ານປະເທດໄທ ຫລັງຈາກສະຖານທູດລາວປະຈຳ ກົວລາລຳເປີ ໄດ້ສັ່ງໃຫ້ແຮງງານເດີນທາງກັບບ້ານດ້ວຍທ້ຽວບິນເໝົາລຳທີ່ມີລາຄາສູງ. ແຮງງານຫລາຍຄົນທີ່ເດີນທາງດ້ວຍເສັ້ນທາງນີ້ຖືກຈັບຢູ່ໄທໃນຂໍ້ຫາຂ້າມຊາຍແດນຜິດກົດໝາຍ (RFA 2020).

ໃນ**ປະເທດອິນໂດເນເຊຍ,** ແຮງງານເຄື່ອນຍ້າຍຫຼາຍກວ່າ 100,000 ຄົນເດີນທາງກັບຄືນຈາວາ ພາກຕາເວັນຕົກ ເຊິ່ງເປັນແຂວງທີ່ມີປະຊາກອນຫຼາຍທີ່ສຸດຂອງປະເທດ, ໃນເດືອນມີນາ 2020 ເຈົ້າຄອງພາກພື້ນ ແລະ ປະທາ ນາທິບໍດີອິນໂດເນເຊຍ ທ່ານ ໂຈໂກ ວິໂດໂດ ໄດ້ຮຽກຮ້ອງໃຫ້ແຮງງານເຄື່ອນຍ້າຍບໍ່ໃຫ້ເດີນທາງກັບບ້ານເພື່ອປ້ອງກັນການແຜ່ລະບາດຂອງເຊື້ອໄວຣັສ (Chew 2020). ຄະນະບໍລິການແຫ່ງຊາດເພື່ອການປົກປ້ອງແຮງງານເຄື່ອນຍ້າຍອິນໂດເນເຊຍໄດ້ລາຍງານວ່າ, ແຮງງານເຄື່ອນຍ້າຍອິນໂດເນເຊຍທີ່ໄປເຮັດວຽກຢູ່ຕ່າງປະເທດ ປະມານ 33,503 ຄົນໄດ້ກັບຄືນບ້ານໃນເດືອນ ມີນາ 2020 (IOM 2020a). ຊາວປະມົງອິນໂດເນເຊຍທີ່ອອກຫາປາໃນແມ່ນ້ຳໃນໄລຍະໄກທີ່ກັບມາຈາກຕ່າງປະເທດໄດ້ລາຍງານວ່າ ໄດ້ກັບໄປເຮັດວຽກຢູ່ເຮືອປະມົງພາຍໃນປະເທດເຖິງວ່າຈະໄດ້ຮັບຄ່າຈ້າງຕ່ຳກໍຕາມ. [11]

**ຢູ່ຟີລິບປິນ**, ຂໍ້ຈຳກັດການເດີນທາງທີ່ໄດ້ຮັບການປະຕິບັດໃນ ເດືອນມີນາ ປີ 2020 ໄດ້ເຮັດໃຫ້ນັກເດີນທະເລຟີລິບປິນຢູ່ຕ່າງປະເທດຫຼາຍຄົນ ແລະ ຊາວປະມົງໄດ້ຕົກຄ້າງຢູ່ນອກປະເທດຟີລິບປິນ, ສ່ວນຫລາຍແລ້ວແມ່ນແຮງງານເຮັດວຽກຢູ່ເຮືອຫາປາທາງນ້ຳໃນໄລຍະໄກ. ພວກນັກເດີນທະເລ ແລະ ຊາວປະມົງພົບວ່າຕົນເອງຕ້ອງໄດ້ລໍຖ້າຢູ່ໃນທ່າເຮືອເປັນເວລາຫຼາຍເດືອນ. ເລື່ອງລາວຂອງຊາວປະມົງຟີລິບປິນຢູ່ໃນເຮືອປະມົງທີ່ຈີນຄຸ້ມຄອງ, ເຮືອງປະມົງທີ່ມີທຸງຂອງປານາມາໄດ້ຈັບພາບການເກີດຄວາມສັບສົນແລະຄວາມວິຕົກກັງວົນຂອງຊາວປະມົງທີ່ບໍ່ຍອມເຂົ້າທຽບທ່າກຳປັ່ນຢູ່ສິງກະໂປໄດ້ຢ່າງຊັດເຈນ:

ຂ່າວກ່ຽວກັບການລະບາດຂອງພະຍາດໂຄໂລນາໄດ້ແຜ່ລາມໄປທົ່ວໂລກໃນເວລານັ້ນ. ແຕ່ເນື່ອງຈາກວ່າເຮືອໄດ້ແລ່ນຢູ່ທ້ອງທະເລໂດຍເປົ່າປ່ຽວ ແລະ ຖືກຕັດຂາດຈາກໂລກພາຍນອກ, ການເຂົ້າເຖິງຂໍ້ມູນຂ່າວສານແມ່ນມີຄວາມຈຳກັດເພາະມີແຕ່ລູກເຮືອອາວຸໂສເທົ່ານັ້ນທີ່ນຳເອົາຂໍ້ມູນຂ່າວສານມາເຜີຍແຜ່. ອຸປະສັກທາງພາສາລະຫວ່າງຜູ້ບໍລິຫານຂອງຈີນຢູ່ເທິງເຮືອ ແລະລູກເຮືອຟີລິບປິນ, ອິນໂດເນເຊຍ ແລະ [ມຽນມາ] ແມ່ນບໍ່ໄດ້ກະກຽມ [ຊາວປະມົງ ແອນໂຕນີ,ມີດີນາ] ສຳລັບ ໂລກທີ່ຢຸດນີ້ງ ເພື່ອປ້ອງກັນການລະບາດຂອງພະຍາດໂຄວິດ 19 (Santos 2020).

ການປິດປະເທດຂອງ ສ. ເກົາຫຼີ ແລະ ຂໍ້ຈຳກັດການເດີນທາງໃນບັນດາປະເທດຕົ້ນທາງຂອງຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍ ໄດ້ປະໃຫ້ເຂົາເຈົ້າຕິດຄ້າງຢູ່ເທິງເຮືອປະມົງ ຫຼື ທ່າເຮືອ. ບັນດາຜູ້ສະໜັບສະໜຸນສິດທິແຮງງານໃຫ້ຂໍ້ສັງເກດວ່າ ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຫລາຍຄົນເດີນທາງມາປະເທດ ສ. ເກົາຫລີ ຕາມສັນຍາທີ່ໄດ້ເຈລະຈາຕໍ່ລອງກັນກັບບໍລິສັດຈັດຫາງານເອກະຊົນທີ່ບໍ່ມີການຄຸ້ມຄອງ, ແລະ ດັ່ງນັ້ນ, ຊາວປະມົງເຫຼົ່ານີ້ຈຶ່ງບໍ່ມີວິຊາທີ່ສາມາດເຂົ້າມາ ສ.ເກົາຫຼີໄດ້. ໃນກໍລະນີດັ່ງກ່າວນີ້, ແມ່ນກໍລະນີທີ່ແຮງງານຫລາຍຄົນສິ້ນສຸດສັນຍາເຮັດວຽກໃນຕອນຕົ້ນຂອງການລະບາດຂອງພະຍາດ ແລະ ບໍ່ສາມາດສົ່ງກັບຄືນ ປະເທດໄດ້ເຊັ່ນຫວຽດນາມ ແລະ ອິນໂດເນເຊຍ, - ແລະ ຍັງຖືກກີດກັ້ນບໍ່ໃຫ້ເຂົ້າປະເທດ ສ.ເກົາຫຼີ. ພວກເຂົາເຫລົ່ານັ້ນຖືກກັກໂຕຢູ່ໃນສະຖານທີ່ກວດຄົນເຂົ້າເມືອງ. ນັກຄົ້ນຄ້ວາໄດ້ພົບປະກັບຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຢູ່ສູນກາງເມືອງ ບູຊານ. ເຂົາເຈົ້າໄດ້ລາຍງານວ່າ ແຮງງານ 40 ຄົນຖືກກັກຂັງໃນສະພາບທີ່ແອອັດ. [12]

ຜູ້ສະໜັບສະໜຸນສິດທິແຮງງານ ແລະ ຜູ້ອອກລະບຽບການໄດ້ໃຫ້ສຳພາດໃນການສຶກສາຄົ້ນຄວ້າວ່າ ນາຍຈ້າງ ຫຼື ຜູ້ຈັດສົ່ງແຮງງານຫລີກລ້ຽງຂໍ້ຈຳກັດການຂ້າມຊາຍແດນດ້ວຍການສົ່ງຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຜ່ານປະເທດທີສາມເພື່ອຂຶ້ນເຮືອປະມົງຢູ່ທີ່ນັ້ນ. ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຈາກອາຊີຕາເວັນອອກສຽງໃຕ້ໄດ້ຖືກລາຍງານວ່າ ໄດ້ບິນໄປອາຟຣິກາໃຕ້ເພື່ອຂຶ້ນເຮືອປະມົງຂອງຈີນ, ແຕ່ສຳລັບຈຳນວນຂອງຊາວປະມົງທີ່ນຳໃຊ້ເສັ້ນທາງຜ່ານປະເທດທີສາມໄປຂຶ້ນເຮືອໃນໄລຍະປິດປະເທດແມ່ນບໍ່ມີການລາຍງານ. [13]

ສຳລັບຊາວປະມົງທີ່ໄປເຮັດວຽກຢູ່**ໄຕ້ຫວັນ (ຈີນ),** ການປິດຊາຍແດນຢູ່ ອິນໂດເນເຊຍ, ຟີລິບປິນ ແລະ ຫວຽດນາມ ໄດ້ສ້າງຄວາມຫຍຸ້ງຍາກອັນໃໝ່. ແຮງງານທີ່ອອກໄປຫາປາໃນນ້ຳໄລຍະໄກ ຍັງຄົງຢູ່ໃນທະເລເປັນເວລາດົນນານກາຍສັນຍາ ແລະ ບໍ່ໄດ້ພົບຄອບຄົວຂອງເຂົາເຈົ້າ (Marschke et. al 2020). ຄົນອື່ນຖືກກັກຂັງ ແລະ ຖືກເຈົ້າໜ້າທີ່ສົ່ງກັບຄືນປະເທດ.

ເຖິງແມ່ນວ່າທ່າເຮືອອຸດສາຫະກຳ ຍັງສືບຕໍ່ເປີດຢູ່ ແຕ່ແຮງງານເຄື່ອນຍ້າຍທີ່ມາຈາກເຮືອປະມົງປະເທດອື່ນ ຕ້ອງໄດ້ກັກໂຕ 14 ວັນ ຢູ່ໃນເຮືອ ຫລືຢູ່ໂຮງແຮມ ນີ້ກໍ່ໝາຍຄວາມວ່າເຂົາເຈົ້າຕ້ອງຂາດລາຍໄດ້ສອງອາທິດ (Marschke et. al, 2020).

ໃນໄລຍະການກັກກັນເຫຼົ່ານີ້, ຊາວປະມົງທີ່ຍັງຄ້າງຢູ່ເທິງເຮືອຢູ່ໃນຫ້ອງຂະໜາດນ້ອຍ, ບໍ່ສະດວກສະບາຍ ແລະ ບໍ່ມີບ່ອນນອນ, ແລະ ບາງຄົນລາຍງານວ່າບໍ່ມີອາຫານ ແລະ ນ້ຳດື່ມພຽງພໍ (Carvalho 2020).

ການນຳໃຊ້ທຸງໂດຍທົ່ວໄປເພື່ອຄວາມສະດວກຂອງບໍລິສັດໄຕ້ຫວັນ (ຈີນ) ໄດ້ເຮັດໃຫ້ສະຖານະພາບທາງກົດໝາຍຂອງແຮງງານເຄື່ອນຍ້າຍ ຈຳນວນຫຼາຍມີ

ການນຳໃຊ້ທຸງໂດຍທົ່ວໄປເພື່ອຄວາມສະດວກຂອງບໍລິສັດໄຕ້ຫວັນ (ຈີນ) ໄດ້ເຮັດໃຫ້ສະຖານະພາບທາງກົດໝາຍຂອງແຮງງານເຄື່ອນຍ້າຍ ຈຳນວນຫຼາຍມີ ຄວາມຫຍຸ້ງຍາກ ແລະ ເພີ່ມຂໍ້ຈຳກັດຫລາຍຂຶ້ນໃນເວລາເຂົ້າທຽບທ່າເຮືອ. ແຮງງານເຫຼົ່ານີ້ໄດ້ເຄື່ອນຍ້າຍມາໄຕ້ຫວັນ (ຈີນ), ຖືກຈ້າງໂດຍເຈົ້າຂອງເຮືອໄຕ້ຫວັນ (ຈີນ), ແຕ່ເຮັດວຽກຢູ່ໃນເຮືອທີ່ມີທຸງປະເທດອື່ນໆ. ດັ່ງນັ້ນ, ເມື່ອກັບຄືນສູ່ທ່າເຮືອຂອງໄຕ້ຫວັນ (ຈີນ), ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຈຶ່ງປະເຊີນກັບການເຂົ້າເມືອງທີ່ບໍ່ຊັດເຈນ ເພາະວ່າພວກເຂົາຢູ່ເຮືອຕ່າງປະເທດ. ໃນຕົ້ນປີ 2020, ແຮງງານເຄື່ອນຍ້າຍຈຳນວນ140 ກວ່າຄົນໄດ້ຕິດຄ້າງຢູ່ທ່າເຮືອ ກາວຊຶງ ຊີຈິນ ເນື່ອງຈາກຂາດການອະນຸຍາດເຂົ້າເມືອງ. ຫຼັງຈາກເກືອບຫນຶ່ງເດືອນທີ່ຖືກຕິດຢູ່ໃນເຮືອ, ພວກເຂົາຖືກຈັດປະເພດເປັນ "ຄົນເຂົ້າເມືອງຜິດກົດຫມາຍ" ແລະ ຖືກເນລະເທດອອກຈາກປະເທດ. ຊາວປະມົງຟີລິບປິນສອງຄົນໄດ້ເຊົາເຮັດວຽກຢູ່ເຮືອຂອງພວກເຂົາ ເພື່ອກັບຄືນບ້ານແຕ່ຖືກຈັບໃນຂໍ້ຫາ "ເຂົ້າເມືອງຜິດກົດຫມາຍ" ແລະ ຖືກກັກຂັງຢູ່ສະຫນາມບິນເປັນເວລາ 20 ມື້ໃນເດືອນພຶດສະພາ 2020 (Chia-nan 2020). ເຈົ້າໜ້າທີ່ກວດຄົນເຂົ້າເມືອງແຫ່ງຊາດໄດ້ລະບຸວ່າ ເຂົາເຈົ້າເປັນແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ ແລະ ດ້ວຍເຫດນີ້ຈຶ່ງຖືກເນລະເທດອອກຈາກປະເທດ. ຊາວປະມົງຟີລິບປິນອີກຄົນໜຶ່ງລາຍງານວ່າຖືກລັອກຢູ່ໃນຫ້ອງຢູ່ເທິງເຮືອຢູ່ທີ່ທ່າເຮືອ ກາວຊຶງ ໃນເດືອນ ເມສາ 2020, ແລະ ຈາກນັ້ນນາຍໜ້າຈັດສົ່ງແຮງງານໄດ້ສົ່ງໃຫ້ເຈົ້າໜ້າທີ່ (HWRG 2020).

## ການຂາດການປົກປ້ອງສິດທິຂອງຜູ້ອອກແຮງງານເຮັດໃຫ້ຜົນກະທົບ ຂອງໂຄວິດ 19 ມີຄວາມຮຸນແຮງຫລາຍຂຶ້ນ

ຄວາມຫນາແຫນ້ນຂອງສະຫະພັນການຄ້າຊາວປະມົງໃນອາຊີແມ່ນຕ່ຳຫຼາຍ. ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍ,ຖືກອະນຸຍາດໃຫ້ຈັດຕັ້ງຢູ່ໃນຫຼາຍປະເທດ, ແມ່ນປະເຊີນກັບຂໍ້ຈຳກັດອັນສຳຄັນຕໍ່ຄວາມສາມາດໃນການເຂົ້າຮ່ວມອົງການຈັດຕັ້ງຂອງຜູ້ອອກແຮງງານ, ລວມທັງຂໍ້ຫ້າມທາງກົດໝາຍ, ຂໍ້ຈຳກັດທາງພູມສັນຖານທີ່ຈະເຂົ້າເຖິງ ແລະ ຄວາມສາມາດຂອງສະຫະພັນ, ຄວາມຮູ້ສຶກຕໍ່ຕ້ານແຮງງານເຄື່ອນຍ້າຍ, ການສະກັດກັ້ນຂອງນາຍຈ້າງ ແລະ ການຂາດສະຖານະພາບທາງກົດຫມາຍ.

ໃນ**ປະເທດອິນໂດເນເຊຍ**,ຍົກຕົວຢ່າງ, ຊາວປະມົງໃນອຸດສາຫະກຳແຄມທະເລໄດ້ຖືກຈັດຕັ້ງເປັນຈຳນວນນ້ອຍໆເຊິ່ງເປັນສ່ວນຫນຶ່ງຂອງ ກົສາຕວນ ປີລອດອິນໂດເນເຊຍ (Kesatuan Pelaut Indonesia) - ສະຫະພັນນັກເດີນເຮືອອິນໂດເນເຊຍ - ແລະ ເຂົ້າຮ່ວມໃນການສົນທະນານະໂຍບາຍສາມຝ່າຍ, ແຕ່ຍັງບໍ່ທັນບັນລຸການຕໍ່ລອງລວມໝູ່ກັບນາຍຈ້າງ.

11 Interview with Environmental Justice Foundation (EJF), April 2021.
12 Interview with APIL, April 2021.
13 Interviews with APIL and the South African Maritime Safety Authority (SAMSA), April 2021.

ໃນ**ສາທາລະນະລັດເກົາຫຼີ,** ການສືບສວນເດືອນ ມິຖຸນາ 2020 ໂດຍ APIL ແລະ ມູນນິທິຍຸຕິທຳສິ່ງແວດລ້ອມ (EJF) ພົບວ່າຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຢູ່ໃນເຮືອປະມົງທີ່ຫາປາຢູ່ໃນໄລຍະໄກຂອງສາທາລະນະລັດເກົາຫຼີ - ທັງກ່ອນ ແລະ ໃນໄລຍະການແຜ່ລະບາດຂອງພະຍາດ - ແມ່ນ "ການໂຈມຕີທີ່ຮຸນແຮງ ແລະ ກິດຈະກຳທີ່ຜິດກົດຫມາຍ". ອີງຕາມການສືບສວນເຮືອ 40 ລຳ, APIL ແລະ EJF ພົບວ່າ ແຮງງານເຄື່ອນຍ້າຍຫລາຍກວ່າ 25 ເປີເຊັນໄດ້ຖືກລ່ວງລະເມີດທາງຮ່າງກາຍ, ແລະ 63 ເປີເຊັນລາຍງານການລ່ວງລະເມີດທາງຄຳເວົ້າ. ຫຼາຍກວ່າ 50 ເປີເຊັນຂອງຊາວປະມົງລາຍງານວ່າເຮັດວຽກຫຼາຍກວ່າ 18 ຊົ່ວໂມງຕໍ່ມື້. ຜູ້ອອກແຮງງານຍັງໄດ້ຖືກຍຶດຫນັງສືຜ່ານແດນ ແລະ ຍຶດເງິນໄວ້ເພື່ອ "ຂັດຂວາງພວກເຂົາຈາກການຫລົບຫນີຈາກສະພາບແວດລ້ອມທີ່ໂຫດຮ້າຍເຫຼົ່ານີ້" (Chase 2021).

ໃນເດືອນ ມິຖຸນາ ປີ 2020, ລັດຖະບານສ.ເກົາຫຼີໄດ້ອອກຄຳຂໍໂທດ ແລະ ລະບຸມາດຕະການແກ້ໄຂການລະເມີດສິດທິມະນຸດຂອງຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍ. ກະ ຊວງມະຫາສະໝຸດ ແລະ ການປະມົງ (MOF) ໄດ້ປະກາດບັນດາມາດຕະການ ໃນນັ້ນມີແຜນການສ້າງບົດບັນທຶກຄວາມເຂົ້າໃຈ (MOU) ກັບບັນດາປະເທດຕົ້ນທາງ, ການຈັດຕັ້ງລະບົບຈັດຫາແຮງງານເຄື່ອນຍ້າຍຂອງພາກລັດ, ແລະ ເພີ່ມທະວີການກວດກາສະພາບເງື່ອນໄຂຂອງຊາວປະມົງໜຶ່ງຫາສອງຄັ້ງຕໍ່ປີ. ກະຊວງມະຫາສະໝຸດ ແລະ ການປະມົງ (MOF) ຍັງໃຫ້ຄຳໝັ້ນສັນຍາວ່າຈະສ້າງມາດຕະຖານທີ່ພັກອາໄສຂອງເຮືອຫາປາທີ່ມີນ້ຳໜັກ 20 ໂຕນຂຶ້ນໄປ (Jin 2020).

**ຢູ່ໄທ,** ແຮງງານເຄື່ອນຍ້າຍຖືກປະຕິເສດສິດທິໃນການສ້າງຕັ້ງ ຫຼື ນຳພາສະຫະພັນ, ເປັນການລະເມີດມາດຕະຖານແຮງງານສາກົນ. ເຖິງວ່າຈະມີຂໍ້ຈຳກັດດັ່ງກ່າວກໍ່ຕາມ, ແຕ່ຊາວປະມົງກຳປູເຈຍ ແລະ ມຽນມາ ໄດ້ສ້າງເຄືອຂ່າຍສິດທິຊາວປະມົງ (FRN) ຢູ່ຕາມທ່າເຮືອຕ່າງໆຂອງໄທ ໂດຍໄດ້ຮັບການສະໜັບສະໜູນຈາກສະຫະພັນແຮງງານຂົນສົ່ງສາກົນ (ITF). ໃນປີ 2020, FRN ໄດ້ສົມທົບກັບເຈົ້າຂອງເຮືອເພື່ອເຈລະຈາຕໍ່ລອງຂໍ້ຕົກລົງດ້ານສຸຂະພາບ ແລະ ຄວາມປອດໄພ ເຊິ່ງລວມມີການສະຫນອງຢາ ແລະອຸປະກອນການປະຖົມພະຍາບານຂັ້ນຕົ້ນໃນເວລາເດີນເຮືອ, ການຝຶກອົບຮົມຄວາມປອດໄພໃຫ້ລູກເຮືອ, ການໃຊ້ອຸປະກອນປ້ອງກັນສ່ວນບຸກຄົນ, ວັນພັກລາປ່ວຍທີ່ໄດ້ຮັບຄ່າຈ້າງ ແລະ ເງື່ອນໄຂການກັບເຮືອຄືນສູ່ຝັ່ງທັນທີເພື່ອປິ່ນປົວຊາວປະມົງທີ່ໄດ້ຮັບບາດເຈັບໜັກ ຫຼື ເຈັບປ່ວຍໜັກ. ຂໍ້ກຳນົດສ່ວນໃຫຍ່ໃນຂໍ້ຕົກລົງລວມໝູ່ແມ່ນມີຢູ່ແລ້ວ ແຕ່ສ່ວນໃຫຍ່ແມ່ນບໍ່ໄດ້ຖືກບັງຄັບໃຊ້ໃນກົດໝາຍໄທ. ເຖິງຢ່າງໃດກໍ່ຕາມ, ຂໍ້ຕົກລົງມີຂໍ້ສັງເກດຢູ່ 2 ດ້ານຄື: (1) ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍໄດ້ສຳເລັດການສ້າງການຕໍ່ລອງລວມໝູ່ຄັ້ງທຳອິດຢູ່ປະເທດໄທ; ແລະ (2) ຂໍ້ຕົກລົງຮຽກຮ້ອງໃຫ້ນາຍຈ້າງ ແລະ ຊາວປະມົງແກ້ໄຂຂໍ້ຂັດແຍ່ງພາຍໃຕ້ສັນຍາພາຍໃນ 30 ວັນ.[14]

14 Interview with ITF, April 2021.

### ຊ່ອງຫວ່າງຂອງການຂົນສົ່ງ-ການປະມົງ

ເຊັ່ນດຽວກັບຊາວປະມົງທີ່ເປັນການຄ້າ, ນັກເດີນທະເລທີ່ແລ່ນເຮືອຂົນສົ່ງສິນຄ້າຜ່ານມະຫາສະໝຸດຂອງໂລກແມ່ນມີຄວາມສ່ຽງຕໍ່ຜົນກະທົບຂອງການລະບາດຂອງພະຍາດໂຄວິດ19. ນັກເດີນທະເລໃນທົ່ວໂລກປະມານ 400,000 ໄດ້ຖືກປະຢູ່ໃນເຮືອເປັນເວລາຫຼາຍເດືອນໃນແຕ່ລະຄັ້ງທີ່ອອກເດີນທາງ, ໃນນັ້ນມີຫຼາຍຄົນຕ້ອງໄດ້ຢູ່ໃນເຮືອເປັນເວລາຍາວນານພາຍຫລັງສິ້ນສຸດສັນຍາການເຮັດວຽກ. ນັກເດີນທະເລ 926 ຄົນໄດ້ເຂົ້າຮ່ວມໃນການສຳຫລວດຂອງສະຫະພັນແຮງງານຂົນສົ່ງສາກົນ (ITF). ການສຳຫລວດພົບວ່ານັກເດີນທະເລ 59 ເປີເຊັນ ຕ້ອງໄດ້ຕໍ່ສັນຍາການເຮັດວຽກຍ້ອນວ່າພວກເຂົາບໍ່ສາມາດຈັດປ່ຽນລູກເຮືອ. ໃນການສຳຫຼວດດຽວກັນກໍໄດ້ພົບວ່າ ນັກເດີນທະເລ 26 ເປີເຊັນ ໄດ້ຢູ່ໃນເຮືອດົນກວ່າໄລຍະເວລາສູງສຸດ 11 ເດືອນທີ່ສົນທິສັນຍາສາກົນໄດ້ກຳນົດໄວ້ - ນັກເດີນທະເລຈຳນວນໜຶ່ງໄດ້ຢູ່ໃນເຮືອຍາວເຖິງ 18 ເດືອນ (McDonald 2020).

ເຊັ່ນດຽວກັນກັບຊາວປະມົງອື່ນໆ, ນັກເດີນທະເລຫຼາຍຄົນແມ່ນແຮງງານເຄື່ອນຍ້າຍມາຈາກຟີລິບປິນ, ອິນເດຍ, ສະຫະພັນລັດເຊຍ ແລະ ຈີນ ເພື່ອເຮັດວຽກຢູ່ເຮືອປະມົງທີ່ມີທຸງຕ່າງປະເທດ. ການປິດຖ້ຽວບິນໝາຍຄວາມວ່ານັກເດີນທະເລທີ່ສາມາດລົງຈາກເຮືອໄດ້ ຖືກຕິດຄ້າງຢູ່ໃນທ່າເຮືອຂອງປະເທດ (Northam 2021).

ນັກເດີນທະເລມີຂໍ້ຕົກລົງການຕໍ່ລອງລວມໝູ່ສາກົນໂດຍຜ່ານສະຫະພັນຂອງພວກເຂົາ, ສະຫະພັນແຮງງານຂົນສົ່ງສາກົນ (ITF). ຜູ້ຕາງຫນ້າ ITF ໃຫ້ຂໍ້ສັງເກດວ່າ ການປຶກສາຫາລືກັບບໍລິສັດຂົນສົ່ງຂອງເດນມາກ Maersk ໃນເດືອນຕົ້ນໆຂອງການແຜ່ລະບາດຂອງພະຍາດ ໄດ້ເຮັດໃຫ້ມີການກຳນົດມາດຕະຖານແຮງງານຂັ້ນຕ່ຳສຳລັບນັກເດີນທະເລຢູ່ໃນເຮືອຂອງ Maersk ທັງຫມົດ. ຂໍ້ຕົກລົງດັ່ງກ່າວລວມມີທີ່ພັກໂຮງແຮມສຳລັບນັກເດີນທະເລ ເພື່ອໃຫ້ພວກເຂົາໄດ້ກັກກັນຕົນເອງ ລວມທັງຖ້ຽວບິນ ແລະ ການປ່ຽນເຮືອ (Coyne 2021). ມາດຕະຖານແຮງງານຂັ້ນຕ່ຳສຳລັບນັກເດີນທະເລຍັງໄດ້ຖືກຮັບຮອງຈາກສົນທິສັນຍາວ່າດ້ວຍແຮງງານເດີນເຮືອໃນທະເລຂອງອົງການ ILO ປີ 2006, ສົນທິສັນຍາດັ່ງກ່າວໄດ້ຮັບການປັບປຸງ (MLC, 2006) ຊຶ່ງໄດ້ຮັບການໃຫ້ສັດຕະຍາບັນຈາກ 97 ປະເທດສະມາຊິກ, ໃນນັ້ນມີ ອິນໂດເນເຊຍ, ຍີ່ປຸ່ນ, ສ.ເກົາຫຼີ, ໄທ ແລະ ຫວຽດນາມ.

ເຖິງແມ່ນວ່າກຳລັງແຮງງານໃນການປະມົງໃນທົ່ວໂລກມີຂະໜາດໃຫຍ່ກວ່າກຳລັງແຮງງານໃນການຂົນສົ່ງປະມານ 20 ເທົ່າ 1 ແຕ່ຊາວປະມົງ ຍັງບໍ່ໄດ້ຖືກຄຸ້ມຄອງດ້ວຍສັນຍາຜູກພັນສາກົນກັບເຈົ້າຂອງເຮືອປະມົງ, ຜູ້ຊື້ ແລະ ຜູ້ຄ້າລາຍຍ່ອຍ. ຄວາມແຕກໂຕນກັນນີ້ອາດຈະກ່ຽວຂ້ອງກັບການຈັດຕັ້ງ ແລະ ການເຄື່ອນໄຫວໃນລະດັບສູງຂອງອຸດສາຫະກຳຂົນສົ່ງ ແລະ ອົງການຈັດຕັ້ງຂອງຜູ້ອອກແຮງງານ. ສະພາການຂົນສົ່ງສາກົນ (ICS) ແລະ ITF ໄດ້ສ້າງເຄື່ອງມືທີ່ມີຄວາມຫຼາກຫຼາຍໃນການຄຸ້ມຄອງແຮງງານ ແລະ ຮັກສາການປຶກສາຫາລືໃຫ້ມີປະສິດທິຜົນ. ອຸດສາຫະກຳການຄ້າການປະມົງໃນທົ່ວໂລກຂາດອົງການຈັດຕັ້ງຂອງເຈົ້າຂອງເຮືອປະມົງສາກົນທີ່ຄ້າຍຄືກັບ ICS.

ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ, MLC, 2006 ໄດ້ຮັບການໃຫ້ສັດຕະຍາບັນຈາກ 97 ປະເທດ, ແລະ ສອດຄ່ອງກັບມາດຕະຖານແຮງງານສາກົນເພື່ອການປະມົງ - ສົນທິສັນຍາ ການເຮັດວຽກຢູ່ໃນຂະແໜງປະມົງ, 2007 (ສະບັບເລກທີ 188) - ມາຮອດປະຈຸບັນມີພຽງແຕ່ 19 ປະເທດເທົ່ານັ້ນທີ່ໃຫ້ສັດຕະຍາບັນ. ໃນບັນດາປະເທດທີ່ໄດ້ກວດກາຢູ່ໃນບົດລາຍງານນີ້, ປະເທດໄທເປັນປະເທດດຽວທີ່ໄດ້ໃຫ້ສັດຕະຍາບັນສົນທິສັນຍາ, ໄດ້ຮັບຮອງໃນປີ 2019 ຫຼັງຈາກສະຫະພາບເອີລົບ ແລະ ອົງການ ILO ໄດ້ມີໂຄສະນາເຜີຍແຜ່ຢ່າງເອົາຈິງເອົາຈັງ ເພື່ອຕ້ານການລ່ວງລະເມີດແຮງງານໃນອຸດສາຫະກຳການປະມົງ.

ຄວາມແຕກໂຕນດັ່ງກ່າວຂະຫຍາຍອອກໄປນອກສົນທິສັນຍາຂອງອົງການ ILO, ເຄື່ອງມືປົກຄອງຂອງສາກົນ ແລະ ການຕໍ່ລອງ, ເພື່ອປະກອບເຂົ້າໃນການສົນທະນາດ້ານນະໂຍບາຍ, ລະບຽບການຂອງລັດ ແລະ ເອກະຊົນ, ຄວາມສົນໃຈຂອງສື່ມວນຊົນ ແລະ ການສຶກສາຄົ້ນຄວ້າ. ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ19, ຊ່ອງຫວ່າງນີ້ແມ່ນເພື່ອໃຫ້ບັນດາຜູ້ວາງນະໂຍບາຍ ແລະ ອົງການຈັດຕັ້ງຮ່ວມມືຫລາຍຝ່າຍໄດ້ເອົາໃນໃສ່ ແລະ ລົງທຶນໃສ່ການຂົນສົ່ງທາງທະເລໃຫ້ຫລາຍຂຶ້ນຕື່ມ.

ວຽກງານກ່ຽວກັບບັນຫາການປະມົງເບິ່ງຄືວ່າຖືກດຶງໄປປົນກັບການຂົນສົ່ງສິນຄ້າ. ເອກະສານແນະນຳ "ການສົ່ງເສີມມາດຕະການສາທາລະນະສຸກເພື່ອຕອບໂຕ້ກັບພະຍາດໂຄວິດ19 ກ່ຽວກັບເຮືອບັນທຸກສິນຄ້າ ແລະ ເຮືອປະມົງ" ຂອງອົງການອະນາໄມໂລກ ແລະ ໄດ້ຮັບການປະກອບສ່ວນຈາກອົງການ ILO ແລະ ອົງການການເດີນທະເລສາກົນ ເຊິ່ງລວມມີຂໍ້ແນະນຳກ່ຽວກັບເຮືອປະມົງ ແລະ ການຂົນສົ່ງສິນຄ້າ (WHO 2020). ວຽກງານການປະມົງບາງຄັ້ງກໍ່ຖືກຕັດອອກ ເຊັ່ນ, ໃນ 2020 ເອກະສານຂອງອົງການສະຫະປະຊາຊາດຕໍ່ກັບຄວາມສ່ຽງດ້ານສິດທິມະນຸດທາງທະເລ ແລະ ວິກິດການປ່ຽນລູກເຮືອໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ19 ນັ້ນ ບໍ່ມີການອ້າງອີງເຖິງການປະມົງ (United Nations Global Compact et al. 2021).

1 International Chamber of Shipping (2021) estimates that in 2021 there were 1.89 million seafarers in the global workforce. The FAO (2020) estimates that in 2020 there were 39 million at work in the global fishing industry.

### ລາຍໄດ້ຫຼຸດລົງ ແລະ ຖືກລັກລອບເງິນຄ່າຈ້າງໃນຊ່ວງການແຜ່ລະບາດຂອງພະຍາດ

ລາຍໄດ້ຫຼຸດລົງ ແລະ ການສູນເສຍວຽກເຮັດງານທຳທີ່ເກີດຈາກການຫຼຸດລົງຂອງກິດຈະກຳການປະມົງ ແມ່ນເປັນບັນຫາອັນຮີບດ່ວນທີ່ສຸດສຳລັບຊາວປະມົງໃນປີ 2020. ການປັບປຸງຄ່າຈ້າງກໍແມ່ນວິທີການໜຶ່ງ - ຜູ້ຕາງໜ້າສະຫະພັນໃນປະເທດໄທສັງເກດເຫັນວ່າ ເຈົ້າຂອງເຮືອຈຳນວນໜຶ່ງເພີ່ມເປີເຊັນຂອງຈຳນວນປາທີ່ຊາວປະມົງຫາໄດ້ - ຍ້ອນວ່າຕ້ອງການເພີ່ມວຽກຫລາຍຂຶ້ນຢູ່ໃນເຮືອທີ່ຂາດລູກເຮືອ. [15]

15 Interview with the ITF, April 2021.

16 See, for example, Worker Rights Consortium, *Hunger in the Apparel Supply Chain: Survey Findings on Worker's Access to Nutrition during COVID-19*, 2020.

ໃນເດືອນ ຕຸລາ ປີ 2020 ໃນການສຳຫຼວດຂອງອົງການ IOM ຜູ້ສະໜັບສະໜູນສິດທິແຮງງານເຄື່ອນຍ້າຍໃນປະເທດໄທໄດ້ຈັດອັນດັບການຫຼຸດລາຍຮັບ ແລະ ການສູນເສຍວຽກເຮັດງານທຳໃຫ້ເປັນບັນຫາຫລັກ, ແຕ່ບໍ່ມີຂໍ້ມູນກ່ຽວກັບການປະມົງໂດຍສະເພາະ. ແຮງງານທີ່ເຮັດວຽກໃນອຸດສາຫະກຳອື່ນໆທີ່ໄດ້ຮັບຄ່າຈ້າງຕ່ຳຢູ່ອາຊີຕາເວັນອອກສຽງໃຕ້ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດລະບາດໄດ້ລາຍງານວ່າ ເຂົາເຈົ້າມີລາຍໄດ້ຫຼຸດລົງ, ສູນເສຍວຽກເຮັດງານທຳ ແລະ, ໃນບາງກໍລະນີ, ມີການອຶດຫິວ ຫຼື ຄວາມບໍ່ຫມັ້ນຄົງດ້ານສະບຽງອາຫານ [16]

ການຫຼຸດລົງຂອງຄ່າຈ້າງ ແລະ ລາຍໄດ້ຂອງຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍແນ່ນອນມີຜົນກະທົບອັນດັບສອງຕໍ່ຄອບຄົວຂອງພວກເຂົາຢູ່ປະເທດຕົ້ນທາງ. ເມື່ອທຽບໃສ່ການສົ່ງເງິນກັບບ້ານຂອງແຮງງານເຄື່ອນຍ້າຍ, ລວມທັງຊາວປະມົງ, ເປັນອັດຕາສ່ວນຂອງລວມຍອດຜະລິດຕະພັນພາຍໃນປະເທດ (GDP) ແຕ່ປີ 2019 ຫາ 2020, ການລາຍງານຂອງທະນາຄານໂລກສະແດງໃຫ້ເຫັນວ່າ ການສົ່ງເງິນກັບບ້ານໃນທົ່ວໂລກຫຼຸດລົງ 1,6%. ບັນດາປະເທດຕົ້ນທາງຂອງແຮງງານເຄື່ອນຍ້າຍຢູ່ໃນບົດລາຍງານນີ້ , ການສົ່ງເງິນໄປມຽນມາໄດ້ຫຼຸດລົງຈາກ 4,3 ເປີເຊັນຂອງ GDP ເປັນ 2,8 ເປີເຊັນ; ການສົ່ງເງິນໄປອິນໂດເນເຊຍຫຼຸດລົງຈາກ 1,0% ມາເປັນ 0,9% ຂອງ GDP; ການສົ່ງເງິນໄປຟີລິບປິນຫຼຸດລົງ 9,9 ເປີເຊັນຫາ 9,6 ເປີເຊັນຂອງ GDP; ແລະ ການສົ່ງເງິນໄປກຳປູເຈຍໄດ້ຫຼຸດລົງຈາກ 5,9% ມາເປັນ 4,9% ຂອງ GDP (World Bank, n.d.)

ການປິດຊາຍແດນຢ່າງກະທັນຫັນ ແລະ ການຈຳກັດການເດີນທາງ, ແຮງງານເຄື່ອນຍ້າຍຫຼາຍຄົນໄດ້ລາຍງານການຖືກລັກລອບເງິນຄ່າຈ້າງ ຍ້ອນວ່ານາຍຈ້າງໄດ້ສວຍໃຊ້ສະຖານະການທີ່ບໍ່ແນ່ນອນຂອງແຮງງານ. ຈາກການສຳຫລວດຂອງອົງການ ILO ແຮງງານເຄື່ອນຍ້າຍ 309 ຄົນໄດ້ຖືກຈ້າງງານຢູ່ອາຊີຕາເວັນອອກສຽງໃຕ້ໃນເດືອນ ມີນາ ແລະ ເດືອນ ເມສາ ປີ 2020. ການສຳພາດໄດ້ເປີດເຜີຍໃຫ້ຮູ້ວ່ານອກຈາກການຖືກໂຈະວຽກແບບກະທັນຫັນ, ແຮງງານເຄື່ອນຍ້າຍໄດ້ປະສົບກັບ "ການເລື່ອນເວລາໃນການຮັບຄ່າຈ້າງ, ຫຼຸດຄ່າຈ້າງ, ຫຼືບໍ່ໄດ້ຮັບຄ່າຈ້າງ" (ILO 2020c). ສຳລັບແຮງງານທີ່ກັບຄືນບ້ານ, ຂະບວນການດັ່ງກ່າວ ແມ່ນເລັ່ງດ່ວນຍ້ອນຢ້ານຖືກຈັບ, ປິດຊາຍແດນ ແລະ ຂາດວຽກເຮັດງານທຳ. ດັ່ງນັ້ນ, ແຮງງານທີ່ບໍ່ໄດ້ຮັບຄ່າຈ້າງເຕັມແມ່ນບໍ່ມີວິທີທີ່ຈະຖວງເອົາເງິນເດືອນທີ່ສູນເສຍໄປຄືນ, ຍ້ອນວ່າເຂົາເຈົ້າຕ້ອງເດີນທາງອອກປະເທດທັນທີ ແລະ ບໍ່ມີທາງຕິດຕໍ່ກັບນາຍຈ້າງ.

ແຮງງານເຄື່ອນຍ້າຍທີ່ພັກເຊົາຢູ່ໃນປະເທດປາຍທາງຍັງປະສົບກັບການຕັດຄ່າຈ້າງໂດຍບໍ່ມີເຫດຜົນ.

ແຮງງານຄົນໜຶ່ງທີ່ເຮັດວຽກໃນໂຮງງານແຫ່ງ ໜຶ່ງຢູ່ໄທໄດ້ເປີດເຜີຍວ່າ ຄ່າຈ້າງໃນການເຮັດວຽກ 13 ມື້ ໄດ້ຫຼຸດລົງຈາກ 7,500 ບາດ (234 ໂດລາສະຫະລັດ) ເປັນ 3,500 ບາດ (109 ໂດລາ), ຖືກຕັດເງິນຫຼາຍກວ່າ 50 ເປີເຊັນ (ILO 2020c). ນອກນີ້,ແຮງງານຈຳນວນໜຶ່ງທີ່ຍັງເຮັດວຽກຢູ່ກໍຖືກບັງຄັບໃຫ້ເຮັດເຊັ່ນນັ້ນ. ຈາກອຸດ ສາຫະກຳການປະມົງໄປສູ່ອຸດສາຫະກຳວຽກໃນຄົວເຮືອນ, ແຮງງານໄດ້ອະທິບາຍວ່າ ພວກເຂົາບໍ່ສາມາດກັບບ້ານໄດ້, ເພາະວ່າໜັງສືຜ່ານແດນ ແລະ ເອກະສານທາງກົດໝາຍຂອງພວກເຂົາຖືກນາຍຈ້າງຍຶດໄວ້. ການຕິດຢູ່ປະເທດປາຍທາງ, ຄົນງານເຫຼົ່ານີ້ຕ້ອງໄດ້ເອື່ອຍອີງໃສ່ນາຍຈ້າງໃນປະຈຸບັນຂອງເຂົາເຈົ້າເພື່ອໃຫ້ມີລາຍໄດ້ ແລະ ຮັກສາສະຖານະພາບທາງກົດໝາຍ. ແຮງງານປະມົງຄົນໜຶ່ງຢູ່ໄທຈື່ໄດ້ວ່າໄດ້ຮັບຄ່າຈ້າງ 100 ບາດ (3 ໂດລາສະຫະລັດ) ຕໍ່ມື້ – ໜ້ອຍກວ່າຄ່າຈ້າງລາຍວັນຂັ້ນຕ່ຳທີ່ກົດໝາຍກຳນົດ – ແຕ່ເນື່ອງຈາກນາຍຈ້າງຄວບຄຸມເອກະສານປະຈຳຕົວຂອງຜູ້ອອກແຮງງານ, ຊາວປະມົງຕ້ອງຮັບເອົາຄ່າຈ້າງເຫຼົ່ານີ້ ແລະ ສືບຕໍ່ເຮັດວຽກ (ILO 2020c).

### ການປົກປ້ອງສຸຂະພາບ ແລະ ຄວາມປອດໄພບໍ່ເປັນບູລິມະສິດ

ການປະມົງໄດ້ຮັບການຍອມຮັບວ່າເປັນອາຊີບທີ່ອັນຕະລາຍ, ການທີ່ຕ້ອງໄດ້ຢູ່ໃກ້ຊິດກັນຢູ່ໃນເຮືອ; ຂາດສະບຽງເປັນປົກກະຕິ, ລວມທັງອຸປະກອນປ້ອງກັນສ່ວນບຸກຄົນ (PPE); ແລະ ການເຂົ້າເຖິງການປິ່ນປົວເປັນໄລຍະໃນໄລຍະການແຜ່ລະບາດຂອງໄວຣັດທາງອາກາດ ໄດ້ເພີ່ມຄວາມສ່ຽງຕໍ່ຊາວປະມົງຢ່າງຫຼວງຫຼາຍ (Siamhan and Trirath 2020).

ສື່ມວນຊົນລາຍງານສະພາບຂອງລູກເຮືອປະມົງທີ່ຕິດ ຢູ່ໃນເຮືອໄດ້ສະແດງໃຫ້ເຫັນເຖິງຜົນກະທົບຂອງການປະຕິບັດສຸກເສີນຂອງລັດຖະບານ ແລະ ນາຍຈ້າງຂອງຊາວປະມົງ. ຂ່າວກ່ຽວກັບລູກເຮືອທີ່ຕິດຄ້າງຢູ່ເທິງເຮືອປະມົງທີ່ມີທຸງປານາມາ ທີ່ໄດ້ກ່າວໄວ້ຂ້າງເທິງນັ້ນກໍ່ຖືກລາຍງານເຊັ່ນກັນ.

ນອນຢູ່ເທິງພື້ນຂອງຫ້ອງຊັກລີດ ແລະ ນອນຢູ່ກ້ອງໂຕະ ເຊິ່ງປະກົດວ່າແມ່ນຫ້ອງຄົວ. ເຂົາເຈົ້າອຸ່ນອາຫານເລັກນ້ອຍທີ່ມີຢູ່ໃສ່ການ້ຳ. [ຊາວປະມົງ Anthony] Medina ເວົ້າວ່າ "ພວກເຮົາບໍ່ມີນ້ຳທີ່ກັ່ນຕອງອີກແລ້ວ. ພວກເຮົາຕົ້ມນ້ຳທີ່ອອກມາຈາກອ່າງລ້າງຖ້ວຍ, ແຕ່ນ້ຳນັ້ນເປັນສີນ້ຳຕານ, ມີຂີ້ໝ້ຽງ ແລະ ລົດຊາດບໍ່ແຊບ" [ຊາວປະມົງ Anthony] Medina ຜູ້ນີ້ເປັນຫ່ວງຊະຕາກຳຂອງລູກເຮືອ ແລະ ຄອບຄົວຂອງເຂົາເຈົ້າຢູ່ບ້ານທີ່ເພິ່ງພາເງິນເດືອນຂອງເຂົາເຈົ້າ. ສັນຍາຂອງພວກເຂົາໄດ້ສິ້ນສຸດລົງໃນເດືອນ ພະຈິກ, ແລະ ພວກເຂົາບໍ່ແນ່ໃຈວ່າພວກເຂົາຈະໄດ້ຮັບຄ່າຈ້າງໃນເວລາເຮັດວຽກ ແລະ ຖືກກັກກັນຢູ່ທະເລ. ສະຖານກົງສຸນຟີລິບປິນຢູ່ ຊາຍເມນ, ຈີນ, ໄດ້ສົ່ງເຄື່ອງຊ່ວຍເຫຼືອໃຫ້ລູກເຮືອ[ແຕ່] ການຂົນສົ່ງເຮັດໃຫ້ມີຄວາມຫຍຸ້ງ ຍາກໃນການສົ່ງສະບຽງເປັນປົກກະຕິ (Santos 2020).

ຢູ່**ອິນໂດເນເຊຍ**, ວິດີໂອໃນເດືອນ ພຶດສະພາ ປີ 2020 ສະແດງໃຫ້ເຫັນຊາວປະມົງຊາວອິນໂດເນເຊຍສອງຄົນເສຍຊີວິດ ຢູ່ໃນເຮືອປະມົງທີ່ຕິດທຸງຈີນໄດ້ເຮັດໃຫ້ເກີດຄວາມໂກດແຄ້ນ. ວິດີໂອສະແດງໃຫ້ເຫັນວ່າມີການໂຍນສົບຂອງແຮງງານຖິ່ມລົງມະຫາສະໝຸດ (Wijaya and Henschke 2020). ສາມເດືອນຕໍ່ມາ, ໃນເດືອນ ສິງຫາ ປີ 2020, ນັກຂ່າວສືບສວນໄດ້ຄົ້ນພົບວ່າ ລູກເຮືອອິນໂດເນເຊຍອີກ 2 ຄົນໄດ້ເສຍຊີວິດຢູ່ໃນເຮືອທີ່ເປັນເຈົ້າຂອງດຽວກັນ, ເຮືອປະມົງໃນມະຫາສະມຸດດາລຽນຂອງຈີນ(Gokkon ແລະ Jacobson 2020). ເຮືອຖືກຈັບໃນຂໍ້ຫາເຄື່ອນໄຫວຜິດກົດໝາຍຢູ່ເຂດນ່ານນໍ້າຂອງ ສ. ເກົາຫຼີ ແລະ ໄດ້ມີການສືບສວນສອບສວນ APIL/EJF, ຂໍ້ມູນອ້າງອີງແມ່ນຢູ່ຂ້າງເທິງ (Putri 2020). ໃນການໂຕ້ຕອບກັບໂສກກະນາດຕະກໍາດັ່ງກ່າວ, ລັດຖະມົນຕີການຕ່າງປະເທດອິນໂດເນເຊຍກ່າວວ່າ, ລັດຖະບານອິນໂດເນເຊຍ ແລະຈີນຈະສ້າງຕັ້ງຄະນະກໍາມະການສືບສວນສອບສວນຮ່ວມກັບບໍລິສັດທີ່ຮັບຜິດຊອບຕໍ່ການເສຍຊີວິດ ແລະ ການລ່ວງລະເມີດນີ້ (Gibson 2020) ແລະ ຊາວປະມົງອິນໂດເນເຊຍ 88 ຄົນໄດ້ຖືກສົ່ງກັບຄືນປະເທດຈາກເຮືອປະມົງໃນມະຫາສະມຸດ ດາລຽນຂອງຈີນ (Gokkon 2020).

ຢູ່ **ສ. ເກົາຫຼີ**, ລັດຖະບານໄດ້ຮຽກຮ້ອງໃຫ້ຄົນຕ່າງປະເທດທຸກຄົນຕ້ອງໄດ້ຮັບການກວດພະຍາດໂຄວິດ-19 ເປັນປົກກະຕິໃນເດືອນມີນາ ປີ 2021, ແລະ ຮຽກຮ້ອງໃຫ້ແຮງງານຕ່າງປະເທດທີ່ວີຊ່າໝົດອາຍຸແລ້ວ ແລະ ຫຼີກລ້ຽງການກວດເພື່ອຍື່ນຕໍ່ໜ່ວຍງານສາທາ, ໂດຍລະບຸວ່າຂໍ້ມູນສ່ວນຕົວຂອງເຂົາເຈົ້າຈະບໍ່ຖືກເປີດເຜີຍ (Choon 2021). ເຊັ່ນດຽວກັບປະເທດໄທ, ສິງກະໂປ ແລະ ປະເທດອື່ນໆໃນພາກພື້ນ, ແຮງງານເຄື່ອນຍ້າຍທີ່ໄດ້ຮັບຄ່າຈ້າງຕໍ່າໄດ້ປະເຊີນກັບຄວາມສ່ຽງຕໍ່ການຕິດເຊື້ອຫລາຍຂຶ້ນ ແລະ ຖືກວາງມາດຕະການທີ່ເຂັ້ມງວດຂຶ້ນ. ນະໂຍບາຍນີ້ໄດ້ຮັບການຕິຕຽນຈາກປະຊາຄົມການທູດ, ທ່ານເອກອັກຄະລັດຖະທູດອັງກິດປະຈໍາ ສ.ເກົາຫຼີ ໄດ້ຢືນຢັນວ່ານະໂຍບາຍດັ່ງກ່າວເປັນການຈໍາແນກ (Kim 2021).

ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍເຮັດວຽກຢູ່ໃນເຮືອຂອງ**ໄຕ້ຫວັນ (ຈີນ)** ປະເຊີນກັບອຸປະສັກທາງກົດໝາຍໃນການຮັບອຸປະກອນປ້ອງກັນສ່ວນບຸກຄົນ ແລະ ກວດພະຍາດໂຄວິດ 19 ທີ່ລັດຖະບານໄດ້ສະໜອງໃຫ້ແຮງງານເຄື່ອນຍ້າຍທີ່ຖືບັດປະກັນສຸຂະພາບແຫ່ງຊາດ (NHI) ທີ່ຖືກຕ້ອງ. ຖ້າບໍ່ມີບັດທີ່ຖືກຕ້ອງ, ແຮງງານເຄື່ອນຍ້າຍທີ່ເຂົ້າມາໃຫມ່, ແຮງງານເຄື່ອນຍ້າຍທີ່ບໍ່ຖືກກົດໝາຍ, ແຮງງານທີ່ບໍ່ມີວຽກເຮັດງານທໍາ ແລະ ຊາວປະມົງທີ່ອອກຫາປາໃນໄລຍະໄກກໍ່ບໍ່ສາມາດເຂົ້າເຖິງມາດຕະການສາທາລະນະສຸກຂັ້ນພື້ນຖານໄດ້, ລວມທັງ ການເຂົ້າເຖິງຜ້າປິດປາກ-ດັງ (HRWG 2020).

ນາຍຈ້າງຄວນລົງທະບຽນປະກັນສຸຂະພາບໃຫ້ແກ່ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຢູ່ໃນອຸດສາຫະກໍາການປະມົງແຄມທະເລ, ແຕ່ອົງການກວດສອບ ຂອງລັດຖະບານ(ຄອນໂທຼນຢວນ) ພົບວ່າໃນເດືອນ ເມສາ ປີ 2020 ເຄິ່ງຫນຶ່ງຂອງແຮງງານທີ່ເຮັດວຽກຢູ່ໃນອຸດສາຫະກໍາການປະມົງແຄມຝັ່ງທະເລບໍ່ໄດ້ລົງທະບຽນປະກັນໄພສຸຂະພາບ (Chiang and Rogovin 2020). ສໍາລັບຜູ້ທີ່ໄດ້ລົງທະບຽນ, ຫຼາຍຄົນໄດ້ອະທິບາຍວ່າບໍ່ສາມາດເຂົ້າໄປໃຊ້ບໍລິການຢູ່ໂຮງຫມໍໄດ້ຍ້ອນວ່ານາຍຈ້າງບໍ່ອະນຸມັດເວລາພັກວຽກ. ແຮງງານທີ່ອອກຫາໄປຢູ່ໄລຍະໄກບໍ່ມີສິດໄດ້ຮັບບັດ NHI ເນື່ອງຈາກພວກເຂົາບໍ່ໄດ້ລົງທະບຽນປະກັນໄພສຸຂະພາບ, ເຊິ່ງເຮັດໃຫ້ແຮງງານບໍ່ນອນຢູ່ໃນເງື່ອນໄຂທີ່ຈະໄດ້ຮັບອຸປະກອນປ້ອງກັນສ່ວນບຸກຄົນ. ແຮງງານເຄື່ອນຍ້າຍທີ່ບໍ່ຖືກກົດໝາຍຍັງປະສົບກັບຄວາມຫຍຸ້ງ ຍາກໃນການກວດພະຍາດໂຄວິດ 19, ຍ້ອນວ່າລັດຖະບານຕ້ອງການຫຼັກຖານສະແດງຕົວຕົນຂອງພົນລະເມືອງເພື່ອຮັບການກວດພະຍາດໂຄວິດ19 ໂດຍບໍ່ເສຍຄ່າ (Aspinwall 2021).

ຢູ່**ປະເທດໄທ**, ອົງການ IOM ໄດ້ດໍາເນີນການປະເມີນຜົນກະທົບຂອງ ພະຍາດໂຄວິດ 19 ແບບເລັ່ງລັດ ແລະ ປູກຈິດສໍານຶກໃຫ້ແກ່ແຮງງານເຄື່ອນຍ້າຍໃນເດືອນ ເມສາ 2020, ເຊິ່ງພົບວ່າລະດັບຄວາມຮັບຮູ້ກ່ຽວກັບອາການແລະ ສຸຂະອະນາໄມແມ່ນມີສູງ (IOM 2020e, ເບິ່ງຮູບທີ 3 ຂ້າງລຸ່ມນີ້). ການປະເມີນໃນລະດັບພາກພື້ນຂອງອົງການ ILO ໃນເດືອນ ມິຖຸນາ ປີ 2020 ໄດ້ພົບເຫັນຜົນໄດ້ຮັບທີ່ຄ້າຍຄືກັນກ່ຽວກັບລະດັບຄວາມຮັບຮູ້ຕໍ່ກັບພະຍາດໂຄວິດ 19, ແຕ່ແຮງງານເຄື່ອນຍ້າຍຢູ່ປະເທດໄທ 57 ເປີເຊັນ ລາຍງານວ່າ ພວກເຂົາມີອຸປະກອນປ້ອງກັນສ່ວນບຸກຄົນບໍ່ພຽງພໍ ແລະ ມີຂໍ້ຈໍາກັດໃນການເຂົ້າເຖິງການກວດ ແລະ ການປິ່ນປົວ (ILO 2020b).

ການເຮັດວຽກຫຼາຍເກີນໄປຢູ່ໃນເຮືອປະມົງເປັນສິນຄ້າແມ່ນການປະຕິບັດທົ່ວໄປ, ສ່ວນຫນຶ່ງແມ່ນຍ້ອນຄຸນລັກສະນະຂອງວຽກການປະມົງ ແລະ ການ ເຄື່ອນໄຫວຂອງປາ. ແຕ່ການຫຼຸດຂະໜາດລູກເຮືອລົງຢູ່ໃນເຮືອປະມົງຂອງໄທໄດ້ເຮັດໃຫ້ຄວາມອັນຕະລາຍນັ້ນຮ້າຍແຮງຂຶ້ນຕື່ມ. ພາຍຫລັງການປັບ ປຸງການຄວບຄຸມຊົ່ວໂມງເຮັດວຽກໃນຊ່ວງກ່ອນການແຜ່ລະບາດ ຂອງພະຍາດ, ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຢູ່ປະເທດໄທໄດ້ລາຍງານວ່າ ພວກເຂົາເຮັດວຽກ 20 ຊົ່ວໂມງ ຕໍ່ມື້ (ILO 2019; ການສໍາພາດກັບ ITF, ເດືອນ ເມສາ ປີ 2021).

▶ ຮູບທີ 3. ລະດັບຄວາມຮັບຮູ້ຂອງແຮງງານເຄື່ອນຍ້າຍ ຕໍ່ກັບມາດຕະການດ້ານສຸຂະພາບ ແລະ ຄວາມປອດໄພ ຂອງພະຍາດໂຄວິດ 19 ຢູ່ປະເທດໄທ, ປີ 2020




**Source**: IOM 2020e.

## ນະໂຍບາຍຕອບໂຕ້ຕໍ່ພະຍາດໂຄວິດ 19 ແລະ ຜົນກະທົບຕໍ່ວຽກງານການປະມົງ

ພາກນີ້ໄດ້ກວດກາເບິ່ງຜົນກະທົບຕໍ່ຊາວປະມົງຈາກນະໂຍບາຍ ຂອງລັດຖະບານ ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ 19 ໂດຍເນັ້ນໃສ່ສອງຮູບແບບ ເຊິ່ງໄດ້ສົ່ງຜົນກະທົບຕໍ່ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍໂດຍສະເພາະ. ໜຶ່ງ, ການສຶກສາຄົ້ນຄວ້າໃນຄັ້ງນີ້ໄດ້ກວດກາເບິ່ງຢູ່ໃນບັນດາປະເທດທີ່ມີຂໍ້ມູນ, ນະໂຍບາບັນເທົາທຸກການລະບາດພະຍາດຂອງລັດຖະບານທີ່ແນໃສ່ຊ່ວຍເຫຼືອຄົນຫວ່າງງານ ແລະ ແຮງງານທີ່ເຮັດວຽກໃນຂະແໜງທີ່ຈໍາເປັນໄດ້ຖືກເບິ່ງຂ້າມ ຫຼື ບໍ່ໄດ້ກວມເອົາແຮງງານເຄື່ອນຍ້າຍ. ສອງ, ການປະຕິບັດມາດຕະການສຸກເສີນ - ນອກຈາກການປິດຊາຍແດນ ແລະ ການປິດປະເທດທີ່ລະບຸໄວ້ຂ້າງເທິງ - ການປ່ຽນແປງກົດລະບຽບການເຂົ້າເມືອງຊົ່ວຄາວ ແລະ ການຕໍ່ໄລຍະເວລາພັກເຊົາ ແລະ ວີຊ່າເຮັດວຽກ. ສຸດທ້າຍ, ພາກນີ້ໄດ້ນໍາໃຊ້ປະເທດໄທເປັນກໍລະນີສຶກສາເພື່ອທົບທວນການຈັດຕັ້ງປະຕິບັດຂອງຜູ້ຊື້ອາຫານທະເລທົ່ວໂລກ ແລະ ກົດລະບຽບຂອງພາກເອກະຊົນ ໃນການພະຍາຍາມຫຼຸດຜ່ອນຜົນກະທົບຂອງການລະບາດພະຍາດໃຫ້ແກ່ຊາວປະມົງຢູ່ຕ່ອງໂສ້ມູນຄ່າຂອງພວກເຂົາ.

### ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍບໍ່ໄດ້ເຂົ້າຮ່ວມໃນໂຄງການ  ບັນເທົາທຸກ ຈາກ ພະຍາດໂຄວິດ 19

ໂດຍທົ່ວໄປແລ້ວ ອຸດສາຫະກໍາການປະມົງແຫ່ງຊາດໄດ້ຖືກລວມເຂົ້າໃນໂຄງການບັນເທົາທຸກຂອງລັດຖະບານ, ແຕ່ວ່າຊາວປະມົງທີ່ເປັນແຮງງານເຄື່ອນຍ້າຢູ່ໃນອຸດສາຫະກໍາທີ່ມີຂໍ້ມູນ ສ່ວນໃຫຍ່ແມ່ນບໍ່ໄດ້ເຂົ້າຮ່ວມ, ໂດຍບໍ່ຄໍານຶງເຖິງສະຖານະພາບການເຄື່ອນຍ້າຍຂອງພວກເຂົາ. ຍົກຕົວຢ່າງ, ຊາວປະມົງຂະໜາດນ້ອຍຢູ່ **ຟີລິບປິນ** ແລະ ຊຸມຊົນຂອງພວກເຂົາໄດ້ຮັບການຊ່ວຍເຫຼືອຈາກລັດຖະບານໂດຍເລັ່ງໃສ່ເປົ້າໝາຍ. ສື່ມວນຊົນລາຍງານການຮ້ອງຮຽນຢ່າງລະອຽດກ່ຽວກັບເງື່ອນໄຂ ແລະ ການໄຫຼວຽນຂອງທຶນໃນການສະໜັບສະໜູນຊາວປະມົງຟີລິບປິນ (Coro 2020).

ແຕ່ຄົນຟີລິບປິນ (ແລະ ຄົນອື່ນໆ) ທີ່ເຮັດວຽກເປັນຊາວປະມົງແຮງງານເຄື່ອນຍ້າຍຢູ່ **ສ. ເກົາຫຼີ** ສ່ວນໃຫຍ່ບໍ່ໄດ້ເຂົ້າຮ່ວມໂຄງການຊ່ວຍເຫຼືອຂອງລັດຖະບານ ສ. ເກົາຫຼີ. ໃນເດືອນ ພຶດສະພາ ປີ 2020, ລັດຖະບານໄດ້ແຈກຢາຍກອງທຶນບັນເທົາທຸກພະຍາດໂຄວິດ 19 ເປັນຈໍານວນ 1 ລ້ານວອນເກົາຫຼີ (900 ໂດລາສະຫະລັດ) ໃຫ້ບັນດາຄົວເຮືອນຕ່າງໆ, ແຕ່ຄົນຕ່າງປະເທດບໍ່ມີສິດໄດ້ຮັບເງິນນີ້ເວັ້ນເສຍແຕ່ໄດ້ແຕ່ງງານກັບພົນລະເມືອງເກົາຫຼີ ຫຼື ຖືວີຊາທີ່ຢູ່ອາໄສຖາວອນ (Ock 2020a). ຊາວປະມົງຟີລິບປິນທີ່ໄປເຮັດວຽກຢູ່ຕ່າງປະເທດມີສິດໄດ້ຮັບການສະໜັບສະໜູນລາຍໄດ້ຈາກພະຍາດໂຄວິດ 19 ຈາກລັດຖະບານຟີລິບປິນ ຖ້າຫາກເຂົາເຈົ້າບໍ່ໄດ້ຮັບການຊ່ວຍເຫຼືອຢູ່ປະເທດປາຍທາງ. ໂຄງການບັນເທົາທຸກພະຍາດໂຄວິດ 19 ຂອງ**ໄຕ້ຫວັນ (ຈີນ)** ໄດ້ມອບບັດມູນຄ່າເງິນໃຫ້ແກ່ພົນລະເມືອງທຸກຄົນ. ຄົນຕ່າງປະເທດທີ່ແຕ່ງງານກັບຄົນພາຍໃນສັນຊາດ ຫຼື ຄົນຕ່າງປະເທດທີ່ຖືໜັງສືຜ່ານແດນ. ເຖິງຢ່າງໃດກໍ່ຕາມ, ໂຄງການນີ້ບໍ່ໄດ້ກວມເອົາຊາວຕ່າງປະເທດປະເພດອື່ນໆ, ເຮັດໃຫ້ແຮງງານເຄື່ອນຍ້າຍສ່ວນໃຫຍ່ບໍ່ໄດ້ຮັບການສະໜັບສະໜູນທາງດ້ານການເງິນໃນຊ່ວງການແຜ່ລະ ບາດຂອງພະຍາດ (Marschke et. al. 2020).

ເຖິງແມ່ນວ່າລະບົບປະກັນສັງຄົມຂອງໄທຈະກະແຈກກະຈາຍແຕ່ສາມາດປົກຄຸມໄດ້ທົ່ວເຖິງໃຫ້ແກ່ແຮງງານເຄື່ອນຍ້າຍ ເຊິ່ງລວມເອົາບໍານັດການຫວ່າງງານ, ອົງການສະຫະປະຊາຊາດ ຄາດຄະເນວ່າ ແຮງງານເຄື່ອນຍ້າຍທີ່ຖືກຕ້ອງ ແລະ ບໍ່ຖືກຕ້ອງ ຈໍານວນ 3.9 ລ້ານຄົນຢູ່ປະເທດໄທບໍ່ໄດ້ຮັບເງິນກະຕຸ້ນເສດຖະກິດ ແລະ ບໍານັດຕ່າງໆຈາກລັດຖະບານ, ເຊິ່ງເງິນດັ່ງກ່າວແມ່ນໄດ້ຈ່າຍໃຫ້ແກ່ຄົນສັນຊາດໄທເທົ່ານັ້ນ (Promchertchoo 2020; ILO 2020a; ILO 2020b; ອົງການສະຫະປະຊາຊາດ 2019). [17] ກົດໝາຍໄທ ໄດ້ອະນຸຍາດໃຫ້ແຮງງານເຄື່ອນຍ້າຍເຂົ້າເຖິງການ ປິ່ນປົວສຸຂະພາບ ແລະ ໄດ້ຮັບວັນພັກເຈັບເປັນທີ່ໄດ້ຮັບຄ່າຈ້າງ. ເຖິງຢ່າງໃດກໍ່ຕາມ, ສໍາລັບຜູ້ທີ່ເຮັດວຽກໃນຂະແໜງນອກລະບົບ ແລະ, ແນ່ນອນ, ສໍາລັບຜູ້ທີ່ບໍ່ຮູ້ກ່ຽວກັບສິດທິຂອງຕົນເອງ ຫຼື ຜູ້ທີ່ລັງເລໃຈທີ່ຈະພົວພັນກັບເຈົ້າໜ້າທີ່, ແມ່ນຍາກທີ່ຈະເຂົ້າເຖິງສິດທິເຫຼົ່ານີ້ (ILO 2020a). ນອກຈາກນັ້ນ, ຕາມກົດໝາຍແລ້ວນາຍຈ້າງຂອງຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍສາມາດເລືອກທີ່ຈະບໍ່ເຂົ້າລະບົບປະກັນສັງຄົມແຫ່ງຊາດ ແຕ່ຊື້ປະກັນໄພເອກະຊົນທຽບເທົ່າກັນແທນກໍ່ໄດ້. ເຖິງຢ່າງໃດກໍຕາມໃນທາງປະຕິບັດ, ຊາວປະມົງຫຼາຍຄົນບໍ່ໄດ້ຮັບການຄຸ້ມຄອງຢ່າງພຽງພໍຈາກລະບົບປະກັນໄພເອກະຊົນ ແລະ ຖືກຍົກເວັ້ນຈາກສິດທິໃນລະບົບແຫ່ງຊາດ.

ໃນປີ 2019 ໂຄງການສິດທິແຮງງານແຕ່ເຮືອຮອດຝັ່ງ ຂອງອົງການ ILO ໄດ້ດໍາເນີນການສໍາຫລວດກັບຊາວປະມົງ ແລະ ແຮງງານທີ່ເຮັດວຽກໃນອຸດສາຫະກໍາປຸງແຕ່ງອາຫານທະເລຂອງໄທຈໍານວນ 470 ຄົນ. ຜົນການສໍາຫລວດໄດ້ໃຫ້ຮູ້ວ່າ "ແຮງງານ [ປຸງແຕ່ງ] ອາຫານທະເລທັງໝົດຮັບຮູ້ວ່າເຂົາເຈົ້າໄດ້ຮັບສິດທິໃນການເຮັດວຽກຢ່າງໜ່ອຍໜຶ່ງຄັ້ງ, ແຕ່ຊາວປະມົງ 43 ເປີເຊັນ ບໍ່ຮູ້ຈັກວ່າພວກເຂົາໄດ້ຮັບສິດທິໃນການເຮັດວຽກໃດໆເລີຍ [ລວມທັງການເຂົ້າເຖິງການປິ່ນປົວສຸຂະພາບ] ໃນວຽກປະຈຸບັນຂອງພວກເຂົາ" (ILO 2020e, 21). ຕໍ່ກັບຊ່ອງຫວ່າງດັ່ງກ່າວ ອົງການຈັດຕັ້ງສະໜັບສະໜູນແຮງງານເຄື່ອນຍ້າຍ ແລະ ຜູ້ໃຫ້ທຶນສາກົນ, ລວມທັງອົງການ ILO, ໄດ້ບໍລິຈາກອາຫານ, ຊຸດອະນາໄມ ແລະ ຂໍ້ມູນກ່ຽວກັບມາດຕະການຄວາມປອດໄພ ແລະການດູແລສຸຂະພາບ (ILO 2021a).

### ການປິດປະເທດນໍາໄປສູ່ການຕໍ່ເວລາພັກເຊົາຂອງແຮງງານເຄື່ອນຍ້າຍອອກໄປອີກ

ປະເທດປາຍທາງຫລາຍປະເທດ, ໂດຍສະເພາະແມ່ນ **ຍີ່ປຸ່ນ ແລະ ສ.ເກົາຫຼີ**, ໄດ້ເປີດດ່ານຊາຍແດນຄືນໃໝ່ເປັນໄລຍະ ເລີ່ມແຕ່ເດືອນ ມິຖຸນາ ຫາ ເດືອນກັນຍາ ປີ 2020 ຫລັງຈາກທີ່ໄດ້ປິດໃນທ້າຍເດືອນ ມີນາ. ປະເທດເຫຼົ່ານີ້ລະງັບວີຊ່າຂອງພວກເຂົາເພື່ອຈໍາກັດນັກທ່ອງທ່ຽວຕ່າງປະເທດ, ລວມທັງແຮງງານເຄື່ອນຍ້າຍ. ໃນຕົ້ນເດືອນ ກຸມພາ ປີ 2020 ເຈົ້າໜ້າທີ່ໄຕ້ຫວັນ (ຈີນ) ໄດ້ຫ້າມແຮງງານຕ່າງປະເທດທີ່ໄດ້ໄປຈີນແຜ່ນດິນໃຫຍ່ໃນ 14 ມື້ກ່ອນໜ້ານີ້ເຂົ້າມາ.ບັນດາປະເທດປາຍທາງຍັງໄດ້ຈັດຕັ້ງ "ເສັ້ນທາງສີຂຽວ", ຫຼື ເຂດຮ່ວມມືສອງຝ່າຍທີ່ຜູ້ເດີນທາງມາເຮັດທຸລະກິດ ຫລື ເຮັດວຽກສາມາດເດີນທາງໄດ້ສະດວກ ແຕ່ຄົນອື່ນໆແມ່ນຖືກຈໍາກັດການເດີນທາງ. ຮອດເດືອນ ທັນວາ ປີ 2020, ຍີ່ປຸ່ນ ແລະ ສ.ເກົາຫຼີ ໄດ້ສ້າງຂໍ້ຕົກລົງດັ່ງກ່າວຂຶ້ນ ເພື່ອອະນຸຍາດໃຫ້ມີການເດີນທາງໂດຍທົ່ວໄປກັບໄຕ້ຫວັນ (ຈີນ) ແລະ ຕໍ່ຫວຽດ ນາມເຊັ່ນດຽວກັນ. ບັນດາປະເທດປາຍທາງເຫລົ່ານີ້ແມ່ນຍົກເວັ້ນປະເທດໄທ.ໃນເບື້ອງຕົ້ນປະເທດໄທ ເປັນປະເທດທີ່ຮັບມືກັບການລະບາດຂອງພະຍາດໄດ້ດີ, ແຕ່ຕໍ່ມາກໍພົບກັບອຸປະສັກໃນການບັງຄັບໃຊ້ຄໍາສັ່ງປິດຊາຍແດນຂອງຕົນ (Hunter 2021).

17 The Department of Employment in Thailand reports 1.96 million regular migrant workers as of March 2021, but it is recognized that a large share of migrants is employed without legal status.

► ຕາຕະລາງ 3. ການຈ້າງງານປະມົງປະຈໍາໄຕມາດ ແຍກຕາມປະເທດ, 2019-20

| ປະເທດ | 2020 Q1 | 2020 Q2 | 2020 Q3 | 2020 Q4 | 2021 Q1 | ການປ່ຽນແປງລວ change |
|---|---|---|---|---|---|---|
| ປະເທດຕົ້ນທາງ | | | | | | |
| ກໍາປູເຈຍ | +3.00 | -1.00 | +0.00 | +0.00 | +0.00 | +2.00 |
| ອິນໂດເນເຊຍ | +4.00 | +0.00 | -1.00 | +0.00 | +0.00 | +3.00 |
| ມຽນມາ | +3.00 | +0.00 | +1.00 | +0.00 | +0.00 | +4.00 |
| ຟີລິບປິນ | +4.00 | +0.00 | -2.00 | +0.00 | +2.00 | +4.00 |
| ຫວຽດນາມ | +4.00 | -1.00 | +0.00 | +1.00 | +0.00 | +4.00 |
| ປະເທດປາຍທາງ | | | | | | |
| ຍີ່ປຸ່ນ | +2.00 | +1.00 | -2.00 | +3.00 | +0.00 | +4.00 |
| ສ. ເກົາຫຼີ | +3.00 | +0.00 | -1.00 | +1.00 | +0.00 | +3.00 |
| ໄຕ້ຫວັນ (ຈີນ) | +3.00 | -1.00 | +0.00 | +0.00 | +0.00 | +2.00 |
| ປະເທດໄທ | +4.00 | +0.00 | +0.00 | -1.00 | +0.00 | +3.00 |

**Note**: A score of 0.00 represents no changes, and a score of 4.00 represents the (re-)introduction of the most stringent policies. Source: University of Oxford, n.d.

ຫລາຍໆປະເທດທີ່ສົ່ງແຮງງານອອກຕ່າງປະເທດ, ລວມທັງ **ອິນໂດເນເຊຍ** ແລະ **ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ,** ໄດ້ເຄັ່ງຄັດລະບົບອອກ ວີຊ່າເພື່ອເຮັດໃຫ້ວີຊ່າທີ່ອອກໃນເມື່ອກ່ອນນັ້ນໝົດກຳນົດ ຫຼື ສ້າງເງື່ອນໄຂໃຫ້ຜູ້ທີ່ໃນເມື່ອກ່ອນບໍ່ຈຳເປັນຕ້ອງມີວີຊ່າເພື່ອເຂົ້າມາປະເທດ ຕ້ອງໄດ້ຂໍວີຊ່າເຂົ້າປະເທດ (Benton et al. 2021).

ໜ່ວຍງານຕິດຕາມການຕອບໂຕ້ກັບພະຍາດໂຄວິດ 19 ຂອງລັດຖະບານຂອງມະຫາວິທະຍາໄລອອກຟອດ (OxCGRT) ໄດ້ຕິດຕາມນະໂຍບາຍການຄວບຄຸມຊາຍແດນ ແລະ ການເຄື່ອນຍ້າຍ ໃນລະຫວ່າງ ເດືອນ ມີນາ ປີ 2020 ຫາ ເດືອນ ມີນາ ປີ 2021 ສະແດງໃຫ້ເຫັນຄວາມເຂັ້ມງວດຂອງການຄວບຄຸມການເດີນທາງລະຫວ່າງປະເທດຢູ່ບັນດາປະເທດທີ່ໄດ້ກວດກາຢູ່ໃນເອກະສານສະບັບນີ້ (ເບິ່ງຕາຕະລາງ 2). ຕົວເລກໃນຕາຕະລາງ 2 ຫມາຍເຖິງການປ່ຽນແປງຂອງນະໂຍບາຍທຽບກັບໄຕມາດທີ່ຜ່ານມາ, ບ່ອນທີ່ມີຄະແນນ 0.00 ສະແດງໃຫ້ເຫັນເຖິງບໍ່ມີການປ່ຽນແປງ ແລະ ຄະແນນ 4.00 ສະແດງເຖິງການບັງຄັບ (ຫຼື ການບັງຄັບໃຊ້ຄືນ) ໃນຮູບແບບເຂັ້ມງວດທີ່ສຸດໃນການຄວບຄຸມການເດີນທາງ.

ການສ້າງຂໍ້ຈຳກັດການເດີນທາງທີ່ເຂັ້ມງວດທີ່ສຸດໃນທົ່ວໂລກ, ບັນດາປະເທດປາຍທາງທີ່ໄດ້ກວດກາຢູ່ໃນເອກະສານສະບັບນີ້ ໄດ້ມີການປ່ຽນແປງຈຳ ນວນໜຶ່ງໃນໄລຍະນີ້: ຍີ່ປຸ່ນ ແລະ ສ.ເກົາຫຼີ ຮັກສາການຄວບຄຸມການເດີນທາງຢູ່ +3.00, ໄຕ້ຫວັນ (ຈີນ) ໄດ້ເພີ່ມທະວີການຄວບຄຸມຈາກ +3.00 ຫາ +4.00. , ແລະ ປະເທດໄທໄດ້ຜ່ອນຄາຍມາດຕະການເລັກນ້ອຍຫຼັງຈາກເລີ່ມຕົ້ນການຈຳກັດທີ່ເຂັ້ມງວດທີ່ສຸດ (University of Oxford, n.d.).

**ສ. ເກົາຫຼີ** ໄດ້ຍົກເລີກກົດລະບຽບວີຊາຊົ່ວຄາວສຳລັບແຮງງານເຄື່ອນຍ້າຍ, ໃນນັ້ນລວມທັງຊາວປະມົງທີ່ຕິດຄ້າງຢູ່ຍ້ອນການປິດດ່ານຊາຍແດນທີ່ມີການແຜ່ລະບາດຂອງພະຍາດ. ໃນເດືອນ ເມສາ ປີ 2020, ລັດຖະບານໄດ້ໃຫ້ພວກເຂົາຕໍ່ເວລາໄປຕື່ມ 50 ວັນ ແຕ່ບໍ່ໄດ້ຮັບອະນຸຍາດໃຫ້ແຮງງານເຮັດວຽກໃນໄລຍະຕໍ່ເວລານີ້ (Ock 2020b). ໃນ ເດືອນ ກໍລະກົດ 2020, ລັດຖະບານໄດ້ຕໍ່ວີຊ່າໃຫ້ແກ່ຄົນເຂົ້າເມືອງເປັນເວລາ ສາມເດືອນ ແລະ ອະນຸຍາດໃຫ້ແຮງງານເຄື່ອນຍ້າຍເຮັດວຽກຕາມລະດູການໄດ້ (Yonhap 2020). ມາຮອດ ເດືອນ ກຸມພາ ປີ 2021, ມາດຕະການເຫຼົ່ານີ້ໄດ້ຕໍ່ໄປເຖິງ ເດືອນ ກຸມພາ ປີ 2022 (Yonhap2021), ແຕ່ການຕໍ່ດັ່ງກ່າວບໍ່ໄດ້ເປີດໃຫ້ແຮງງານເຄື່ອນຍ້າຍທີ່ບໍ່ໄດ້ຂຶ້ນທະບຽນ ຫຼື ແຮງງານທີ່ໄດ້ປ່ຽນບ່ອນເຮັດຮອດກຳນົດທີ່ກົດໝາຍອະນຸຍາດ (Khoa 2021). ຜູ້ສະໜັບສະໜູນສິດທິແຮງງານເຄື່ອນຍ້າຍໄດ້ຮຽກຮ້ອງໃຫ້ລັດຖະບານອະນຸຍາດໃຫ້ແຮງງານເຄື່ອນຍ້າຍທີ່ບໍ່ໄດ້ຂຶ້ນທະບຽນສາມາດອາໄສຢູ່ຕໍ່ ແລະ ເຮັດວຽກຢູ່ໃນປະເທດໄດ້ຢ່າງຖືກຕ້ອງຕາມກົດໝາຍ, ແລະ ໄດ້ສະເໜີໃຫ້ລະບຽບການອະນຸ ຍາດໃຫ້ແຮງງານທີ່ມີວີຊ່າໝົດອາຍຸ ສາມາດຕໍ່ວີຊ່າໄດ້ (Ock 2021).

**ຢູ່ໄຕ້ຫວັນ (ຈີນ),** ແຮງງານເຄື່ອນຍ້າຍຫຼາຍຄົນໄດ້ຮັບວີຊາໄລຍະສັ້ນໃນເດືອນມີນາ ປີ 2020, ອະນຸຍາດໃຫ້ພວກເຂົາເຮັດວຽກຢ່າງຖືກຕ້ອງຕາມກົດຫມາຍຕະຫຼອດໄລຍະການລະບາດຂອງພະຍາດ. ເຖິງຢ່າງໃດກໍຕາມ, ແຮງງານເຄື່ອນຍ້າຍຕ້ອງຂໍໃບອະນຸຍາດເຮັດວຽກ 3 ເດືອນ ແລະ ສາມາດຂໍໄດ້ຖ້າເຂົາເຈົ້າໄດ້ເຮັດວຽກຢູ່ ໄຕ້ຫວັນ (ຈີນ) ຢ່າງໜ້ອຍ 12 ປີ ເທົ່ານັ້ນ. ແຮງງານເຄື່ອນຍ້າຍຫຼາຍຄົນທີ່ສິ້ນສຸດສັນຍາເຮັດວຽກໃນ ເດືອນ ມີນາ ແມ່ນບໍ່ມີສິດທີ່ຈະຍື່ນຂໍໃບອະນຸຍາດເຮັດວຽກຄືນໃໝ່, ແລະດັ່ງນັ້ນຈຶ່ງບໍ່ສາມາດເຮັດວຽກໄດ້ ແລະ ບໍ່ມີແຫຼ່ງລາຍຮັບຈົນກ່ວາລັດຖະບານໄດ້ປັບປຸງນະໂຍບາຍໃໝ່ ໃນ ເດືອນ ພຶດສະພາ ປີ 2020. (HRWG 2020).

ໃນ ເດືອນ ເມສາ ປີ 2020, **ປະເທດໄທ** ໄດ້ອະນຸມັດຮອບຂອງການຕໍ່ວີຊ່າອັດຕະໂນມັດໃຫ້ແກ່ຜູ້ເຄື່ອນຍ້າຍຢູ່ໃນປະເທດທີ່ມີສະຖານະພາບພັກເຊົາຊົ່ວຄາວ. ໃນ ເດືອນດຽວກັນ, ກົມການປະມົງໄດ້ປະກາດຂັ້ນຕອນການຂຶ້ນທະບຽນຊາວປະມົງຈາກສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມຽນມາ ແລະ ກຳປູເຈຍ (ILO 2020b). ມາຮອດເດືອນ ທັນວາ ປີ 2020, ລັດຖະບານໄທໄດ້ປະກາດອະນຸຍາດໃຫ້ແຮງງານເຄື່ອນຍ້າຍທີ່ບໍ່ຖືກຕ້ອງຈາກກຳປູເຈຍ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມຽນມາ ປ່ຽນສະຖານະພາບຂອງພວກເຂົາ ແລະ ເຮັດວຽກຢູ່ປະເທດໄທຢ່າງຖືກຕ້ອງຕາມກົດໝາຍເປັນເວລາ 2 ປີ (Wongsamuth 2020).

ການຕໍ່ເວລາໃຫ້ສອງປີນັ້ນເປັນພາລະໜັກໃຫ້ແກ່ແຮງງານເຄື່ອນຍ້າຍເຊິ່ງສັງເກດເຫັນໄດ້ວ່າມີຄ່າທຳນຽມ ແລະ ເງື່ອນໄຂໃນການບໍລິຫານເພີ່ມຂຶ້ນຢ່າງຫລວງຫລາຍ, ລວມທັງການກວດສຸຂະພາບທີ່ລັດຖະບານອອກກົດລະບຽບ, ເຊິ່ງລວມທັງໝົດ ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍຕ້ອງໄດ້ຈ່າຍແມ່ນຕົກຢູ່ປະມານ 8,680 ບາດ (277 ໂດລາສະຫະລັດ) (MWG 2021). ອີງຕາມຜູ້ສະຫນັບສະຫນູນແຮງງານ, ແຮງງານສ່ວນໃຫຍ່ແມ່ນບໍ່ສາມາດຈ່າຍໄດ້ ແລະ ຍັງຊຸກດັນໃຫ້ເຂົາເຈົ້າຕົກເປັນໜີ້ສິນນາຍໜ້າ ຫຼື ນາຍຈ້າງ.ຍິ່ງໄປກວ່ານັ້ນ, ແຮງງານຈຳນວນຫຼວງຫຼາຍບໍ່ສາມາດຂຶ້ນທະບຽນຍ້ອນຂາດການສະຫນັບສະ ໜູນຈາກນາຍຈ້າງຂອງພວກເຂົາ, ເຊິ່ງອາດຈະເຮັດໃຫ້ພວກເຂົາມີຄວາມສ່ຽງຕໍ່ການຖືກລ່ວງລະເມີດແຮງງານ (Blomberg 2020b) ກຸ່ມເຄືອຂ່າຍແຮງງານເຄື່ອນຍ້າຍຄາດຄະເນວ່າແຮງງານເຄື່ອນຍ້າຍ 500,000 ຄົນໄດ້ຕົກຢູ່ໃນສະຖານະພາບທີ່ບໍ່ຖືກຕ້ອງໃນ ເດືອນ ມັງກອນ ປີ 2021 ຍ້ອນບໍ່ສາມາດເຂົ້າເຖິງການຂຶ້ນທະບຽນໃນການຂໍຕໍ່ວີຊ່າ ແລະ ຄ່າໃຊ້ຈ່າຍທີ່ສູງ, ແລະ ແຮງງານເຄື່ອນຍ້າຍມີສູງເຖິງ 1.5 ລ້ານຄົນມີຄວາມສ່ຽງທີ່ຈະຕົກຢູ່ໃນສະຖານະພາບທີ່ບໍ່ຖືກກົດໝາຍເນື່ອງຈາກອຸປະສັກເຫຼົ່ານີ້ (The Momentum 2021).

ຂໍ້ຈຳກັດ ຂອງປະເທດຕົ້ນທາງຕໍ່ກັບແຮງງານເຄື່ອນຍ້າຍໄດ້ດຳເນີນໄປຕາມຮູບແບບທີ່ຄ້າຍຄືກັນ. ລັດຖະບານ**ກຳປູເຈຍ** ໄດ້ປິດປະເທດຢູ່ນະຄອນຫຼວງພະນົມເປັນ ແລະ ຕາຄະມາວ ເປັນເວລາ 14 ມື້ ໃນເດືອນ ເມສາ ປີ 2020, ນອກຈາກການຫ້າມການເດີນທາງລະຫວ່າງແຂວງຕໍ່ແຂວງ ໃນເດືອນ ເມສາ ປີ 2020 ເປັນເວລາ 14 ມື້ (Benton et al. 2021). ການກະທຳເຊັ່ນນີ້ໄດ້ສົ່ງຜົນຕໍ່ມາດຕະການນປ່ຽນແປງ +2.00 ໃນການຄວບຄຸມການເດີນທາງຕ່າງປະເທດໃນລະຫວ່າງ ເດືອນ ມີນາ ຫາ ເດືອນ ມິຖຸນາ ປີ 2020 (University of Oxford, n.d.). ຢູ່**ປະເທດອິນໂດເນເຊຍ**, ຄົນທີ່ບໍ່ແມ່ນສັນຊາດອິນໂດເນຍເຊຍໄດ້ຖືກຫ້າມເດີນທາງເຂົ້າປະເທດ, ຍົກເລີກຂໍ້ຍົກເວັ້ນບາງອັນຂອງ ແຮງງານ, ຜູ້ທີ່ຕ້ອງມີຜົນກວດ PCR ພະຍາດໂຄວິດ 19 ເປັນລົບ ແລະ ມີໃບຢັ້ງຢືນຜົນກວດເປັນພາສາອັງກິດ (Benton et al. 2021); ເຖິງແມ່ນວ່າຄຳສັ່ງເຫຼົ່ານີ້ເຮັດໃຫ້ມາດຕະການປ່ຽນແປງຕໍ່າໃນການຄວບຄຸມການເດີນທາງຕ່າງປະເທດທຽບກັບເງື່ອນໄຂທີ່ບໍ່ແມ່ນໂລກ ລະບາດ: +1.00. ເຊັ່ນດຽວກັນ, ຂໍ້ຈຳກັດຊາຍແດນໃນມຽນມາໄດ້ຍົກໃຫ້ເຫັນການປ່ຽນແປງ +2.00 ໃນການຄວບຄຸມການເດີນທາງຕ່າງປະເທດ; ຜູ້ທີ່ຢູ່**ຟີລິບປິນ** ການປ່ຽນແປງແມ່ນ +1.00 ; ແລະຂໍ້ຈຳກັດການເດີນທາງໃນຫວຽດນາມ ຍັງສົ່ງຜົນໃຫ້ມີການປ່ຽນແປງ +1.00 (University of Oxford, n.d.).

## ຜູ້ຊື້ອາຫານທະເລຮັບຮູ້ເຖິງບັນຫາ, ແຕ່ຄວາມຄືບຫນ້າແມ່ນ " ຄົງທີ່ ": ປະເທດໄທເປັນກໍລະນີສຶກສາ

ບັນດາຮ້ານຂາຍຍ່ອຍອາຫານທົ່ວໂລກ, ຜູ້ຊື້ອາຫານທະເລຂອງໄທ ແລະບັນດາກຸ່ມອຸດສາຫະກຳໄດ້ຮັບຮູ້ເຖິງຄວາມຫຍຸ້ງຍາກຂອງຊາວປະມົງ ແລະ ແຮງງານທີ່ເຮັດວຽກໃນຂະແໜງປຸງແຕ່ງອາຫານທະເລໃນໄລຍະການແຜ່ລະບາດ ຂອງພະຍາດ, ແຕ່ຄວາມພະຍາຍາມໃນການຕອບໂຕ້ກັບສິ່ງທ້າທາຍເຫຼົ່ານີ້ມີຈຳກັດ. ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານໄດ້ຖືກຮຽກຮ້ອງໃຫ້ຕື່ມຊ່ອງຫວ່າງຂະໜາດໃຫຍ່ນີ້ໂດຍການຕອບໂຕ້ຂອງພາກເອກະຊົນ ແລະ ພາກລັດ. ຢູ່ພາກນີ້ໄດ້ໃຊ້ປະເທດໄທເປັນກໍລະນີສຶກສາເພື່ອສຸມໃສ່ການຕອບໂຕ້ຂອງອຸດສາຫະກຳອາຫານທະເລຕໍ່ກັບຄວາມຫຍຸ້ງຍາກຂອງຊາວປະມົງໃນໄລຍະການລະບາດຂອງພະຍາດ.

ສະຫະພັນອາຫານໄທ, ເຊິ່ງເປັນຜູ້ຜະລິດປາທູນ້າລາຍໃຫຍ່ທີ່ສຸດໃນໂລກ, ໄດ້ຮັບລາງວັນຊົມເຊີຍໃນການເລັ່ງໃສ່ການຕອບໂຕ້ກັບຄວາມຕ້ອງການ ຂອງແຮງງານເຄື່ອນຍ້າຍສ່ວນໃຫຍ່ຂອງຕົນ, ແລະ ຢູ່ໃນສິ່ງພິມທີ່ສະແດງຄວາມຄິດເຫັນໄດ້ເນັ້ນຫນັກເຖິງຜົນກະທົບຂອງຮູບແບບທຸລະກິດຂອງອຸດສາຫະກຳຕໍ່ແຮງງານ:

ສຳລັບບັນດາວິສາຫະກິດໃນທົ່ວໂລກ, ການສະໜັບສະໜູນແຮງງານເຄື່ອນຍ້າຍຜ່ານການລະບາດຂອງພະຍາດແມ່ນຍັງເປັນຄຳຖາມບໍ່ພຽງແຕ່ກ່ຽວກັບຈັນຍາບັນເທົ່ານັ້ນ, ແຕ່ແມ່ນການຄຸ້ມຄອງທີ່ມີປະສິດທິຜົນ. ຕ່ອງໂສ້ການສະຫນອງສາກົນທີ່ເປັນມົນລະພິດດ້ວຍການເປັນຂ້າທາດ ແລະ ການລ່ວງລະເມີດ; ການທຳລາຍຊັບພະຍາກອນທີ່ໃຊ້ຮ່ວມກັນດ້ວຍລາຄາສູງ; ໄພຂົ່ມຂູ່ຕໍ່ການຢຸດຊະງັກຂອງເສດຖະກິດ ແລະ ການຂ້ວາມບາດການສົ່ງອອກ: ໃນຂະນະທີ່ມີຄວາມກົດດັນສູງໃນການຕັດຄ່າໃຊ້ຈ່າຍໃນແຮງງານລົງ, ແນວຄວາມຄິດໃນໄລຍະສັ້ນໆນີ້ຈະສົ່ງຜົນໃຫ້ເກີດມີຄ່າໃຊ້ຈ່າຍທີ່ຫນັກຫນ່ວງຜູ້ນຳທຸລະກິດມີໜ້າທີ່ຕໍ່ຜູ້ຖືຫຸ້ນ, ພະນັກງານຂອງເຂົາເຈົ້າ ແລະ ສັງຄົມເພື່ອຕ້ານການຟື້ນຕົວຂອງແຮງງານບັງຄັບໂດຍການສະຫນອງວຽກເຮັດງານທຳທີ່ໝັ້ນຄົງເທົ່າທຽມກັນໃຫ້ແກ່ແຮງງານທັງຫມົດ (McBain 2020).

ຍັງບໍ່ທັນມີຄຳໝັ້ນສັນຍາຈາກຜູ້ນຳອຸດສາຫະກຳອາຫານທະເລໃນປະເທດໄທທີ່ຈະ "ສ້າງຄືນໃຫມ່ໃຫ້ດີຂຶ້ນກວ່າເກົ່າ" ຫຼື ຄິດຄືນໃຫມ່ - ດັ່ງທີ່ກຳລັງດຳເນີນຢູ່ໃນອຸດສາຫະກຳເຄື່ອງແຕ່ງກາຍທົ່ວໂລກ, ຍົກຕົວຢ່າງ .[18] - ຜົນກະທົບຂອງອຸດສາຫະກຳຕໍ່ຜູ້ສະຫນອງ, ແຮງງານ ແລະ ສິ່ງແວດລ້ອມຫລັງການລະບາດ ຂອງພະຍາດ.

ໂດຍທົ່ວໄປ, ການຕອບໂຕ້ຂອງອຸດສາຫະກຳແມ່ນໄດ້ປະຕິບັດຕາມການນຳພາຂອງລັດຖະບານ, ແລະ ບໍ່ມີສະມາຄົມອາສາສະໝັກໃດໄດ້ສ້າງມາດຕະການອັນສຳຄັນເກີນຄວາມຮຽກຮ້ອງຕ້ອງການຂັ້ນຕ່ຳສຸດຂອງລັດຖະບານທີ່ພົວພັນກັບການປົກປ້ອງແຮງງານ. ການຕອບໂຕ້ຂອງອຸດສາຫະກຳແມ່ນອີງຕາມຄວາມສາມາດ ແລະ ເຈດຈຳນົງຂອງແຕ່ລະບໍລິສັດ, ເຊິ່ງແຕກຕ່າງກັນລະຫວ່າງການຕອບໂຕ້ຂອງບໍລິສັດໃຫຍ່ທີ່ປະເຊີນກັບການສົ່ງອອກ ແລະ ວິສາຫະກິດຂອງລັດ ແລະ ວິສາຫະກິດຂະ ໜາດນ້ອຍ ຫຼື ຂະໜາດກາງ.

ການໂຕ້ຕອບຂອງບໍລິສັດໄດ້ສຸມໃສ່ຄວາມຮູ້ຕໍ່ກັບພະຍາດໂຄວິດ 19 ແລະ, ບາງກໍລະນີ, ກໍໄດ້ມີການສະໜອງອຸປະກອນປ້ອງກັນສ່ວນບຸກຄົນໃຫ້ແກ່ແຮງງານ ແລະການກວດພະຍາດໂຄວິດ (Thai Union 2021b; Thai PBS News 2021). ເປັນທີ່ໜ້າສັງເກດ, ໂຮງງານປຸງແຕ່ງອາຫານທະເລເກືອບທັງໝົດຍັງຄົງເປີດ ແລະ ດຳເນີນງານໄດ້ເນື່ອງຈາກນະໂຍບາຍ "ຟອງສະບູ ແລະ ຕາປະທັບ", ເຖິງແມ່ນວ່າຈະກວດພົບກໍລະນີຕິດພະຍາດໂຄວິດ19ຢູ່ໃນກຸ່ມແຮງງານກໍຕາມ (Prachachat 2021). [19] ສະຫະພັນແຮງງານໄທໄດ້ສະໜອງລົດເມເພີ່ມຕື່ມເພື່ອປັບປຸງໄລຍະຫ່າງທາງສັງຄົມລະຫວ່າງແຮງງານດ້ວຍກັນໃນການເດີນທາງລະຫວ່າງຫໍພັກທີ່ນາຍຈ້າງຈັດໃຫ້ ແລະ ໂຮງງານ.[20] ອຸດສາຫະກຳບໍ່ໄດ້ລາຍງານກ່ຽວກັບມາດຕະການປ້ອງກັນພະຍາດໂຄວິດ 19 ໃດໆທີ່ນຳໃຊ້ຢູ່ໃນຫໍພັກທີ່ນາຍຈ້າງຈັດໃຫ້. ກຸ່ມອາຫານພັດທະຍາ, ເຊິ່ງເປັນຜູ້ຜະລິດຜະລິດຕະພັນອາຫານທະເລກະປ໋ອງຍີ່ຫໍ້ Nautilus, ເປັນບໍລິສັດທີ່ຖືກຍ້ອງຍໍໃຫ້ເປັນສະຖານທີ່ "ກັກກັນຢູ່ໂຮງງານ" ຢູ່ປະເທດໄທໃນເດືອນ ມັງກອນ ປີ 2021,

ໂຮງງານໄດ້ຖືກປ່ຽນເປັນສະຖານທີ່ກັກກັນທີ່ມີ 600 ຕຽງ ຫຼັງຈາກມີການກວດພົບພະຍາດໂຄວິດ 19 ໃນກຸ່ມແຮງງານຂອງຕົນ ແລະ ເປັນສ່ວນຫນຶ່ງຂອງຄວາມພະຍາຍາມຂອງບໍລິສັດໃນການມີຄວາມຮັບຜິດຊອບຕໍ່ສັງຄົມ (Taylor 2021). ໄດ້ມີການລາຍງານວ່າມີການປິດການຜະລິດເປັນເວລາສອງສາມວັນເພື່ອຈັດຕັ້ງສະຖານທີ່ກັກກັນພາກສະຫນາມ, ແລະ ຫລັງຈາກນັ້ນບໍ່ດົນກໍ່ໄດ້ສືບຕໍ່ດຳເນີນກິດຈະການພາຍຫລັງມີການປະກາດໃຊ້ມາດຕະການ "ຟອງສະບູ ແລະ ຕາປະທັບ " ໃນ ເດືອນ ກຸມພາ ປີ 2021.

ສຳລັບແຮງງານ ແລະ ຄົວເຮືອນທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ 19 ບັນດາບໍລິສັດຍັງໄດ້ຕອບໂຕ້ໂດຍການສະໜອງການຊ່ວຍເຫຼືອດ້ານມະນຸດສະ ທຳຂັ້ນພື້ນຖານໃຫ້ແກ່ແຮງງານທີ່ໄດ້ຮັບຜົນກະທົບ ເຊັ່ນ: ສະໜອງອາຫານ ແລະ ເຄື່ອງດື່ມໃຫ້ແຮງງານທີ່ເຮັດວຽກໃນຂະແໜງປຸງແຕ່ງອາຫານທະເລທີ່, ກັກກັນຢູ່ຈັງຫວັດສະມຸດສາຄອນ (Wongsamuth 2021b).[21] ບາງບໍລິສັດໄດ້ບໍລິຈາກຜະລິດຕະພັນຂອງຕົນໃຫ້ຊຸມຊົນທົ່ວໂລກທີ່ໄດ້ຮັບຜົນກະທົບ. ເຖິງຢ່າງໃດກໍ່ຕາມ, ອຸດສາຫະກຳ ແລະ ສະມາຄົມຂອງຕົນລົ້ມເຫລວໃນການສ້າງນະໂຍບາຍທີ່ຊັດເຈນກ່ຽວກັບການຊົດເຊີຍການສູນເສຍລາຍໄດ້, ຫຼື ສິດໃນການໄດ້ຮັບພັກເຈັບເປັນຂອງແຮງງານທີ່ຕ້ອງການການກັກກັນຕົນເອງ ຫລື ຍັງບໍ່ໄດ້ມີຄວາມພະຍາຍາມທີ່ຈະຮັບປະກັນສິດໃນການຮັບບຳເນັດຈາກປະກັນສັງຄົມໃຫ້ແກ່ແຮງງານທີ່ສົມຄວນຈະໄດ້ຮັບ.

ຄະນະສະເພາະກິດດ້ານອາຫານທະເລ - ໂຄງການອອກກົດລະບຽບຂອງພາກເອກະຊົນແບບສະມັກໃຈທີ່ສ້າງຂຶ້ນໂດຍຮ້ານຂາຍຍ່ອຍ ແລະ ໂຮງງານປຸງແຕ່ງອາຫານທະເລລາຍໃຫຍ່ - ໄດ້ໃຫ້ຄຳໝັ້ນສັນຍາປັບປຸງເງື່ອນໄຂຕ່າງໆຕາມລະບົບຕ່ອງໂສ້ການສະໜອງອາຫານທະເລ ຂອງ ໄທ ໃນ ເດືອນ ກຸມພາ ປີ 2021, ແຕ່ໃນແຜນປະຕິບັດງານສິບຈຸດປີ 2021 ໝາຍເຖິງ ພະຍາດໂຄວິດ 19 ເທົ່ານັ້ນ ເພາະມັນເປັນອຸປະສັກຕໍ່ແຜນງານຂອງກຸ່ມ ແລະ ບໍ່ໄດ້ກ່າວເຖິງຄ່າໃຊ້ຈ່າຍ ຫລື ຜົນກະທົບຕໍ່ແຮງງານ ແລະ ເຈົ້າຂອງເຮືອ (Seafood Task Force 2021). ອົງການຈັດຕັ້ງທາງສັງຄົມຂອງໄທ ແລະ ຜູ້ສະໜັບສະໜູນແຮງງານອື່ນໆ ໄດ້ໂຕ້ແຍ້ງວ່າ ຜູ້ຊື້ທົ່ວໂລກໄດ້ມີ “ຄວາມຄືບໜ້າຄົງທີ່” ເພື່ອຢຸດຕິແຮງງານບັງຄັບ ແລະ ການຂູດຮີດແຮງງານ, ແລະ ຕ້ອງມີຄວາມຮັບຜິດຊອບໃນການປັບປຸງຄ່າຈ້າງແຮງງານ ແລະ ການເຂົ້າເຖິງການດູແລຮັກສາສຸຂະພາບ (Wongsamuth 2021d; Rogovin 2021).

18 See, for example, Thomas Adamson and Francoise Mori, “Fashion Industry Evolves, as Virus Forces a Rethink”, in AP News, 18 April 2021.

## ▶ ສະຫລຸບ

ຄຳເວົ້າທີ່ວ່າ "ບໍ່ເຫັນ ກໍ່ບໍ່ຄິດເຖິງ" ເບິ່ງຄືວ່າເປັນຄວາມຈິງໃນຂະແໜງການປະມົງເປັນສິນຄ້າໃນໄລຍະການລະບາດຂອງພະຍາດໂຄວິດ19, ນອກຈາກສິ່ງທີ່ຕ້ອງໄດ້ເອົາໃຈໃສ່ຕໍ່ການປະຕິບັດຕໍ່ແຮງງານໃນອຸດສາຫະກຳ ແລະ ຄຳໝັ້ນສັນຍາໃນການປະຕິຮູບກ່ອນເກີດການລະບາດຂອງພະຍາດ. ນີ້ແມ່ນຄວາມຈິງສອງເທົ່າສຳລັບຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍ ໃນອຸດສາຫະກຳ, ເຊິ່ງໂດຍທົ່ວໄປແລ້ວຂາດການປົກປ້ອງຈາກການລົງມືປະຕິບັດຂອງລັດຖະບານ ແລະ ນາຍຈ້າງ.

ການວັດແທກດ້ານປະລິມານທີ່ເປັນປະໂຫຍດຕໍ່ກັບຜົນກະທົບ ຂອງການລະບາດຂອງພະຍາດຢູ່ໃນອຸດສາຫະກຳການປະມົງ ແລະ ຊາວປະມົງແມ່ນຍາກທີ່ຈະຄົ້ນພົບ. ຂະໜາດ ແລະ ການປະຕິບັດຂອງອຸດສາຫະກຳໃນລະດັບຊາດບໍ່ສາມາດເຫັນໄດ້ຊັດເຈນ, ແລະ ເປັນທີ່ສັງເກດໄດ້ວ່າ ໃນການສຶກສາຄົ້ນຄວ້າຄັ້ງນີ້ ການລາຍຂອງງານຂອງສື່ມວນຊົນ ແລະ ຂໍ້ມູນທາງການກ່ຽວກັບການປະຕິບັດຕໍ່ແຮງງານທີ່ມີຢ່າງກ້ວາງຂວາງນັ້ນແມ່ນມີແຕ່ຢູ່ ປະເທດດຽວເທົ່ານັ້ນແໜງປະມົງຢູ່ປະເທດເຫຼົ່ານີ້ - ເຊັ່ນ: ເງື່ອນໄຂການເຮັດວຽກ, ການປົກປ້ອງສິດທິແຮງງານ ແລະ ຄ່າຈ້າງ, - ຫມາຍຄວາມວ່ານັກຄົ້ນຄວ້າບໍ່ມີຂໍ້ມູນເບື້ອງຕົ້ນເພື່ອມາວັດແທກເຖິງຜົນກະທົບຂອງການລະບາດຂອງພະຍາດ. ການຂາດຂໍ້ມູນທົ່ວໄປກ່ຽວກັບການປະຕິບັດຕໍ່ແຮງງານໃນຂະແໜງປະມົງຢູ່ອາຊີ ແມ່ນກົງກັນຂ້າມກັບການເກັບກຳຂໍ້ມູນ ແລະວິເຄາະຈຳນວນປາທີ່ຫາໄດ້. ຂໍ້ມູນນີ້ແມ່ນການເກັບກຳຂໍ້ມູນທົ່ວໄປ ແລະ ຊອກຫາງ່າຍກວ່າຂໍ້ມູນຂອງກຳລັງແຮງງານໃນອຸດສາຫະກຳທີ່ເປັນພື້ນຖານ ແລະ ເຊື່ອຖືໄດ້ ພ້ອມທັງຂໍ້ກຳນົດ ແລະ ເງື່ອນໄຂການເຮັດວຽກຂອງພວກເຂົາ. ສິ່ງເຫລົ່ານີ້ຕ້ອງໄດ້ມີການປ່ຽນແປງ, ຕົ້ນຕໍແມ່ນຜ່ານຄວາມພະຍາຍາມຂອງເຈົ້າຫນ້າທີ່ອອກລະບຽບຄຸ້ມຄອງ ແລະ ຜູ້ຊື້ເຊັ່ນດຽວກັນກັບສື່ມວນຊົນ, ອົງການຈັດ ຕັ້ງຂອງຜູ້ອອກແຮງງານ ແລະ ນັກຄົ້ນຄວ້າ.

19 According to the World Health Organization, approximately 15 per cent of the total positive cases in Thailand are migrant workers. While this appears to be a minority of the overall cases, on a per capita basis, migrants are disproportionately affected. For every 1,000 migrants from Cambodia, the Lao People’s Democratic Republic, and Myanmar, 22.04 were infected (United Nations Network on Migration 2021). Figures specifically for the seafood processing sector were not available. The infection rate reflects risks migrant workers face, including the lack of social distancing at workplace, often crowded living conditions, and poor access to health education and PPE.
20 Email correspondent with Thai Union dated 6 January 2021.
21 See, for example, “CP Foods Donates Food Aid to Migrant Workers and Medical Staff in Thailand”, The Poultry Site, 8 January 2021; Thai Union, “Press Release on Thai Union Donates THB 1 Million in SEALECT Products to Communities Affected by COVID-19”, 10 April 2020; and CPF, “Press Release on CP Group and CP Foods Make Multiple COVID-Relief Efforts to Help Thailand Tackle COVID-19”, 11 February 2021.

ເຖິງຢ່າງໃດກໍຕາມ, ຈາກການວິເຄາະຂ້າງເທິງນີ້ແມ່ນມີສີ່ຢ່າງທີ່ຈະແຈ້ງກໍຄື. ໜຶ່ງ, ກິດຈະກໍາການປະມົງ ແລະ ການຄ້າຫຼຸດລົງຢ່າງເຫັນໄດ້ຊັດເຈນໃນຕົ້ນກາງປີ 2020, ປະລິມານການຄ້າປະຈໍາປີ, ມູນຄ່າ ແລະ ການຫາປາໄລຍະໄກຍັງຊ້າກວ່າລະດັບປີ 2019. ການນໍາເຂົ້າຈາກບັນດາປະເທດທີ່ໄດ້ດໍາເນີນການສຶກສາຄົ້ນຄວ້າ ໄປຫາຕະຫຼາດສະຫະລັດ ແລະ ສະຫະພາບເອີຣົບໄດ້ຫຼຸດລົງປະມານ 14 ເປີເຊັນໃນປີ 2020 (ເບິ່ງຮູບ 2).

ສອງ, ຄວາມຕ້ອງທີ່ການຫຼຸດລົງປະກົດວ່າເປັນສາເຫດຕົ້ນຕໍຂອງການຫຼຸດລົງຂອງກິດຈະກໍາການປະມົງບໍ່ແມ່ນບັນຫາການສະໜອງ, ຍ້ອນວ່າອຸດສາຫະກໍາການປະມົງສ່ວນໃຫຍ່ບໍ່ມີຜົນກະທົບຈາກການບັງຄັບໃຊ້ຂໍ້ກໍານົດການປິດປະເທດ ຫຼື ນະໂຍບາຍພະຍາດໂຄວິດ 19 ເຊິ່ງ ເຮັດໃຫ້ພວກເຂົາສາມາດດໍາເນີນກິດຈະການໄດ້ຫຼາຍຄືແຕ່ກ່ອນ. ການປິດຊາຍແດນ ແລະ ຄວາມສັບສົນກ່ຽວກັບສະຖານະພາບການເຮັດວຽກທີ່ຫລາຍຂຶ້ນຂອງແຮງງານເຄື່ອນຍ້າຍໄດ້ມີກະທົບຕໍ່ຊີວິດ - ໂດຍສະເພາະຕໍ່ບັນດາຊາວປະມົງທີ່ອອກຫາປາໄລຍະໄກ - ແລະ ການເຄັ່ງຕຶງຂອງຕະຫລາດແຮງງານໃນວຽກຂະແໜງການປະມົງ ເຊິ່ງປົກກະຕິແລ້ວອາດຈະເຮັດໃຫ້ແຮງງານມີອໍານາດໃນການຕໍ່ລອງຄ່າແຮງງານເພີ່ມຂຶ້ນ, ແຕ່ປະກົດວ່າກິດຈະກໍາການປະມົງໄດ້ຫລຸດລົງ ແລະ ມີຄວາມຢ້ານກົວຕໍ່ "ການຕໍ່ຕ້ານ".

ສາມ, ການປົກປ້ອງທາງກົດໝາຍ ແລະ ບໍາເນັດສະເພາະຂອງຊາວປະມົງຈາກການພະຍາດຂອງລະບາດ, ໂດຍລວມແລ້ວ, ແມ່ນມີໄວ້ສໍາລັບຄົນພາຍໃນເທົ່ານັ້ນບໍ່ແມ່ນສໍາລັບແຮງງານເຄື່ອນຍ້າຍ. ການແຕກໂຕນໃນການປະຕິບັດຕໍ່ແຮງງານແມ່ນເຫັນໄດ້ຊັດເຈນຢູ່ໃນອຸດສາຫະກໍາການປະມົງຂອງປະເທດໄທ ແລະ ສ.ເກົາຫຼີ ເຊິ່ງສ່ວນໃຫຍ່ແມ່ນແຮງງານເຄື່ອນຍ້າຍ — ນີ້ໄດ້ສະທ້ອນໃຫ້ເຫັນເຖິງຄວາມບໍ່ສະເໝີພາບໃນສັງຄົມ ແລະ ນະໂຍບາຍ ເຊິ່ງເຮັດໃຫ້ການຈໍາແນກແຜ່ລາມໃນວົງກວ້າງ. ການຈໍາແນກເຫລົ່ານີ້ແມ່ນສ້າງຄວາມຫຍຸ້ງ ຍາກສະເພາະໃຫ້ແກ່ແຮງງານເຄື່ອນຍ້າຍເນື່ອງຈາກວ່າເຂົາເຈົ້າມີຂໍ້ຈໍາກັດໃນການເຂົ້າເຖິງການປົກປ້ອງທາງສັງຄົມ (ໂດຍໜ້າວຽກ) ແລະ ມີຄວາມເຄັ່ງຄັດຫລາຍກວ່າແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ໃນຂະແໜງການທີ່ເປັນລະບົບ.

ສຸດທ້າຍ, ຂະໜາດຂອງຜົນກະທົບຂອງໂລກລະບາດຕໍ່ການເຮັດວຽກ, ການຄ້າ ແລະ ລະບຽບການຂອງແຮງງານໄດ້ເປີດເຜີຍໃຫ້ຮູ້ເຖິງການຂາດໂຄງການຮັບ ຜິດຊອບທາງສັງຄົມແບບສະໝັກໃຈ ແລະ ມີຄວາມຍືນຍົງຂອງຜູ້ຊືອາຫານທະເລ ໃນການປົກປ້ອງແຮງງານ. ຂໍ້ລິເລີ່ມຂອງອຸດສາ ຫະກໍາທີ່ສໍາຄັນອັນໜຶ່ງໃນພາກພື້ນກໍ່ຄືການໃຫ້ຄໍາໝັ້ນສັນຍາທີ່ຈະສ້າງຄວາມເຂັ້ມແຂງໃຫ້ແກ່ກອບນິຕິກໍາແຫ່ງຊາດ ແລະ ການບັງຄັບໃຊ້ທີ່ມີປະສິດທິຜົນຕໍ່ແຮງງານ, ແຕ່ຂໍ້ລິເລີ່ມນີ້ຖືກຈັດໄວ້ເປັນບູລິມະສຸດຕໍ່າສຸດ (Seafood Task Force 2021). ຄວາມລົ້ມເຫຼວຂອງການອອກລະບຽບການດ້ວຍຕົນເອງແມ່ນມີຜົນຕໍ່ຄູ່ການຄ້າ, ໂດຍສະ ເພາະສະຫະລັດ, ທາງສະພາ ຂອງສະຫະລັດໄດ້ຜ່ານນິຕິກໍາ ເລກທີ 1260 ໃນເດືອນ ພຶດສະພາ ປີ 2021 ເຊິ່ງຮຽກຮ້ອງໃຫ້ລັດຖະບານບາຍເດັນ: ອອກກົດລະບຽບກ່ຽວກັບການຢັ້ງຢືນການນໍາເຂົ້າອາຫານທະເລ ເພື່ອຮັບປະ ກັນບໍ່ໃຫ້ອາຫານທະເລຫຼືຜະລິດຕະພັນອາຫານທະເລຖືກຜະລິດ ໂດຍການນໍາໃຊ້ແຮງງານບັງຄັບນັ້ນນໍາເຂົ້າມາໃນສະຫະລັດ, ແລະ ສ້າງຍຸດທະສາດສໍາລັບການນໍາໃຊ້ຂໍ້ມູນການຕິດຕາມກວດກາການນໍາເຂົ້າອາຫານທະເລ (SIMP) ເພື່ອກໍານົດການນໍາເຂົ້າທີ່ມີຄວາມສ່ຽງຕໍ່ການຜະລິດທີ່ນໍາໃຊ້ແຮງງານບັງຄັບ. ນໍາໃຊ້ USTR [ຜູ້ຕາງໜ້າການຄ້າສະຫະລັດ] ເພື່ອພົວພັນກັບຄູ່ການຄ້າຂອງສະຫະລັດ ກ່ຽວກັບການພັດທະນາແຜນການຕິດຕາມອາຫານທະເລ ແລະ ຄວາມຍືນຍົງ.[22]

## ຂໍ້ແນະນໍາ

ເພື່ອແກ້ໄຂວິກິດການພະຍາດໂຄວິດ 19, ອົງການ ILO ໄດ້ສະເໜີກອບນະໂຍບາຍໂດຍອີງໃສ່ສີ່ເສົາຄໍ້າອີງຕາມມາດຕະຖານແຮງງານສາກົນດັ່ງນີ້:

i. ການພັດທະນາ ແລະ ກະຕຸ້ນເສດຖະກິດ;

ii. ການສະນັບສະໜູນວິສາຫະກິດ, ວຽກເຮັດງານທໍາ ແລະ ລາຍໄດ້;

iii. ການປົກປ້ອງແຮງງານຢູ່ໃນສະຖານທີ່ເຮັດວຽກ; ແລະ

iv. ການປຶກສາຫາລືເພື່ອຊອກແນວທາງແກ້ໄຂ ບັນຫາ (ອົງການ ILO2020f).

ໃນຂະນະທີ່ພະຍາດລະບາດຍັງສືບຕໍ່ສົ່ງຜົນກະທົບຕໍ່ສຸຂະພາບ ແລະສະຫວັດ ດີການເສດຖະກິດ-ສັງຄົມຂອງປະຊາກອນໃນທົ່ວໂລກນັ້ນ, ການສືບຕໍ່ລະ ດົມຂົນຂວາຍຊັບພະຍາກອນ ແລະ ການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງຕາມ 4 ເສົາຄໍ້ານີ້ ຍັງເປັນການປົກປ້ອງວຽກເຮັດງານທໍາ ແລະ ຊີວິດການເປັນຢູ່ອັນສໍາຄັນ, ລວມທັງແຮງງານຢູ່ໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ. ການເອົາໃຈໃສ່ແບບຍືນຍົງຕໍ່ແຮງງານ, ລວມທັງແຮງງານເຄື່ອນຍ້າຍ, ທີ່ເຮັດວຽກຢູ່ໃນຂະແຫນງການເຫຼົ່ານີ້ແມ່ນສໍາຄັນຫລາຍ, ໂດຍສະເພາະໃນບ່ອນທີ່ແຮງງານຖືກ "ເບິ່ງຂ້າມ" ຈາກນະໂຍບາຍ ເຊິ່ງໄດ້ຈໍາກັດສິດເສລີພາບໃນການເຄື່ອນ ໄຫວຂອງພວກເຂົາຢ່າງຮຸນແຮງ ຫຼື ຢູ່ໃນສະຖານທີ່ເຮັດວຽກ - ເຮືອປະມົງ - ທີ່ມີຄວາມຫຍຸ້ງຍາກໃນການຕິດຕາມກວດກາ.

ການແຜ່ລະບາດຂອງພະຍາດໂຄວິດ 19 ໄດ້ເຮັດໃຫ້ຄວາມບໍ່ສະເໝີພາບທີ່ມີຢູ່ແລ້ວຮ້າຍແຮງຂຶ້ນ, ແລະ ການຕອບໂຕ້ທາງນະໂຍບາຍຕ້ອງຮັບປະກັນສະໜັບສະໜູນການເຂົ້າເຖິງຂອງຜູ້ອອກແຮງງານ ແລະ ວິສາຫະກິດທີ່ມີຄວາມຕ້ອງ ການຫຼາຍທີ່ສຸດ. ພ້ອມກັນນັ້ນ, ນະໂຍບາຍຕອບໂຕ້ ແລະ ຟື້ນຟູພະຍາດໂຄວິດ 19 ກໍເປັນໂອກາດເພື່ອແກ້ໄຂບັນຫາຂາດດຸນວຽກເຮັດງານທີ່ມີຄ່າ ແລະ ເປັນທໍາກ່ອນໜ້ານີ້ ແລະ ຄວາມບໍ່ສະເໝີພາບທາງດ້ານໂຄງສ້າງ, ໂດຍສະເພາະແມ່ນຂະແໜງການປະ

ປະມົງ ແລະ ອາຫານທະເລ ເຊິ່ງການປົກປ້ອງແຮງງານ ແລະ ການປະຕິບັດກົດໝາຍຕໍ່ແຮງງານຍັງບໍ່ເຂັ້ມແຂງ. ມີຄວາມຈຳເປັນທີ່ຈະຕ້ອງມີຄວາມພະຍາຍາມສືບຕໍ່ຊຸກຍູ້ມາດຕະຖານແຮງງານສາກົນ ເພື່ອແກ້ໄຂຊ່ອງຫວ່າງໃນການປົກປ້ອງຜູ້ອອກແຮງງານ. ປັບປຸງການປະຕິບັດຂອງບໍລິສັດໃຫ້ມີຄວາມໂປ່ງໃສຫລາຍຂຶ້ນ ເຊັ່ນດຽວກັນກັບການປັບປຸງການເກັບກຳ ແລະ ການເປີດເຜີຍຂໍ້ມູນຂອງຜູ້ອອກແຮງງານ, ໂດຍສະເພາະຜູ້ທີ່ເຮັດວຽກໃນຂະແໜງປະມົງແມ່ນມີຄວາມສຳຄັນຫລາຍ ເພື່ອຮັບປະກັນວ່າແຮງງານເຫຼົ່ານີ້ບໍ່ຕົກຢູ່ໃນການຖືກເບິ່ງຂ້າມຈາກນະໂຍບາຍໃນໄລຍະການແຜ່ລະບາດຂອງພະຍາດ ແລະ ຜົນກະທົບທີ່ຕາມມາ. ການສະນັບສະໜູນວິສາຫະກິດ, ພ້ອມທັງເສີມຂະຫຍາຍການປົກປ້ອງທາງສັງຄົມໃຫ້ແກ່ແຮງງານທຸກຄົນ - ລວມທັງແຮງງານເຄື່ອນຍ້າຍ - ເປັນກຸນແຈອັນສຳຄັນໃນການຫຼຸດຜ່ອນຜົນກະທົບທາງລົບຂອງພະຍາດລະບາດ.

ຢູ່ອາຊີຕາເວັນອອກສຽງໃຕ້, ກອງປະຊຸມອາຊຽນຄັ້ງທີ 14 ວຽກງານແຮງງານເຄື່ອນຍ້າຍ (AFML) ໄດ້ຈັດຂຶ້ນໃນເດືອນ ກັນຍາ ປີ 2021, ໄດ້ເນັ້ນໜັກໃສ່ການຊຸກຍູ້ສົ່ງເສີມບັນດານະໂຍບາຍ ແລະ ຂໍ້ລິເລີ່ມຕ່າງໆທີ່ເອົາໃຈໃສ່ຕໍ່ບົດບາດຍິງຊາຍ ລວມທັງງົບປະມານທີ່ກ່ຽວຂ້ອງໃນທຸກຂັ້ນຕອນຂອງການເຄື່ອນຍ້າຍເພື່ອຕອບໂຕ້ກັບຜົນກະທົບທາງລົບຂອງການລະບາດຂອງພະຍາດໂຄວິດ19 ຕໍ່ກັບແຮງງານທັງໝົດໂດຍບໍ່ຄຳນຶງເຖິງສະຖານະພາບການເຄື່ອນຍ້າຍ. ນອກຈາກຂໍ້ສະເໜີແນະຈາກກອງປະຊຸມ AFML ຄັ້ງທີ 14 ທີ່ລະບຸເຖິງຄວາມຈຳເປັນທີ່ຈະຕ້ອງສືບຕໍ່ປົກປ້ອງແຮງງານເຄື່ອນຍ້າຍໃນໄລຍະການແຜ່ລະບາດຂອງພະຍາດ ແລະ ຮັບປະກັນວ່າແຮງງານເຄື່ອນຍ້າຍບໍ່ຖືກປະຖິ້ມໄວ້ຂ້າງຫລັງໃນໄລຍະຟື້ນຟູ ແລະ ພາຍຫຼັງການແຜ່ລະບາດຂອງພະຍາດ (ASEAN 2021), ຂໍ້ສະເໜີແນະດັ່ງຕໍ່ໄປນີ້ໄດ້ຍົກໃຫ້ເຫັນເຖິງຄວາມຕ້ອງການສະເພາະຂອງແຮງງານເຄື່ອນຍ້າຍທີ່ເຮັດວຽກໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ. ຂໍ້ສະເໜີແນະເຫຼົ່ານີ້ຈຳເປັນຕ້ອງໄດ້ຮັບການຈັດຕັ້ງປະຕິບັດໂດຍການນຳພາຂອງລັດຖະບານ ແລະ ການສະໜັບສະໜູນຈາກຄູ່ຮ່ວມງານທາງສັງຄົມ, ລວມທັງອົງການຈັດຕັ້ງຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ. ນາຍຈ້າງ ແລະ ສະມາຄົມອຸດສາຫະກຳ ຍັງໄດ້ຖືກຮຽກຮ້ອງໃຫ້ເປີດກວ້າງການໂຕ້ຕອບກັບວິກິດການພະຍາດໂຄວິດ19 ແລະ ແກ້ໄຂຄວາມຕ້ອງການຂອງແຮງງານຢ່າງຕັ້ງໜ້າ. ເນື່ອງຈາກມູນຄ່າການສົ່ງອອກມີຄວາມສຳຄັນຕໍ່ອຸດສາຫະກຳການປະມົງ ແລະ ອາ ຫານທະເລໃນອາຊີຕາເວັນອອກສຽງໃຕ້, ຜູ້ຊື້ສາມາດສ້າງຄວາມກົດດັນຕໍ່ຕະຫຼາດເພື່ອສ້າງແຮງຈູງໃຈໃນການປັບປຸງເງື່ອນໄຂແຮງງານໃຫ້ແກ່ຜູ້ອອກແຮງງານ.

- **ປັບປຸງການເກັບກຳ ແລະ ເປີດເຜີຍຂໍ້ມູນກ່ຽວກັບແຮງງານເຄື່ອນຍ້າຍທີ່ເຮັດວຽກໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ.** ປະເທດປາຍທາງໃນປະຈຸບັນທີ່ຈ້າງງານແຮງງານເຄື່ອນຍ້າຍຢູ່ໃນຖານຂໍ້ມູນສະຖິຕິແຮງງານສາກົນຂອງອົງການ ILO ໂດຍທົ່ວໄປແມ່ນອີງໃສ່ການສຳຫຼວດກຳລັງແຮງງານ ແລະ ການບັນທຶກທາງບໍລິຫານ. ການບັນທຶກທາງບໍລິຫານແມ່ນຂຶ້ນກັບຂະບວນການມາດຕະຖານ ເຊິ່ງເປັນທີ່ຮູ້ຈັກກັນດີວ່າຂາດບັນຊີທີ່ຄົບຖ້ວນ, ໂດຍສະເພາະກຸ່ມປະຊາກອນທີ່ມີການເຄື່ອນຍ້າຍຫລາຍ ແລະ ຍາກທີ່ຈະເຂົ້າເຖິງ ເຊັ່ນຊາວປະມົງ. ການມີຂໍ້ມູນ ແລະ ຂໍ້ມູນທີ່ເຊື່ອຖືໄດ້ແມ່ນຍາກທີ່ຈະເຂົ້າເຖິງໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ 19 ເນື່ອງຈາກມາດຕະການຄວບຄຸມໄດ້ຈຳກັດການເກັບກຳຂໍ້ມູນ. ເພື່ອສົ່ງເສີມການບໍລິການສາທາລະນະໃຫ້ມີປະສິດທິຜົນຫລາຍຂຶ້ນ ແລະ ການບັງຄັບໃຊ້ໃນວຽກແຮງງານ ແລະ ການປົກປ້ອງສັງຄົມໃຫ້ແກ່ແຮງງານເຄື່ອນຍ້າຍນັ້ນ, ຕ້ອງມີການພັດທະນາແຫຼ່ງຂໍ້ມູນທີ່ເຂັ້ມແຂງ ແລະ ຮັກສາການບັງຄັບໃຊ້ກົດໝາຍກວດຄົນເຂົ້າເມືອງຢ່າງເຂັ້ມງວດ.
- **ຈັດຕັ້ງການປຶກສາຫາລືສາມຝ່າຍ ແລະ ອົງການຈັດຕັ້ງທາງສັງຄົມໃນການພັດທະນາ ແລະ ການຈັດຕັ້ງປະຕິບັດການຄຸ້ມຄອງການເຄື່ອນຍ້າຍແຮງງານ, ໂດຍສະເພາະໃນໄລຍະການຕອບໂຕ້ ແລະ ຟື້ນຟູຈາກພະຍາດໂຄວິດ 19.** ເພື່ອສະໜັບ ສະໜູນໃຫ້ມີກອບກົດຫມາຍທີ່ໂຕ້ຕອບໄດ້ຫລາຍຂຶ້ນ ຕ້ອງໄດ້ມີການປຶກສາຫາລືກັບຫລາຍພາກສ່ວນ ລວມທັງການເປັນຕົວແທນຂອງລັດຖະບານ, ຜູ້ໃຊ້ແຮງງານ, ຜູ້ອອກ ແຮງງານ ແລະ ອົງການຈັດຕັ້ງທາງສັງຄົມ (CSOs) ຢ່າງຍຸຕິທຳ - ບັນດາຜູ້ມີສ່ວນຮ່ວມເຫລົ່ານີ້ຕ້ອງໄດ້ເຂົ້າມາມີສ່ວນຮ່ວມກັບຂະບວນການສ້າງແລະຈັດຕັ້ງປະຕິບັດການໂຕ້ຕອບກັບພະຍາດລະບາດ ແລະ ນະໂຍບາຍຟື້ນຟູ. ຄູ່ຮ່ວມງານທາງສັງຄົມ ແລະ ອົງການຈັດຕັ້ງທາງສັງຄົມ, ໂດຍສະເພາະຜູ້ທີ່ເປັນຕົວແທນຜົນປະໂຫຍດຂອງແຮງງານໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ, ຍັງສືບຕໍ່ຖືກຍົກເວັ້ນຈາກຂະບວນການປຶກສາຫາລືຂອງຫຼາຍປະເທດໃນພາກພື້ນ, ເຊິ່ງໄດ້ປະກອບສ່ວນເຂົ້າໃນການສ້າງນິຕິກຳແຕ່ຂັ້ນເທິງລົງລຸ່ມຂອງລັດຖະບານຕໍ່ກັບບັນຫາການເຄື່ອນຍ້າຍແຮງງານ. ການຂະຫຍາຍການປຶກສາຫາລືນະໂຍບາຍການເຄື່ອນຍ້າຍຂອງຫລາຍພາກສ່ວນແມ່ນມີຄວາມສຳຄັນໂດຍສະເພາະໃນໄລຍະການແຜ່ລະບາດຂອງພະບາດໂຄວິດ 19 ເພື່ອຮັບປະກັນວ່າແຮງງານເຄື່ອນຍ້າຍບໍ່ໄດ້ຖືກລະ ເລີຍຫຼືຕົກຢູ່ໃນການຕອບໂຕ້ຂອງນະໂຍບາຍທີ່ມີຜົນກະທົບຕໍ່ການຖືກຈຳ ແນກທາງກົງຫຼືທາງອ້ອມ, ລວມທັງມາດຕະການທາງສາທາລະນະສຸກ.
- **ໃຫ້ສັດຕະຍາບັນມາດຕະຖານແຮງງານສາກົນທີ່ສຳຄັນກ່ຽວກັບການຈ້າງງານແຮງງານເຄື່ອນຍ້າຍໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ ເພື່ອແກ້ໄຂຊ່ອງຫວ່າງໃນການປົກປ້ອງແຮງງານ.** ການຫຼາຍທີ່ສຸດ. ພ້ອມກັນນັ້ນ, ນະໂຍບາຍຕອບໂຕ້ ແລະ ຟື້ນຟູພະຍາດໂຄວິດ 19. ປະເທດໄທໄດ້ມີຄວາມຄືບໜ້າໃນການໃຫ້ສັດຕະຍາບັນສົນທິສັນຍາວ່າດ້ວຍວຽກໃນຂະແໜງປະມົງປີ 2007 (ສະບັບເລກທີ 188). ການປະຕິບັດຕາມບັນດາມາດຕາຕ່າງໆຢູ່ໃນສົນທິສັນຍາຢ່າງຄົບຖ້ວນຈະເຮັດໃຫ້ເກີດມີຄວາມແຕກຕ່າງອັນສຳຄັນ ໃນການປັບປຸງເງື່ອນໄຂການເຮັດວຽກຂອງຊາວປະມົງ, ເນື່ອງຈາກວ່າສົນທິສັນຍາໄດ້ໂຕ້ຕອບໂດຍກົງຕໍ່ການຂາດດຸນການເຮັດວຽກທີ່ມີຄ່າ ແລະ ເປັນທຳທີ່ພວກເຂົາປະເຊີນຢູ່. ບັນດາປະເທດຕົ້ນທາງ ແລະ

ປາຍທາງ ຂອງ ຊາວປະມົງທີ່ເປັນແຮງງານເຄື່ອນຍ້າຍໃນອາຊີຄວນສືບຕໍ່ໃຫ້ສັດຕະຍາບັນສົນທິສັນຍາເລກທີ 188 ເພື່ອປົກປ້ອງສິດທິແຮງງານຂອງເຂົາເຈົ້າໃຫ້ດີຂຶ້ນ, ພ້ອມທັງສົນທິສັນຍາ ແລະ ອະນຸສັນຍາອື່ນໆທີ່ກ່ຽວຂ້ອງຂອງອົງການ ILO, ເຊັ່ນ: ສົນທິສັນຍາການເຄື່ອນຍ້າຍເພື່ອການມີວຽກເຮັດງານທຳ (ສະບັບປັບປຸງ), ປີ 1949 (ສະບັບເລກທີ 97); ສົນທິສັນຍາແຮງງານເຄື່ອນຍ້າຍ (ບົດບັນຍັດເພີ່ມເຕີມ) ປີ 1975 (ສະບັບເລກທີ 143); ສົນທິສັນຍາວ່າດ້ວຍບໍລິສັດຈັດຫາງານເອກະຊົນ, ປີ 1997 (ສະບັບເລກທີ 181); ແລະ ອະນຸສັນຍາປີ 2014 ຂອງສົນທິສັນຍາວ່າດ້ວຍແຮງງານບັງ ຄັບ, ປີ 1930.

- **ຂະຫຍາຍການປົກປ້ອງສິດທິແຮງງານໃຫ້ແກ່ແຮງງານເຄື່ອນຍ້າຍເພດຍິງ ແລະ ເພດຊາຍໂດຍບໍ່ຄໍານຶງເຖິງລະບຽບໃນການຈ້າງງານຂອງເຂົາເຈົ້າ.** ເພື່ອຮັບປະກັນວ່າແຮງງານເຄື່ອນຍ້າຍໄດ້ຮັບເງື່ອນໄຂ ແລະ ຄ່າແຮງງານທີ່ເໝາະສົມ ແລະ ເປັນທຳ, ການປົກຄຸມສິດທິແຮງງານຄວນຂະຫຍາຍໄປເຖິງແຮງງານເຄື່ອນຍ້າຍທີ່ເຮັດວຽກໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລທັງໝົດ. ການຍົກເວັ້ນແຮງງານເຄື່ອນຍ້າຍທີ່ເຮັດວຽກໃນຂະແໜງນອກລະບົບ – ເລີ່ມຈາກການປົກປ້ອງທາງກົດໝາຍຕໍ່ກັບສິດທິແຮງງານຂອງເຂົາເຈົ້າ ຈົນເຖິງຄວາມສ່ຽງຕໍ່ກັບການຂູດຮີດ ແລະ ການລ່ວງລະເມີດ ຄວນມີການປັບປຸງກົດໝາຍແຮງງານທີ່ກ່ຽວຂ້ອງ ແລະ/ຫຼື ຮັບຮອງເອົານິຕິກຳຍ່ອຍຕໍ່ກັບຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ, ພ້ອມທັງການປັບປຸງການບັງຄັບໃຊ້ນິຕິກຳເພື່ອຂະຫຍາຍການປະຕິບັດຕາມກົດໝາຍຂອງນາຍຈ້າງ, ແລະ ເພື່ອເຮັດໃຫ້ການປົກປ້ອງແຮງງານໄດ້ປົກຄຸມຫຼາຍຂຶ້ນ.

- **ຂະຫຍາຍການເຂົ້າເຖິງການອຸດໜູນຈາກການປົກປ້ອງທາງສັງຄົມຂອງແຮງງານເຄື່ອນຍ້າຍ, ໂດຍສະເພາະໃນໄລຍະການຕອບໂຕ້ແລະການຟື້ນຟູຈາກພະຍາດໂຄວິດ 19.** ບັນດາປະເທດປາຍທາງໃນອາຊີໄດ້ບັນລຸຜົນສຳເລັດອັນໃຫຍ່ຫຼວງໃນການພັດທະນາລະບົບປົກປ້ອງສັງຄົມໃນທົດສະວັດທີ່ຜ່ານມາ, ໂດຍໃຫ້ແຮງງານທີ່ມີຄວາມສ່ຽງຫຼາຍລ້ານຄົນໄດ້ເຂົ້າເຖິງການອຸດໜູນເພື່ອຊ່ວຍຫຼຸດຜ່ອນຄວາມຕົກໃຈ ແລະ ຄວາມກົດດັນທີ່ກ່ຽວຂ້ອງກັບການສູນເສຍລາຍໄດ້. ເຖິງຢ່າງໃດກໍ່ຕາມ, ພະຍາດໂຄວິດ 19 ກໍໄດ້ຍົກໃຫ້ເຫັນເຖິງການຍົກເວັ້ນແຮງງານເຄື່ອນຍ້າຍຈຳ ນວນຫຼວງຫຼາຍຈາກການປົກຄຸມຂອງລະບົບປົກປ້ອງສັງຄົມ ເນື່ອງຈາກການຈ້າງງານນອກລະບົບ, ນາຍຈ້າງບໍ່ຂຶ້ນທະບຽນແຮງງານຂອງຕົນ ແລະ ອຸປະສັກໃນພາກປະຕິບັດຕົວຈິງໃນການເຂົ້າເຖິງສິດໃນການໄດ້ຮັບການອຸດໜູນ. ການຄຸ້ມຄອງທຸກຖ້ວນໜ້າຈາກການປົກປ້ອງທາງສັງຄົມຄວນຈະໄດ້ຮັບການການປັບປຸງໂດຍຜ່ານການຂະຫຍາຍເງື່ອນໄຂການໄດ້ຮັບສິດ ແລະ ຂຶ້ນລົງທະບຽນຂອງແຮງງານເຄື່ອນຍ້າຍ, ໃນຂະນະດຽວກັນກໍ່ຮັບປະ ກັນວ່າເຂົາເຈົ້າສາມາດນໍາໃຊ້ສິດໃນການໄດ້ຮັບການອຸດໜູນຂອງເຂົາ ເຈົ້າໄດ້ຢ່າງເຕັມສ່ວນ.

- **ຍົກຍ້າຍສິ່ງກີດຂວາງທີ່ເປັນອຸປະສັກໃນການເຂົ້າເຖິງມາດຕະການປົກປ້ອງຈາກພະຍາດໂຄວິດ 19 ໃຫ້ແກ່ແຮງງານເຄື່ນຍ້າຍເພດຍິງ ແລະ ຊາຍ.** ເພື່ອຮັບປະກັນວ່າມາດຕະການຕອບໂຕ້ພະຍາດໂຄວິດ 19 ເຊັ່ນ: ການຕໍ່ອາຍຸໃບອະນຸຍາດພັກເຊົາ, ອຸດໜູນປະກັນສັງຄົມ ແລະ ຂໍ້ລິເລີ່ມທາງສາທາລະນະສຸກອື່ນໆ ແຮງງານເຄື່ອນຍ້າຍເພດຍິງ ແລະ ເພດຊາຍທີ່ມີສິດສາມາດເຂົ້າເຖິງໄດ້ນັ້ນຕ້ອງໄດ້ຍົກຍ້າຍສິ່ງກີດຂວາງຕ່າງໆໃນການເຂົ້າເຖິງ. ໂດຍຜ່ານການປຶກສາຫາລື, ລວມທັງການເປັນຕົວແທນຂອງລັດຖະບານ, ນາຍຈ້າງ, ແຮງງານ ແລະ ອົງການຈັດຕັ້ງທາງສັງຄົມຢ່າງຍຸຕິທຳ, ສິ່ງກີດຂວາງຕ່າງໆ ເຊັ່ນ: ຄ່າໃຊ້ຈ່າຍສູງ, ການຂາດການເຂົ້າເຖິງສະຖານທີ່ ຫຼື ທາງອອນລາຍ, ແລະ ເງື່ອນໄຂທາງພາສາ, ໄດ້ເຮັດໃຫ້ເກີດມີການປະຕິບັດທີ່ບໍ່ເທົ່າທຽມກັນຕໍ່ແຮງງານເຄື່ອນຍ້າຍ, ເຖິງແມ່ນວ່າຈະມີນະໂຍ ບາຍປົກປ້ອງແລ້ວກໍຕາມ.

- **ຮັບປະກັນສິດເສລີພາບໃນການສ້າງຕັ້ງສະມາຄົມ ແລະ ການຕໍ່ລອງລວມໝູ່ຂອງແຮງງານເຄື່ອນຍ້າຍ, ແລະ ແກ້ໄຂສິ່ງກີດຂວາງທາງໂຄງສ້າງໃຫ້ແກ່ການສ້າງຄວາມເຂັ້ມແຂງຂອງຜູ້ອອກແຮງງານ.** ຄວາມສາມາດຂອງແຮງງານເຄື່ອນຍ້າຍໃນຂະແໜງການປະມົງ ແລະ ປຸງແຕ່ງອາຫານທະເລ ເພື່ອເຂົ້າຮ່ວມສະຫະພັນເພື່ອຕໍ່ລອງຄ່າແຮງງານ ແລະ ເງື່ອນໄຂການເຮັດວຽກທີ່ດີຂຶ້ນກວ່າເກົ່າຍັງມີຂໍ້ຈຳກັດຈຳນວນຫລາຍ. ຢູ່ປະເທດໄທ, ແຮງງານເຄື່ອນຍ້າຍບໍ່ສາມາດສ້າງຕັ້ງ ຫຼື ນຳພາສະຫະພັນຂອງຕົນເອງໄດ້, ຊຶ່ງໃນພາກປະຕິບັດຕົວຈິງແລ້ວເຂົາເຈົ້າມີໂອກາດໃນການຈັດຕັ້ງໜ້ອຍທີ່ສຸດ. ນອກຈາກນັ້ນ, ແຮງງານເຄື່ອນຍ້າຍຍັງປະເຊີນກັບການຂົ່ມຂູ່ ແລະ ກີດກັ້ນຈາກນາຍຈ້າງຈຳນວນຫນຶ່ງ, ເຊັ່ນດຽວກັນກັບຄວາມພະຍາຍາມຈັດຕັ້ງຮ່ວມກັນໃນການສ້າງຕັ້ງ "ຄະນະກຳມະການສະຫວັດດີການແຮງງານ" ທີ່ບໍ່ສາມາດຕໍ່ລອງລວມກັນໄດ້. ເພື່ອເພີ່ມທະວີການປະຕິບັດສິດທິພື້ນຖານຂອງສິດເສລີພາບໃນການສ້າງສະມາຄົມ ແລະ ການຕໍ່ລອງລວມໝູ່ໃຫ້ປະກົດຜົນເປັນຈິງ, ທຸກຂໍ້ຈຳກັດທາງກົດ  ໝາຍ ແລະ ພາກປະຕິບັດຕົວຈິງຕໍ່ການຈຳກັດສິດຂອງແຮງງານເຄື່ອນຍ້າຍ ໃນການຈັດຕັ້ງຄວນຖືກຍົກເລີກ ແລະ ການລະເມີດສິດດັ່ງກ່າວຄວນຖືກຫ້າມຢ່າງເຂັ້ມງວດ.

- **ປ້ອງກັນ ແລະ ແກ້ໄຂການລັກລອບຄ່າຈ້າງຂອງແຮງງານເຄື່ອນຍ້າຍ, ໂດຍສະເພາະໃນໄລຍະການຕອບໂຕ້ ແລະ ຟື້ນຟູຈາກພະຍາດໂຄວິດ 19**. ການລະເມີດສິດທິແຮງງານໃນຮູບແບບການຈ່າຍຄ່າແຮງງານຂັ້ນຕໍ່າ ຕໍ່າກວ່າກົດຫມາຍກຳນົດ,ການຫັກຄ່າແຮງງານບໍ່ຖືກຕ້ອງຕາມກົດຫມາຍ, ເລື່ອນເວລາການຈ່າຍຄ່າແຮງງານ ແລະ ບໍ່ຈ່າຍຄ່າແຮງງານເມື່ອຖືກຍົກເລີກສັນຍາໄດ້ແຜ່ຂະຫຍາຍໄປຢ່າງກວ້າງ ຂວາງໃນບັນດາແຮງງານເຄື່ອນຍ້າຍໃນໄລຍະການລະບາດຂອງພະຍາດໂຄວິດ 19 ແລະ ຕ້ອງການຄວາມເອົາໃຈໃສ່ເປັນພິເສດ. ກອບກົດໝາຍໃນການປົກປ້ອງຄ່າແຮງງານຕ້ອງໄດ້ຮັບການປັບປຸງ ເພື່ອຮັບປະກັນໃຫ້ມີມາດຕະການປ້ອງກັນ ແລະ ບັງຄັບໃຊ້ທີ່ເຂັ້ມແຂງກວ່າເກົ່າ. ນອກຈາກນັ້ນ, ການເຂົ້າເຖິງການແກ້ໄຂການລ່ວງລະເມີດຄ່າແຮງງານຄວນມີຫລາຍຂຶ້ນໃນຮູບແບບການຊຳລະຄ່າແຮງງານທີ່ຄົງຄ້າງຄືນໃຫ້ແຮງງານ ແລະ ການຊົດເຊີຍທາງການເງິນຕໍ່ກັບການລ່ວງລະເມີດ.

- **ຂໍ້ລິເລີ່ມຂອງສະມາຄົມອຸດສາຫະກຳ ແລະ ການປະຕິບັດຕາມລະບຽບການຂອງພາກເອກະ ຊົນ ຄວນພັດທະນາ ແລະ ປະຕິບັດນະໂຍບາຍການຕອບໂຕ້ ແລະ ການຟື້ນຟູຈາກພະຍາດໂຄວິດ19 ຢ່າງຫ້າວຫັນຕໍ່ກຳລັງແຮງງານຂອງພວກເຂົາ.** ເຖິງແມ່ນວ່າຈະມີການລົງທືນໃສ່ຄວາມຮັບ ຜິດຊອບທາງສັງຄົມຂອງບໍລິສັດແບບສະໝັກໃຈ ແລະ ມີໂຄງການຮັບປະກັນຄວາມຍືນຍົງທີ່ນຳພາໂດຍອຸດສາຫະກຳກໍຕາມ, ຂໍ້ລິເລີ່ມເຫຼົ່ານີ້ສ່ວນໃຫຍ່ບໍ່ມີຄວາມຫ້າວຫັນຕໍ່ນະໂຍບາຍຕອບໂຕ້ແລະ ຟື້ນຟູຈາກພະຍາດໂຄວິດ 19 ໃຫ້ແກ່ແຮງງານ. ການຕອບໂຕ້ກັບພະຍາດໂຄວິດ 19 ສ່ວນຫຼາຍແມ່ນຖືກປະໃຫ້ເປັນການຕັດ ສິນໃຈຂອງບໍລິສັດ, ເຊິ່ງຍັງມີລັກສະນະກະແຈກກະຈາຍ, ມີປະຕິກິລິຍາຕອບໂຕ້ກັບການລະບາດຂອງກຳລັງແຮງງານຂອງພວກເຂົາ, ແລະ ຂາດນະໂຍບາຍທີ່ຈະແຈ້ງຕໍ່ກັບບັນຫາສຳຄັນຕ່າງໆ ລວມທັງຄ່າຈ້າງໃນລະຫວ່າງ ການຢຸດພັກວຽກ, ການກວດພະຍາດໂຄວິດ 19 ແລະ ການສັກຢາວັກຊີນການປິ່ນປົວ ແລະ ການກັກກັນ, ການຂໍອະນຸຍາດລາພັກເຈັບເປັນ ແລະ ວັນພັກປະເພດອື່ນໆ, ແລະ ການສະຫນັບສະຫນູນການເຂົ້າເຖິງປະກັນສັງຄົມໃຫ້ແກ່ແຮງງານທີ່ມີສິດໄດ້ຮັບ.

- **ຊື້ຂະຫຍາຍລະບົບການໃຫ້ລາງວັນກັບຜູ້ສະຫນອງທີ່ຮັກສາມາດຕະຖານແຮງງານໂດຍຜ່ານ ຍຸດທະສາດການສັນຫາການຈັດຊື້ທີ່ມຸ້ງໝັ້ນ.** ຜູ້ຊື້ຄວນລະດົມຂົນຂວາຍໃຫ້ມີການປ່ຽນແປງທາງກົດຫມາຍ ແລະ ນະໂຍບາຍຢ່າງເຂັ້ມແຂງ ແລະ ຊັດເຈນ ເພື່ອສົ່ງເສີມການເຮັດວຽກທີ່ມີຄ່າ ແລະ ເປັນທຳ, ລວມທັງການລວມເອົາແຮງງານເຄື່ອນຍ້າຍເຂົ້າໃນນະໂຍບາຍການຕອບໂຕ້ ແລະ ການຟື້ນຟູຈາກພະຍາດໂຄວິດ 19. ຜູ້ຊື້ສາມາດຂະຫຍາຍລະບົບສ້າງແຮງຈູງໃຈ ເພື່ອສັນຫາຜູ້ສະຫນອງເພີ່ມ ເຕີມ ແລະ ສົ່ງເສີມການມີສ່ວນຮ່ວມຢ່າງແທ້ຈິງໃນຂໍ້ລິເລີ່ມການປະຕິບັດຕາມລະບຽບການຕາມຄວາມສະຫມັກໃຈ. ຜູ້ຊື້ຄວນໃຫ້ຄຳຫມັ້ນສັນຍາກັບສາຍສຳພັນ ໃນການສັນຫາການຈັດຊື້ເປັນເວລາຫລາຍ ປີໂດຍອີງໃສ່ຄວາມຄືບຫນ້າທີ່ສາມາດວັດແທກໄດ້ໃນການປັບປຸງມາດຕະ ຖານແຮງງານ. ຜູ້ຊື້ຍັງສາມາດພັດທະນາສາຍພົວພັນໃນການສັນຫາຈັດຊື້ເປັນພິເສດກັບບັນດາ ປະ ເທດທີ່ປະຕິຮູບກົດຫມາຍແຮງງານໃຫ້ສອດຄ່ອງກັບມາດຕະຖານແຮງງານສາກົນ ແລະ ບັງຄັບໃຊ້ຢ່າງມີປະສິດທິຜົນ.

- **ຄົ້ນຄວ້າ ແລະ ຕິດຕາມການປ່ຽນແປງທີ່ເກີດຈາກການແຜ່ລະບາດຂອງພະຍາດຢ່າງຕໍ່ເນື່ອງໃນຮູບແບບການຄ້າທົ່ວໂລກສຳລັບອາຫານ ແລະ ຜົນກະທົບຕໍ່ອຸດສາຫະກຳ ແລະ ແຮງງານ.** ໃນຂະນະທີ່ມີການແຜ່ລະບາດ ຂອງ ຢ່າງຕໍ່ເນື່ອງໃນ ປີ 2021, ໂດຍ ສະເພາະໃນອາຊີຕາເວັນອອກສຽງໃຕ້ກໍໄດ້ຮັບຜົນກະທົບຈາກການລະບາດນີ້ ແລະ ເປັນບ່ອນທີ່ມີອັດຕາການສັກຢາວັກຊີນຕ່ຳ ແລະ ໄດ້ເຮັດໃຫ້ການຟື້ນຕົວຂອງເສດຖະກິດ ແລະ ເສລີພາບໃນການເຄື່ອນໄຫວມີຄວາມຫລ້າຊ້າ, ໂດຍສະເພາະແມ່ນແຮງງານເຄື່ອນຍ້າຍ, ຍັງສືບຕໍ່ຖືກຈຳກັດ. ສິ່ງເຫລົ່ານີ້ມີຄວາມຫມາຍຄວາມສຳຄັນຕໍ່ອະນາຄົດຂອງອຸດສາຫະກຳອາຫານທະເລ ແລະ ຕ້ອງໄດ້ເບິ່ງກັນຕໍ່ໄປ. ອະນາຄົດຂອງແຮງງານມີຄວາມສຳຄັນຕໍ່ກັບລະບົບຕ່ອງໂສ້ການສະໜອງ, ນັບແຕ່ການປະມົງຈົນເຖິງການປຸງແຕ່ງອາຫານທະເລ, ຍັງບໍ່ມີຄວາມແນ່ນອນ.

## ເອກະສານອ້າງອີງ

ADBI, OECD and ILO (Asian Development Bank Institute, Organisation for Economic Cooperation and Development, and ILO). 2021. *Labor Migration in Asia: Impacts of the COVID-19 Crisis and the Post-Pandemic Future*.
*AFP* (*Agence France-Presse*). 2020. "Thai PM Blames Migrant Workers for Market Coronavirus Outbreak", 21 December.
Andreeva, Dana. 2021. "The Shadow Pandemic of Migration in Cambodia." *Jurist*, 24 February.
APIL. (Advocates for Public Interest Law). 2020. "한국 어업이주노동자 인권실태", available at: https://apil.or.kr/?page_id=14638&lang=kr.
ASEAN (Association of Southeast Asian Nations). 2021. "The 14th ASEAN Forum on Migrant Labour (AFML): 'Recovery and Labour Migration in the Post-Pandemic Future in ASEAN' – Recommendations".
Aspinwall, Nick. 2021. "Taiwan Ordered to Address Forced Labor on Its Fishing Vessels." *The Diplomat*, 18 May.
*Associated Press*. 2021. "Bangkok, 9 Provinces Restrict Movements to Curb Rising Cases." 27 June.
*Bangkok Post*. 2021. "Factory Staff to Be Monitored." 5 February.
Benton, Meghan, Jeanne Batalova, Samuel Davidoff-Gore, and Timo Schmidt. 2021. *COVID-19 and the State of Global Mobility in 2020.* IOM.

Blank, Christine. 2019. "Fetching Fish: Seafood Suppliers Benefit from High-Protein Pet Food Demand." *Seafood Source*, 31 December.
Blomberg, Matt. 2020a. "Closed Borders Give Rise to New Wave of Trafficking in Cambodia." *Reuters*, 28 May.
———. 2020b. "Thailand Allows Thousands of Migrants to Extend Work Permits." *Reuters*, 13 November.
———. 2021. "'Tigers or Crocodiles': Grim Prospects for Cambodian Migrants at Home and in Thailand." *Reuters*, 26 February.

Buelva, Alma. 2021. "Pet Food Sales Boost Thai Union's Latest Bottom Line." *Pet Food Industry*, 4 January.
Carvalho, Raquel. 2020. "Slow Boat to Nowhere: Coronavirus Leaves Exploited Fishing Crew Members Stuck on the High Seas." *South China Morning Post*, 10 October.
Chase, Chris. 2021. "Investigation Alleges Worker Abuse on South Korean Fishing Vessels Exporting to US, EU." *SeafoodSource*, 3 February.

Chew, Amy. 2020. "Coronavirus: Indonesian Migrant Workers Urged Not to Return Home." *South China Morning Post*, 31 March.
Chia-nan, Lin. 2020. "Advocates Urge Action on FOC Boats." *Taipei Times*, 3 June.
Chiang, Mina, and Kimberly Rogovin. 2020. "Labor Abuse in Taiwan's Seafood Industry & Local Advocacy for Reform", Global Labor Justice-International Labor Rights Forum Briefing Paper.
Choon, Chang May. 2021. "South Korea Orders Its Foreign Workers to Be Tested for COVID-19." *The Straits Times*, 8 March.
Clavelle, Tyler. 2021. "COVID-19 Brings Unmatched Downturn in Global Fishing Activity". *Global Fishing Watch Blog*, 11 March.
Coro, Alfredo. 2020. *Vignettes of Equity: A Glimpse into COVID-19 in Southeast Asia*. The Equity Initiative.
Coyne, Matt. 2021. "ITF Pleased with Maersk's Handling of Crew-Change Crisis." *TradeWinds*, 23 March.
Dechsupa, Sinsuda, Suvichada Assawakosri, Suphattra Phakham, and Sittisak Honsawek. 2020. "Positive Impact of Lockdown on COVID-19 Outbreak in Thailand." *Travel Medicine and Infectious Disease* 36: 101802.
Dong, Ensheng, Hongru Du, and Lauren Gardner. 2020. "An Interactive Web-Based Dashboard to Track COVID-19 in Real Time." *The Lancet Infectious Diseases* 20 (5):533–534.

EJF (Environmental Justice Foundation). 2020. "Illegal Fishing and Human Rights Abuses in the Korean Fishing Fleet", EJF Briefing.

FAO (Food and Agriculture Organization). 2020. *The State of World Fisheries and Aquaculture 2020*.
———. 2021. "The Impact of COVID-19 on Fisheries and Aquaculture Food Systems: Possible Responses", FAO Information Paper.

———. n.d. “Asia-Pacific Fishery Commission (APFIC)”, available at: http://www.fao.org/asiapacific/apfic/en/.

Fresh News. 2020. “ថៃប្រកាសបិទច្រកទ្វារអន្តរជាតិទាំងអស់ជាប់កម្ពុជាដើម្បីទប់នឹងការរីករាលដាល COVID-19 ឡានដ ទិញទំនិញចូលជាធម្មតាក្រោមលក្ខខណ្ឌរឹតបន្តឹង” 22 March.

GGR Asia. 2021. “Cambodia Borders Shut for Outbound Travel: Reports.” 18 March.

Gibson, Jenna. 2020. “Korean Media Report Sparks Outcry over Abuse of Indonesian Crew Members on Chinese Fishing Ships.” The Diplomat, 14 May.

Global Fishing Watch. n.d. “Downloadable Data – Ocean Activity”, available at: https://globalfishingwatch.org/datasets-and-code/.

Godfrey, Mark. 2020. “Greenpeace, EJF Urge Western Buyers to Pressure Taiwan to Tighten Its Fishing Regulations.” SeafoodSource, 17 December.

Gokkon, Basten. 2020. “More Indonesian Sailors Repatriated from Deadly Chinese Fishing Fleet.” Mongabay, 16 November.

Gokkon, Basten, and Philip Jacobson. 2020. “Deaths of 2 More Indonesian Crew Uncovered on Board Chinese Tuna Fleet.” Mongabay, 29 October.

HRWG (Human Rights Working Group). 2020. Repression and Resilience: COVID-19 Response Measures and Migrant Workers’ Rights in Major East and Southeast Asian Destinations.

Hunter, Murray. 2020. “Thailand’s Porous Borders Spark Fear of a New Covid Wave.” Asia Sentinel, 8 December.

IHS Markit. 2020. “Canned Tuna Market Revival in the Context of Global Crisis?”. IHS Markit Agribusiness Research and Analysis Blog, 2 September.

ILO. 2017. Decent Work for Migrant Fishers, TMIMF/2017.

———. 2019. Less Is More: How Policy and Technology Can Impact the Thai Labour Market for Work in Fishing.

———. 2020a. “COVID-19 Employment and Labour Market Impact in Thailand”, ILO Brief.

———. 2020b. “COVID-19: Impact on Migrant Workers and Country Response in Thailand”, ILO Briefing Note.

———. 2020c. “Experiences of ASEAN Migrant Workers during COVID-19: Rights at Work, Migration and Quarantine during the Pandemic, and Re-Migration Plans”, ILO Brief.

———. 2020d. “COVID-19: Impact on Migrant Workers and Country Response in Myanmar”, ILO Issue Brief.

———. 2020e. Endline Research Findings on Fishers and Seafood Workers in Thailand.

———. 2020f. “A Policy Framework for Tackling the Economic and Social Impact of the COVID-19 Crisis”, ILO Policy Brief.

———. 2021a. “Press Release on Ship to Shore Rights South East Asia Programme Provides Humanitarian Relief to Migrant Workers in Response to COVID-19 Outbreak in Samut Sakhon”, 4 January 2021.

———. 2021b. ILO Global Estimates on International Migrant Workers: Results and Methodology.

International Chamber of Shipping. 2021. “Seafarer Workforce Report 2021 – Video”. Available at: https://www.ics-shipping.org/publication/seafarer-workforce-report-2021/.

IOM (International Organization for Migration). 2020a. “Press Release on IOM Donates PPE, Hygiene Kits and Handwashing Stations to Shelters Hosting Returning Migrant Workers in Indonesia”.

———. 2020b. “Migrant Workers Stream Home as Thailand’s Economy Goes into COVID-19 Lockdown”, 27 March., available at: https://www.iom.int/news/migrant-workers-stream-home-thailands-economy-goes-covid-19-lockdown.

———. 2020c. Rapid Assessment Round 3: COVID-19 Related Vulnerabilities and Perceptions of Non-Thai Populations in Thailand.

———. 2020d. “Returns and Arrivals of International Migrants at Land and Sea Borders in Thailand Between 20 March and 3 April 2020”, IOM Infographic.

———. 2020e. Rapid Assessment: COVID-19 Related Vulnerabilities and Perceptions of Non-Thai Populations in Thailand.

Jin, Myeong-seon. 2020. “S. Korea Promises to Address Human Rights Violations against Migrant Fishers.” Hankyoreh, 10 June.

Khoa, Dang. 2021. “South Korea Allows Vietnamese Workers to Overstay Visa until 2022.” VnExpress International, 24 February.

Kim, Tong-Hyung. 2021. “Envoy Protests Mandated Virus Tests for Foreigners in Seoul.” ABC News, 18 March.

Kroodsma, David A., Juan Mayorga, Timothy Hochberg, Nathan A. Miller, Kristina Boerder, Francesco Ferretti, Alex Wilson, Bjorn Bergman, Timothy D. White, Barbara A. Block, Paul Woods, Brian Sullivan, Christopher Costello, and Boris Worm. 2018. “Tracking the Global Footprint of Fisheries.” Science 359 (6378): 904–908.

Love, David C., Edward H. Allison, Frank Ashce, Ben Belton, Richard S. Cottrell, Halley E. Forehlich, Jessica A. Gephart, Christina C. Hicks, David C. Little, Elizabeth M. Nussbaumer, Patricia Pinto da Silva, Florence Poulin, Angel Rubio, Joshua S. Stoll, Michael F. Tlusty, Andrew L. Thorne-Lyman, Max Troell, and Wenbo Zhang. 2021. “Emerging COVID-19 Impacts, Responses, and Lessons for Building Resilience in the Seafood System.” Global Food Security 28: 100494.

Marschke, Melissa, Peter Vandergeest, Elizabeth Havice, Alin Kadfak, Peter Duker, Ilinca Isopescu, and Mallory MacDonnell. 2020. “COVID-19, Instability and Migrant Fish Workers in Asia.” Maritime Studies 20 (1): 87–99.

McBain, Darian. 2020. “Opinion: Letting Migrants Take the Fall for COVID-19 Is Bad Business”. Thai Union Cares Blog, 2 October.

McDonald, Tim. 2020. “Covid: The 400,000 Seafarers Who Can’t Go Home.” BBC News, 30 October.

Migrant Working Group. 2021. Report on the Situation of Migrant Workers Amidst the Pandemic and COVID-19 Restriction Measures Focusing on Samut Sakhon from 19 December 2020 – 31 March 2021.

The Momentum. 2021. “วิกฤต ‘โควิด’ เสี่ยงทำแรงงานข้ามชาติหลุดจากระบบ 1.5 ล้านคน.” 8 January.

Northam, Jackie. 2021. “‘Sea Prison’: COVID-19 Has Left Hundreds of Thousands of Seafarers Stranded.” NPR, 29 January.
Ocampo, Karl R. 2020. “Fishing Communities Bear Brunt of Lockdown.” Inquirer.net, 15 April.

Ock, Hyun-ju. 2020a. “‘Coronavirus Does Not Exclude Foreigners.’” The Korea Herald, 10 May.

———. 2020b. “No Jobs, No Flights Home: Migrant Workers Stranded in S. Korea.” The Korea Herald, 29 September.

———. 2021. “Extend Work Permits for Stranded Migrants, Advocates Say.” The Korea Herald, 8 February.

Our World in Data. 2021. “International Travel Controls during the COVID-19 Pandemic”, available at: https://ourworldindata.org/grapher/international-travel-covid.

Peter, Zsombor. 2020. “Thailand’s Prime Minister Orders Crackdown on Officials Abetting Human Traffickers.” Voice of America, 29 December.

Prachachat. 2021. “โควิด ‘สมุทรสาคร’ จบไม่ลง ยืดไทม์ไลน์ 2 เดือนคุม 4 โรงงานเสี่ยง.” 6 February.

Promchertchoo, Pichayada. 2020. “Migrant Workers Left Out in Thailand’s Fight against COVID-19.” Channel News Asia, 19 April.

Putri, Ratu Ayu Asih Kusuma. 2020. “The Factors behind the Disturbing ‘Burial at Sea’ of Indonesian Migrant Fishers.” The Diplomat, 11 May.

Reuters. 2020. “Thai PM Blames Virus Surge on Illegal Migration, Hints at New Curbs.” 22 December.

RFA (Radio Free Asia). 2020. “COVID Closures, Embassy Intervention Strands Hundreds of Lao Fishermen in Malaysia.” 8 December

Rogovin, Kimberly. 2020a. “COVID-19 Impact on Migrant Workers in Thailand.” International Labor Rights Forum News Blog, 27 March.

———. 2020b. Time for a Sea Change: Why Union Rights for Migrant Workers Are Needed to Prevent Forced Labor in the Thai Seafood Industry. ILRF.

———. 2021. “Grant Union Rights to Migrant Workers.” Bangkok Post, 11 March.

Santos, Ana. 2020. “Philippine Fishermen Stranded at Sea by Pandemic: ‘We Think About Jumping Overboard’.” Los Angeles Times, 8 September.

Seafood Task Force. 2021. 10 Point Action Plan 2021.

Siamhan, Papop, and Rapatsa Trirath. 2020. Impacts of the COVID-19 Pandemic on Small-Scale Producers and Workers: Perspectives from Thailand’s Seafood Supply Chain. Oxfam.

Sriring, Orathai, and Athit Perawongmetha. 2020. “Thailand to Test Thousands after Shrimp Market COVID Outbreak.” Reuters, 20 December.

Statistics Korea. 2021. “Preliminary Results of the Fishery Production Survey in 2020”, Factsheet.

Sumarsono, Nono. 2020. “COVID-19 and the Fishing Industry”. Plan International USA Blog, 4 May.

Sutton, Trevor, and Avery Siciliano. 2018. “Making Reform a Priority for Taiwan’s Fishing Fleet”. Center for American Progress Foreign Policy and Security Blog, 8 January.

Syrena, Lin. 2020. “The Migrant Fisherman Union on the Frontlines against COVID-19 and Bosses.” The News Lens, 24 June.

Taylor, Maya. 2021. “Food Factory Converted into 3-Zone Quarantine Facility in Samut Sakhon.” Thaiger, 14 January.

Thai PBS News. 2021. “พัทยาฟูด’ สั่งดำเนินมาตรการเข้มข้น หลังพบ พนงติดเชื้อ COVID-19.” 6 January.

Thai Union. 2021a. “Press Release on Thai Union Provides Humanitarian Assistance to communities Impacted by COVID-19 Outbreak in Samut Sakhon”, 5 January 2021.

———. 2021b. “Press Release on Thai Union Implements COVID-19 Tests for All Its Employees in Samut Sakhon: Factories Remain Open and Operational at Capacity”, 6 January 2021.

Thongtub, Eakkapop. 2020. “Navy Assures Phuket Fishing Fleet Clear of COVID-19.” The Phuket News, 17 April.

Tyler, Jordan. 2021. “Positives ‘More Than Outweigh’ the Negative Impacts of COVID-19 in Pet Care.” Pet Food Processing, 27 January.

UNICEF (United Nations Children’s Fund), UN Women, and CARE International. 2020. Rapid Gender Analysis during COVID-19 Pandemic: Mekong Sub-Regional Report.

Unite, Betheena. 2020. “PCG Strictly Screens Fishermen before, after Fishing to Counter COVID-19.” Manila Bulletin, 24 March.

United Nations Global Compact, Office of the High Commissioner for Human Rights, ILO, and International Maritime Association. 2021. Maritime Human Rights Risks and the COVID-19 Crew Change Crisis.

United Nations Network on Migration. 2021. “Impact of COVID-19 on Migrants in Thailand”, United Nations Network on Migration Situation Report, August.

United Nations Thematic Working Group on Migration in Thailand. 2019. Thailand Migration Report 2019.

University of Oxford, Blavatnik School of Government. n.d. "Oxford COVID-19 Government Response Tracker", available at: https://www.bsg.ox.ac.uk/research/research-projects/covid-19-government-response-tracker.

White, Cliff. 2020. "Study Provides First Comprehensive Look at COVID's Impact on US Seafood Industry." SeafoodSource, 4 November.

Wijaya, Callistasia, and Rebecca Henschke. 2020. "The Indonesian Fishermen Whose Bodies Were Thrown Overboard. BBC News, 11 June.

Wongsamuth, Nanchanok. 2020. "Thailand Offers Work Permits to Undocumented Migrants to Curb Virus." The Japan Times, 30 December.

———. 2021a. "Migrant Workers Suffer as Coronavirus Cases Surge in Thailand." Reuters, 8 January.

———. 2021b. "Big Brands, Small Firms Offer Pandemic Aid to Thailand's Migrant Workers." Reuters, 14 January.

———. 2021c. "Human Trafficking Cases in Thailand Hit Decade Low Due to COVID-19." Reuters, 21 January.

———. 2021d. "Canned Tuna Brands Making 'Glacial Progress' in Tackling Modern Slavery." Reuters, 23 March.

World Bank. n.d. "Migration and Remittances Data", available at: https://www.worldbank.org/en/topic/migrationremittancesdiasporaissues/brief/migration-remittances-data.

WHO (World Health Organization).

2020. "Promoting Public Health Measures in Response to COVID-19 on Cargo Ships and Fishing Vessels", WHO Interim Guidance, 25 August.

Worldometer. n.d. "Coronavirus: Cambodia", available at: https://www.worldometers.info/coronavirus/country/cambodia/.

Yi, Beh Lih, and Nanchanok Wongsamuth. 2021. "'How Will They Survive?': Myanmar Coup Cuts Lifeline for Migrants' Families." Reuters, 3 March.

Yonhap. 2020. "Korea Seeks to Extend Foreign Workers' Stay Permits to Cope with Seasonal Labor Shortage." 29 July.

———. 2021. "Seoul to Temporarily Ease Rules on Foreign Seasonal Workers." 15 February.

## ບົດກ່າວຂອບໃຈ

ບົດລາຍງານນີ້ໄດ້ຖືກກະກຽມ ແລະ ຂຽນໂດຍ ທ່ານ Jason Judd ແລະທ່ານ J. Lowell Jackson ຈາກໂຄງການ ການສຶນທະນາໃຫມ່ ຢູ່ ມະຫາວິທະຍາໄລຄໍແນວ ຂະແໜງ ອຸດສາຫະກໍາ ແລະ ສາຍພົວພັນແຮງງານ ສໍາລັບໂຄງການສິດທິແຮງງານແຕ່ເຮືອຮອດຝັ່ງ, ອົງການແຮງງານສາກົນ (ILO). ການຮ່າງບົດລາຍງານນີ້ໄດ້ຮັບການສະໜັບສະໜູນຈາກ ທ່ານ Hannah Kim ແລະ ທ່ານ Kyle Beck.

ທ່ານ. ນາງ Mi Zhou, ຫົວໜ້າທີ່ ປຶກສາທາງດ້ານວິຊາການ, ແລະ ທ່ານ Benjamin Harkins, ເຈົ້າໜ້າທີ່ທາງວິຊາການຈາກໂຄງການສິດທິແຮງງານແຕ່ເຮືອຮອດຝັ່ງ ອາຊີຕາເວັນອອກສຽງໃຕ້ ໄດ້ໃຫ້ຂໍ້ມູນດ້ານວິຊາການ, ແລະ ຜູ້ປະສານງານ(ປະເທດ ຫວຽດນາມ) ທ່ານ. ນາງ Nguyen Thi Mai Thuy, (ປະເທດໄທ) ທ່ານ. ນາງ Anyamanee Tabtimsri ແລະ (ປະເທດຟີລິບປິນ) ທ່ານ Hussein Macarambon ໄດ້ທົບທວນ ແລະ ປະກອບຄໍາເຫັນໃສ່ບົດລາຍງານນີ້.

ບົດລາຍງານນີ້ໄດ້ຮັບຄໍາຄິດເຫັນ ແລະ ການປະກອບສ່ວນຈາກເພື່ອນຮ່ວມງານ ອົງການ ILO, ລວມທັງ ທ່ານ Nilim Baruah, ຜູ້ຊ່ຽວຊານດ້ານການເຄື່ອນຍ້າຍປະຈໍາພາກພື້ນອາຊີ ແລະ ປາຊີຟິກ, ທ່ານ Brandt Wagner, ຫົວຫນ້າຫນ່ວຍງານຂະແຫນງການຂົນສົ່ງ ແລະ ການເດີນທະເລ (MARITIME), ທ່ານ Christian Viegelahn, ນັກເສດຖະສາດອາວຸໂສປະຈໍາຂະແໜງວິເຄາະເສດຖະກິດ ແລະ ສັງຄົມປະຈໍາພາກພື້ນ ແລະ ທ່ານ Rebecca Napier Moore, ເຈົ້າໜ້າທີ່ທາງວິຊາການຂອງໂຄງການ ສາມລ່ຽມ (TRIANGLE) ໃນອາຊຽນ.

ທ່ານ. John Maloy ໄດ້ດັດແກ້ຂໍ້ຄວາມ ແລະ ທ່ານ Napisa Leelasupapong ໄດ້ອອກແບບບົດລາຍງານສຸດທ້າຍ. ການສຶກສາຄົ້ນຄວ້າ ແລະ ໂຄງການດັ່ງກ່າວໄດ້ຮັບການສະຫນັບສະຫນູນ ແລະທຶນຊ່ວຍເຫລືອຈາກສະຫະພາບເອີຣົບ (EU). ເນື້ອໃນຂອງເອກະສານສະບັບນີ້ແມ່ນຄວາມຮັບຜິດຊອບຂອງ ອົງການ ILO ແຕ່ຝ່າຍດຽວ ແລະ ບໍ່ໄດ້ສະທ້ອນເຖິງຄວາມຄິດເຫັນຂອງ EU.

Funded by the
European Union

ເອກະສານນີ້ໄດ້ສ້າງຂຶ້ນໂດຍການຊ່ວຍເຫຼືອທາງດ້ານການເງິນຂອງສະຫະພາບເອີຣົບ. ທັດສະນະທີ່ສະແດງອອກຢູ່ທີ່ນີ້ບໍ່ໄດ້ສະທ້ອນເຖິງແນວຄວາມຄິດເຫັນຢ່າງເປັນທາງການຂອງສະຫະພາບເອີຣົບ.

ລາຍລະອຽດໃນການຕິດຕໍ່ພົວພັນ

ຫ້ອງການ  ອົງການແຮງງານສາກົນ
ປະຈໍາພາກພື້ນອາຊີ ແລະ ປາຊີຟິກ
ອາຄານ ສປຊ ຖະໜົນ ລາດສະດໍາເນີນນົກ
ບາງກອກ 10200, ໄທ

T: +66 2288 1234
F: +66 2280 1735
E: BANGKOK@ilo.org
W: www.ilo.org/asiapacific

© International Labour Organization 2022